ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ມະຫາຊົນ

ເອກະສານລາຍງານການເງິນສຳລັບຈຸດປະສົງພິເສດ

ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2020

EY
Building a better working world

ບໍລິສັດ ລາວ ອາຊຽນ ເຊົ່າສົນເຊື່ອ ມະຫາຊົນ

ສາລະບານ

	ໜ້າ
ຂໍ້ມູນທົ່ວໄປ	1
ບົດລາຍງານຂອງຄະນະບໍລິຫານ	2
ບົດລາຍງານຂອງນັກກວດສອບອິດສະຫຼະ	3 - 6
ໃບລາຍງານຜົນການດຳເນີນງານ ແລະ ໃບລາຍງານຜົນການດຳເນີນງານນອກການທຸລະກິດ	7
ໃບລາຍງານຖານະການເງິນ	8 - 9
ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ	10
ໃບລາຍງານກະແສເງິນສົດ	11 - 12
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ	13 - 53

ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ມະຫາຊົນ

ຂໍ້ມູນທົ່ວໄປ

ບໍລິສັດ

ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ("ບໍລິສັດ") ກ່ອນໜ້ານີ້ແມ່ນ ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ຈຳກັດ, ເປັນບໍລິສັດ ມະຫາຊົນທີ່ດຳເນີນທຸລະກິດໃນ ສປປ ລາວ ອີງຕາມໃບທະບຽນວິສາຫະກິດ ເລກທີ 081/ກທຄວ ອອກໂດຍ ກົມທະບຽນ ແລະ ຄຸ້ມຄອງ ວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ, ລົງວັນທີ 5 ກຸມພາ 2015 ແລະ ໃບທະບຽນວິສາຫະກິດສະບັບປັບປຸງລ່າສຸດ ເລກທີ 0222/ກທຄວ, ລົງວັນທີ 19 ກຸມພາ 2019. ບໍລິສັດໄດ້ຮັບອະນຸຍາດຈາກ ທະນາຄານແຫ່ງ ສປປ ລາວ (ທຫລ) ລົງວັນທີ 2 ກຸມພາ 2015 ແລະ ສະບັບປັບປຸງລ່າສຸດ ວັນທີ 14 ກັນຍາ 2017 ໃນການດຳເນີນກິດຈະກຳໃຫ້ເຊົ່າສິນເຊື່ອ.

ກິດຈະກຳຫຼັກຂອງບໍລິສັດ ແມ່ນການບໍລິການໃຫ້ເຊົ່າຊື້ໂດຍການສະໜອງສິນເຊື່ອເຊົ່າຊື້ສຳລັບລູກຄ້າສ່ວນບຸກຄົນ ແລະ ບໍລິສັດຕ່າງໆເພື່ອຊື້ລົດຈັກ ແລະ ລົດໃຫຍ່.

ທຶນຈົດທະບຽນທີ່ຖອກແລ້ວ

ທຶນຈົດທະບຽນທີ່ຖອກແລ້ວຂອງບໍລິສັດ ນະວັນທີ 31 ທັນວາ 2020 ແມ່ນ 30,150,000,000 ກີບ.

ທີ່ຕັ້ງ

ສຳນັກງານໃຫຍ່ຂອງບໍລິສັດຕັ້ງຢູ່ ຊັ້ນ 2, ອາຄານ NNN, ບ້ານ ໂພນສີນວນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ.

ສະພາອຳນວຍການ

ສະມາຊິກຂອງສະພາອຳນວຍການ ນະວັນທີປິດລາຍງານສະບັບນີ້ມີດັ່ງນີ້:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ*
ທ່ານ ນາງ Yuki Scott	ປະທານ	ແຕ່ງຕັ້ງວັນທີ 19 ທັນວາ 2019
ທ່ານ ນາງ Makiko Oikawa	ຮອງປະທານ	ແຕ່ງຕັ້ງວັນທີ 19 ທັນວາ 2019
ທ່ານ Tomofumi Suematsu	ສະມາຊິກ	ແຕ່ງຕັ້ງວັນທີ 19 ທັນວາ 2019
ທ່ານ. Tomohiro Yoshida	ສະມາຊິກ	ແຕ່ງຕັ້ງວັນທີ 19 ທັນວາ 2019
ທ່ານ ນາງ Harumi Ide	ສະມາຊິກ	ແຕ່ງຕັ້ງວັນທີ 19 ທັນວາ 2019

ຕົວແທນທາງດ້ານກົດໝາຍ

ຕົວແທນທາງດ້ານກົດໝາຍຂອງບໍລິສັດ ນະວັນທີປິດລາຍງານສະບັບນີ້ມີດັ່ງລຸ່ມນີ້:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ*
ທ່ານ ນາງ Risa Yamaguchi	ຜູ້ອຳນວຍການໃຫຍ່	ແຕ່ງຕັ້ງວັນທີ 9 ມັງກອນ 2020

ນັກກວດສອບບັນຊີ

ນັກກວດສອບບັນຊີຂອງບໍລິສັດແມ່ນ ບໍລິສັດ ເອີນແອນຢັ ງ ລາວ ຈຳກັດ.

ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ມະຫາຊົນ

ບົດລາຍງານຂອງຄະນະບໍລິຫານ

ຄະນະບໍລິຫານຂອງ ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ("ບໍລິສັດ") ມີຄວາມຍິນດີນຳສະເໜີບົດລາຍງານຂອງຕົນເອງ ແລະ ເອກະສານລາຍງານການເງິນຂອງບໍລິສັດ ນະວັນທີ ແລະ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2020.

ຄວາມຮັບຜິດຊອບຂອງຄະນະບໍລິຫານຕໍ່ເອກະສານລາຍງານການເງິນ

ຄະນະບໍລິຫານຂອງບໍລິສັດມີໜ້າທີ່ຮັບຜິດຊອບຕໍ່ເອກະສານລາຍງານການເງິນ ທີ່ສະແດງໃຫ້ເຫັນຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ຄວາມຍຸຕິທຳຂອງຖານະການເງິນຂອງບໍລິສັດ ແລະ ຜົນການດຳເນີນງານ ແລະ ກະແສເງິນສົດພາຍໃນປີ. ໃນການກະກຽມເອກະສານລາຍງານການເງິນ, ຄະນະບໍລິຫານຂອງບໍລິສັດຈະຕ້ອງ:

- ເລືອກເຟັ້ນເອົານະໂຍບາຍການບັນຊີທີ່ເໝາະສົມ ແລະ ນຳໃຊ້ຢ່າງສະໝ່ຳສະເໝີ;
- ພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ຮອບຄອບ;
- ຖະແຫຼງການວ່າ ບັນດາມາດຕະຖານການບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດຕາມມາດຕະຖານ, ສິ່ງທີ່ໄດ້ປະຕິບັດແຕກຕ່າງຈາກມາດຕະຖານຈະຕ້ອງຖືກເປີດເຜີຍ ແລະ ອະທິບາຍຢູ່ໃນເອກະສານລາຍງານການເງິນ; ແລະ
- ກະກຽມເອກະສານລາຍງານການເງິນບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ ຍົກເວັ້ນໃນກໍລະນີທີ່ຄາດຄະເນວ່າບໍລິສັດຈະບໍ່ສາມາດດຳເນີນທຸລະກິດຕໍ່ໄປໄດ້.

ຄະນະບໍລິຫານຂອງບໍລິສັດມີໜ້າທີ່ຮັບຜິດຊອບເພື່ອຮັບປະກັນວ່າ ບັນດາຂໍ້ມູນທາງການບັນຊີທີ່ຖືກບັນທຶກໄວ້ກ່ຽວກັບຖານະການເງິນຂອງບໍລິສັດ ໄດ້ເປີດເຜີຍຄວາມຖືກຕ້ອງຢູ່ຕະຫຼອດມາ, ເພື່ອຮັບປະກັນວ່າການບັນທຶກການບັນຊີແມ່ນສອດຄ່ອງກັບໂຄງຮ່າງການບັນທຶກບັນຊີທີ່ເໝາະສົມ. ບໍລິສັດຍັງຮັບຜິດຊອບຕໍ່ການຮັກສາຊັບສົມບັດຂອງບໍລິສັດ ແລະ ຮັບປະກັນວ່າບໍລິສັດມີຂັ້ນຕອນປ້ອງກັນ ແລະ ຄົ້ນຫາການສໍ້ໂກງ ແລະ ສິ່ງທີ່ຜິດປົກກະຕິອື່ນໆ.

ຄະນະບໍລິຫານຂອງບໍລິສັດໄດ້ຢັ້ງຢືນວ່າ ບໍລິສັດ ໄດ້ປະຕິບັດຕາມເງື່ອນໄຂຂ້າງເທິງໃນການກະກຽມເອກະສານລາຍງານການເງິນ.

ຖະແຫຼງການຂອງຄະນະບໍລິຫານ

ຄະນະບໍລິຫານຂອງບໍລິສັດມີຄວາມຍິນດີຖະແຫຼງວ່າ ເອກະສານລາຍງານການເງິນ ແມ່ນໄດ້ຖືກກະກຽມຢ່າງຖືກຕ້ອງໂດຍສອດຄ່ອງກັບນະໂຍບາຍບັນຊີທີ່ໄດ້ອະທິບາຍໄວ້ໃນ ບົດອະທິບາຍເລກທີ 5 ຂອງເອກະສານລາຍງານການເງິນ.

ຕາງໜ້າ ແລະ ໃນນາມຄະນະບໍລິຫານ:

ທ່ານ ນາງ. Risa Yamaguchi
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

18 ສິງຫາ 2021

Ernst & Young Lao Co., Ltd
6th floor, Kolao Tower I, 23 Singha Road
Nongbone Village, Saysettha District
Vientiane Capital, Lao P.D.R.

Tel: +856 21 455 077
Fax: +856 21 455 078
ey.com

Building a better working world

ເລກທີອ້າງອີງ: 61235186/22321683

ບົດລາຍງານນັກກວດສອບອິດສະຫຼະ

ຮຽນ: ຜູ້ຖືຮຸ້ນ ຂອງບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ມະຫາຊົນ

ຄຳເຫັນ

ພວກຂ້າພະເຈົ້າ ໄດ້ດຳເນີນການກວດສອບເອກະສານລາຍງານການເງິນສຳລັບຈຸດປະສົງພິເສດຂອງ ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອມະຫາຊົນ ("ບໍລິສັດ"), ເຊິ່ງປະກອບດ້ວຍໃບລາຍງານຖານະການເງິນ ນະວັນທີ 31 ທັນວາ 2020 ແລະ ໃບລາຍງານຜົນການດຳເນີນງານ ແລະ ໃບລາຍງານຜົນການດຳເນີນງານນອກການທຸລະກິດ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ໃບລາຍງານກະແສເງິນສົດ ສຳລັບປີທີ່ສິ້ນສຸດວັນທີດັ່ງກ່າວ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ, ລວມທັງບົດສະຫຼຸບຂອງນັນດານະໂຍບາຍທາງບັນຊີທີ່ສຳຄັນ ("ເອກະສານລາຍງານການເງິນ").

ໃນຄຳເຫັນຂອງພວກຂ້າພະເຈົ້າ, ເອກະສານລາຍງານການເງິນຂອງບໍລິສັດ ນະວັນທີ 31 ທັນວາ 2020 ໄດ້ຖືກກະກຽມຢ່າງຖືກຕ້ອງຕາມຄວາມເປັນຈິງ, ໂດຍສອດຄ່ອງກັບນະໂຍບາຍການບັນຊີທີ່ໄດ້ລະບຸໄວ້ໃນບົດອະທິບາຍເລກທີ 5 ຂອງເອກະສານລາຍງານການເງິນ.

ພື້ນຖານໃນການອອກຄຳເຫັນ

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບໂດຍສອດຄ່ອງກັບ ມາດຕະຖານດ້ານການກວດສອບສາກົນ. ນັນດາຄວາມຮັບຜິດຊອບຂອງພວກຂ້າພະເຈົ້າທີ່ໄດ້ກຳນົດໄວ້ພາຍໃຕ້ນັນດາມາດຕະຖານເຫຼົ່ານັ້ນ ໄດ້ຖືກອະທິບາຍເພີ່ມເຕີມໃນຫົວ "*ຄວາມຮັບຜິດຊອບຂອງນັກກວດສອບຂອງເອກະສານລາຍງານການເງິນ*" ຂອງບົດລາຍງານຂອງພວກຂ້າພະເຈົ້າ. ພວກຂ້າພະເຈົ້າແມ່ນມີຄວາມເອກະລາດຈາກບໍລິສັດ ໂດຍສອດຄ່ອງກັບກົດຈັນຍາບັນວິຊາຊີບບັນຊີຂອງ ສະພາມາດຕະຖານສາກົນດ້ານຈັນຍາບັນ ແລະ ນັນດາຂໍ້ກຳນົດທາງຈັນຍາບັນທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນຂອງພວກຂ້າພະເຈົ້າໃນ ສປປ ລາວ ແລະ ພວກຂ້າພະເຈົ້າຍັງໄດ້ປະຕິບັດນັນດາຄວາມຮັບຜິດຊອບທາງດ້ານຈັນຍາບັນອື່ນໆໂດຍສອດຄ່ອງກັບ ກົດຈັນຍາບັນທາງບັນຊີສຳລັບນັກວິຊາຊີບບັນຊີຂອງ ສະພາມາດຕະຖານສາກົນດ້ານຈັນຍາບັນ. ພວກຂ້າພະເຈົ້າເຊື່ອວ່າ ຫຼັກຖານການກວດສອບທີ່ພວກຂ້າພະເຈົ້າໄດ້ຮັບແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ.

ບັນຫາທີ່ຄວນເອົາໃຈໃສ

ພວກຂ້າພະເຈົ້າໄດ້ເອົາໃຈໃສ່ເຖິງ:

- ບົດອະທິບາຍເລກທີ 17 ຂອງເອກະສານລາຍງານການເງິນທີ່ເປີດເຜີຍສ່ວນຕ່າງຂອງໜີ້ຕ້ອງສິ່ງອາກອນກຳໄລທີ່ຕ້ອງຊຳລະນະວັນທີ 31 ທັນວາ 2020 ລະຫວ່າງມູນຄ່າທີ່ຮັບຮູ້ໃນເອກະສານລາຍງານການເງິນ ແລະ ບົດສະຫຼຸບການກວດກາຂອງເຈົ້າໜ້າທີ່ສ່ວຍສາອາກອນ. ເຊິ່ງອາດສົ່ງຜົນຕໍ່ການໄລ່ລຽງຄືນພັນທະອາກອນ ໂດຍເຈົ້າໜ້າທີ່ສວຍສາອາກອນໃນອະນາຄົດ.

- ບົດອະທິບາຍເລກທີ 4 ການປ່ຽນແປງນະໂຍບາຍທາງການບັນຊີ ແລະ ການເປີດເຜີຍຂໍ້ມູນ. ນັບຕັ້ງແຕ່ວັນທີ 1 ມັງກອນ 2020, ບໍລິສັດໄດ້ປ່ຽນແປງນະໂຍບາຍໃນການຮັບຮູ້ ແລະ ວັດແທກຂອງຄ່າເສື່ອມຂອງເຄື່ອງມືທາງການເງິນ, ແລະ ໄດ້ນຳສະເໜີຜົນກະທົບຈາກການປ່ຽນແປງນະໂຍບາຍການບັນຊີດັ່ງກ່າວໃນເອກະສານລາຍງານການເງິນປີຜ່ານມາໃນບົດອະທິບາຍເລກທີ 31 - ການປັບປຸງເອກະສານລາຍງານການເງິນປີຜ່ານມາ ເນື່ອງຈາກການປ່ຽນແປງນະໂຍບາຍທາງການບັນຊີ.

- ບົດອະທິບາຍເລກທີ 2 ຂອງເອກະສານລາຍງານການເງິນ, ທີ່ໄດ້ອະທິບາຍພື້ນຖານໃນການກະກຽມ, ອີງຕາມການນຳໃຊ້ນະໂຍບາຍທາງການບັນຊີ ແລະ ການເປີດເຜີຍບໍ່ໄດ້ມີຈຸດປະສົງເພື່ອ, ແລະ ບໍ່ໄດ້ເປັນໄປຕາມທຸກຂໍ້ກຳນົດຂອງມາດຕະຖານການລາຍງານການເງິນສາກົນ.

ພວກຂ້າພະເຈົ້າບໍ່ໄດ້ສະແດງຄຳເຫັນແບບມີເງື່ອນຕໍ່ກັບບັນຫາດັ່ງກ່າວນີ້.

A member firm of Ernst & Young Global Limited

Building a better working world

ບັນຫາທີ່ສຳຄັນໃນການກວດສອບ

ບັນຫາທີ່ສຳຄັນໃນການກວດສອບແມ່ນບັນຫາທີ່ເກີດຈາກການໃຊ້ດຸນພິນິດຢ່າງມືອາຊີບຂອງພວກຂ້າພະເຈົ້າ, ເຊິ່ງມີຄວາມສຳຄັນຫຼາຍທີ່ສຸດໃນການກວດສອບເອກະສານລາຍງານການເງິນຂອງປີປະຈຸບັນ. ບັນຫາເຫຼົ່ານີ້ໄດ້ຖືກລະບຸໄວ້ໃນເນື້ອໃນຂອງເອກະສານລາຍງານການເງິນທີ່ກວດສອບໂດຍພວກຂ້າພະເຈົ້າໂດຍລວມ, ແລະ ໃນຮູບແບບຄຳເຫັນຂອງພວກຂ້າພະເຈົ້າ, ແລະ ພວກຂ້າພະເຈົ້າບໍ່ໄດ້ສະໜອງຄຳເຫັນຍ່ອຍກ່ຽວກັບບັນຫາດັ່ງກ່າວ. ສຳລັບບັນຫາລຸ່ມນີ້, ພວກຂ້າພະເຈົ້າໄດ້ໃຫ້ນິຍາມວິທີການຄົ້ນພົບບັນຫາເຊິ່ງຖືກສະໜອງໃນເນື້ອໃນດັ່ງກ່າວ.

ພວກຂ້າພະເຈົ້າໄດ້ປະຕິບັດຕາມຄວາມຮັບຜິດຊອບທີ່ໄດ້ອະທິບາຍໄວ້ໃນວັກຄວາມຮັບຜິດຊອບຂອງນັກກວດສອບໃນການກວດສອບເອກະສານລາຍງານການເງິນໃນບົດລາຍງານຂອງພວກຂ້າພະເຈົ້າ, ລວມທັງບັນຫາທີ່ກ່ຽວຂ້ອງກັບບັນຫາທີ່ເຫຼົ່ານີ້. ດັ່ງນັ້ນ, ການກວດສອບຂອງພວກຂ້າພະເຈົ້າ ລວມທັງການປະຕິບັດບັນດາຂັ້ນຕອນທີ່ອອກແບບມາເພື່ອຕອບສະໜອງຕໍ່ການປະເມີນຄວາມສ່ຽງທີ່ມີສາລະສຳຄັນຂອງເອກະສານລາຍງານການເງິນ. ຜົນຂອງຂັ້ນຕອນການກວດສອບຂອງພວກຂ້າພະເຈົ້າ, ລວມທັງບັນດາຂັ້ນຕອນເພື່ອຊອກຫາບັນຫາດັ່ງລຸ່ມນີ້, ສະໜອງພື້ນຖານໃນການອອກຄຳເຫັນຂອງພວກຂ້າພະເຈົ້າ ຕໍ່ເອກະສານລາຍງານທາງການເງິນ.

ເງິນແຮຄ່າເສື່ອມມູນຄ່າສຳລັບໜີ້ຕ້ອງຮັບສັນຍາເຊົ່າຊື້

ອີງຕາມບົດສະຫຼຸບນະໂຍບາຍບັນຊີທີ່ສຳຄັນໃນບົດອະທິບາຍເລກທີ 5, ການຄາດຄະເນບັນຊີທີ່ສຳຄັນ ແລະ ການຕັ້ງສົມມຸດຖານໃນບົດອະທິບາຍເລກທີ 6, ແລະ ເງິນແຮຄ່າເສື່ອມມູນຄ່າສຳລັບໜີ້ຕ້ອງຮັບສັນຍາເຊົ່າຊື້ ທີ່ເປີດເຜີຍໃນບົດອະທິບາຍເລກທີ 14 ຂອງເອກະສານລາຍງານການເງິນ. ນະວັນທີ 31 ທັນວາ 2020, ບໍລິສັດມີໜີ້ຕ້ອງຮັບສັນຍາເຊົ່າຊື້ມູນຄ່າ 659 ຕື້ກີບ ເຊິ່ງກວມເອົາ 84 ສ່ວນຮ້ອຍຂອງຊັບສິນທັງໝົດ, ບໍລິສັດໄດ້ຮັບຮູ້ເງິນແຮຄ່າເສື່ອມມູນຄ່າຈຳນວນ 42 ຕື້ກີບ ສຳລັບໜີ້ຕ້ອງຮັບສັນຍາເຊົ່າຊື້. ດັ່ງກ່າວນີ້ເປັນບັນຫາການກວດສອບທີ່ສຳຄັນທີ່ສຳຄັນມີສ່ວນຮ່ວມເຊິ່ງນຳໃຊ້ດຸນພິນິດທີ່ສຳຄັນໃນການກຳນົດເງິນແຮສຳລັບໜີ້ຕ້ອງສົງໃສ.

ຂອບເຂດດຸນພິນິດທີ່ສຳຄັນລວມມີ:

- ການປະເມີນຂໍ້ກຳນົດຕ່າງໆ ເພື່ອກຳນົດຄ່າເສື່ອມພາຍໃຕ້ການນຳໃຊ້ IFRS 9 - ເຄື່ອງມືທາງການເງິນ ເຊິ່ງສົ່ງຜົນກະທົບໃນການກຳນົດແບບຈຳລອງການຄາດຄະເນໜີ້ເສຍຂອງບໍລິສັດ;
- ໃນການເພີ່ມຂຶ້ນຢ່າງໃຫຍ່ຫຼວງຂອງຄວາມສ່ຽງດ້ານສິນເຊື່ອ;
- ສົມມຸດຖານທີ່ນຳໃຊ້ໃນການກຳນົດແບບຈຳລອງການຄາດຄະເນໜີ້ເສຍລວມເຖິງ, ແຕ່ບໍ່ຈຳກັດສະພາບການເງິນຂອງຄູ່ສັນຍາ, ກະແສເງິນສົດຄາດເນໃນອະນາຄົດ ແລະ ປັດໄຈເສດຖະກິດມະຫາພາກໃນອະນາຄົດ (ເຊັ່ນ: ການຂະຫຍາຍຕົວຂອງຜະລິດຕະພັນພາຍໃນ ແລະ ອື່ນໆ); ແລະ
- ຄວາມຕ້ອງການທີ່ຈະນຳໃຊ້ການຊັບຊ້ອນເພີ່ມເຕີມ, ເພື່ອສະທ້ອນປັດໄຈພາຍນອກໃນອະນາຄົດທີ່ບໍ່ເໝາະສົມໃນການກຳນົດແບບຈຳລອງການຄາດຄະເນ.

ພວກຂ້າພະເຈົ້າໄດ້ຮ່ວມມືກັບຜູ້ຊ່ຽວຊານດ້ານການອັດແທກ ແລະ ຜູ້ຊ່ຽວຊານດ້ານເຕັກໂນໂລຍີໃນຂົງເຂດທີ່ຕ້ອງການຄວາມຊ່ຽວຊານສະເພາະ ໃນການແກ້ໄຂບັນຫາການກວດສອບທີ່ສຳຄັນລວມມີ,

- ພວກຂ້າພະເຈົ້າໄດ້ປະເມີນການຈຳລອງເຕັກນິກ/ວິທີການນຳໃຊ້ຂໍ້ກຳນົດຕ່າງໆພາຍໃຕ້ IFRS 9 - ເຄື່ອງມືທາງການເງິນ
- ພວກຂ້າພະເຈົ້າໄດ້ປະເມີນ ແລະ ທົດລອງການອອກແບບ ແລະ ການດຳເນີນງານທີ່ມີປະສິດທິພາບຂອງການຄວບຄຸມພາຍໃນຂອງ:
  - ຄວາມຄົບຖ້ວນ ແລະ ຖືກຕ້ອງຂອງຂໍ້ມູນທີ່ນຳໃຊ້ໃນການກຳນົດເງິນແຮສຳລັບການຄາດຄະເນໜີ້ເສຍ, ລວມທັງຂໍ້ມູນການເຄື່ອນໄຫວນະມູນຄ່າເດີມຂອງການເຊົ່າຊື້, ການປະເມີນປະລິມານຂອງສິນເຊື່ອພາຍໃນທີ່ກຳລັງດຳເນີນຢູ່, ຖານຂໍ້ມູນໃນສາງຂໍ້ມູນ ແລະ ໜ້າຕ່າງຂອງການຄາດຄະເນໜີ້ເສຍ
  - ການຄາດຄະເນໜີ້ເສຍແບບຈຳລອງໜີ້ເສຍ, ລວມທັງ ແບບຈຳລອງໃນການສ້າງ ແລະ ການອະນຸມັດການຕິດຕາມ/ກວດກາ, ການຄຸ້ມຄອງແບບຈຳລອງ ແລະ ການຄົ້ດໄລ່ທາງຄະນິດສາດ

A member firm of Ernst & Young Global Limited

- ພວກຂ້າພະເຈົ້າມີການປະເມີນ ແລະ ທົດລອງສົມມຸດຖານການຈຳລອງເຊັ່ນດຽວກັນກັບການທັບຊ້ອນ ໂດຍແນ່ໃສ່:
  - ສົມມຸດຖານທີ່ສຳຄັນໃນການນຳໃຊ້ໂດຍບໍລິສັດລວມທັງການປຽບທຽບໃສ່ຕະຫຼາດ ແລະ ປະສົບການທີ່ຜ່ານມາໃນອະດີດ,
  - ພື້ນຖານ ແລະ ຂໍ້ມູນທີ່ນຳໃຊ້ໃນການກຳນົດຂໍ້ມູນທັບຊ້ອນ; ແລະ
  - ຄວາມຜັນຜວນຂອງການເກັບເງິນແຮທີ່ປ່ຽນແປງໃນແບບຈຳລອງຂໍ້ສົມມຸດຖານ
- ພວກຂ້າພະເຈົ້າໄດ້ກວດກາຕົວຢ່າງຂອງການເປີດເຜີຍ ແລະ ດຳເນີນຕາມຂັ້ນຕອນການປະເມີນ:
  - ການລະບຸຄວາມສ່ຽງໃຫ້ທັນທີໂດຍການກຳນົດຄ່າເສື່ອມທີ່ສຳຄັນຂອງຄຸນະພາບສິນເຊື່ອ; ແລະ
  - ການຄາດຄະເນການຄິດໄລ່ໜີ້ເສຍ ໂດຍການເປີດເຜີຍການປະເມີນເປັນລາຍບຸກຄົນ
- ນອກຈາກນັ້ນ, ພວກຂ້າພະເຈົ້າໄດ້ປະເມີນຄວາມພຽງພໍຂອງການເປີດເຜີຍໃນບົດລາຍງານການເງິນຕໍ່ກັບຂໍ້ກຳນົດຂອງຂອບເຂດການບັນຊີພິເສດທີ່ນຳໃຊ້.

  ພວກຂ້າພະເຈົ້າໄດ້ຮ່ວມມືກັບຜູ້ຊ່ຽວຊານດ້ານການວັດແທກ ແລະ ຜູ້ຊ່ຽວຊານດ້ານເຕັກໂນໂລຢີໃນຂົງເຂດທີ່ຕ້ອງການຄວາມຊ່ຽວຊານສະເພາະ(ເຊັ່ນ: ຂໍ້ມູນທີ່ເຊື່ອຖືໄດ້ ແລະ ແບບຈຳລອງຄາດຄະເນໜີ້ເສຍ)

ຄວາມຮັບຜິດຊອບຂອງຄະນະບໍລິຫານຕໍ່ເອກະສານລາຍງານການເງິນ

ຄະນະບໍລິຫານຂອງບໍລິສັດມີໜ້າທີ່ຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນໂດຍສອດຄ່ອງກັບນະໂຍບາຍການບັນຊີທີ່ໄດ້ລະບຸໄວ້ໃນ ບົດອະທິບາຍເລກທີ 5 ຂອງເອກະສານລາຍງານການເງິນ, ແລະ ບັນດາການຄວບຄຸມພາຍໃນທີ່ກ່ຽວຂ້ອງທີ່ທາງຄະນະບໍລິຫານເຫັນວ່າມີຄວາມຈຳເປັນເພື່ອໃຫ້ສາມາດກະກຽມເອກະສານລາຍງານການເງິນ ທີ່ປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດຕ່າງໆ.

ໃນການກະກຽມເອກະສານລາຍງານການເງິນ, ຄະນະບໍລິຫານ ມີຄວາມຮັບຜິດຊອບໃນການປະເມີນຄວາມອາດສາມາດຂອງບໍລິສັດ ທາງດ້ານຄວາມສືບເນື່ອງໃນການດຳເນີນທຸລະກິດ ແລະ ນຳໃຊ້ພື້ນຖານການບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດ ຈົນກວ່າທີ່ທາງຄະນະບໍລິຫານບໍລິສັດ ຫາກເຫັນວ່າທຸລະກິດບໍ່ມີຄວາມອາດສາມາດໃນການດຳເນີນງານຕໍ່ໄດ້ ຫຼື ໃນກໍລະນີທີ່ທາງຄະນະບໍລິຫານບໍລິສັດ ມີຈຸດປະສົງຢາກຍຸບເລີກ ຫຼື ຢຸດກິດຈະການ.

ຄວາມຮັບຜິດຊອບຂອງນັກກວດສອບ ໃນການກວດສອບເອກະສານລາຍງານການເງິນ

ຈຸດປະສົງໃນການກວດສອບຂອງພວກຂ້າພະເຈົ້າແມ່ນເພື່ອຮັບເອົາ ການຮັບປະກັນທີ່ສົມເຫດສົມຜົນວ່າເອກະສານລາຍງານການເງິນ ໂດຍພາບ ລວມແມ່ນປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫລື ຍ້ອນຄວາມຜິດພາດຕ່າງໆ ແລະ ເພື່ອການອອກບົດລາຍງານຂອງນັກກວດສອບອິດສະຫຼະທີ່ປະກອບມີຄຳເຫັນຂອງພວກຂ້າພະເຈົ້າຕໍ່ເອກະສານລາຍງານການເງິນ. ການຮັບປະກັນທີ່ສົມເຫດສົມຜົນແມ່ນການຮັບປະກັນໃນລະດັບສູງ ແຕ່ບໍ່ໄດ້ຮັບປະກັນວ່າ ການກວດສອບທີ່ໄດ້ດຳເນີນໂດຍສອດຄ່ອງກັບ ມາດຕະຖານດ້ານການກວດສອບສາກົນ ຈະສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ອາດເກີດຂຶ້ນໄດ້ຕະຫຼອດທັງໝົດ. ຂໍ້ຜິດພາດສາມາດເກີດຂຶ້ນຈາກການສໍ້ໂກງ ຫຼື ຍ້ອນຂໍ້ຜິດພາດຕ່າງໆ ແມ່ນຖືກພິຈາລະນາວ່າ ສຳຄັນຈາກລາຍການດຽວ ຫຼື ຫຼາຍລາຍການລວມກັນ ແລະ ມີອິດທິພົນຕໍ່ການຕັດສິນໃຈທາງເສດຖະກິດຂອງຜູ້ນຳໃຊ້ເອກະສານລາຍງານການເງິນ.

ໃນການກວດສອບໂດຍສອດຄ່ອງກັບ ມາດຕະຖານດ້ານການກວດສອບສາກົນ, ພວກຂ້າພະເຈົ້າໄດ້ໃຊ້ການຕັດສິນ ແລະ ວິນິໄສແບບມືອາຊີບ ໃນຕະຫຼອດການດຳເນີນການກວດສອບ. ພວກຂ້າພະເຈົ້າຍັງໄດ້:

- ກຳນົດ ແລະ ປະເມີນບັນດາຄວາມສ່ຽງຂອງຂໍ້ຜິດພາດອັນໃຫຍ່ຫລວງຂອງເອກະສານລາຍງານການເງິນ ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ, ອອກແບບ ແລະ ດຳເນີນຂັ້ນຕອນການກວດສອບເພື່ອຮອງຮັບບັນດາຄວາມສ່ຽງເຫຼົ່ານັ້ນ ແລະ ເພື່ອຮັບປະກັນວ່າຈະໄດ້ຮັບເອົາຫຼັກຖານການກວດສອບທີ່ພຽງພໍ ແລະ ເໝາະສົມ ເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ ຄວາມສ່ຽງຈາກການທີ່ບໍ່ສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ມີຜົນມາຈາກການສໍ້ໂກງ ແມ່ນສູງກວ່າຄວາມ

A member firm of Ernst & Young Global Limited

Building a better working world

ສຽງທີ່ມີຜົນມາຈາກຄວາມຜິດພາດ, ເນື່ອງຈາກວ່າການສໍ້ໂກງອາດລວມມີ ການສົມຮູ້ຮ່ວມຄິດ, ການປອມແປງ, ການລະເລີຍໂດຍ ຕັ້ງໃຈ, ການບິດເບືອນ ຫຼື ລະເມີດຫຼັກການການຄວບຄຸມພາຍໃນ.

- ທຳຄວາມເຂົ້າໃຈກ່ຽວກັບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບເພື່ອອອກແບບຂັ້ນຕອນການກວດສອບທີ່ເໝາະສົມ ກັບສະພາບການຕ່າງໆ ແຕ່ບໍ່ໄດ້ມີຈຸດປະສົງເພື່ອສະແດງຄຳເຫັນກ່ຽວກັບປະສິດທິພາບຂອງການຄວບຄຸມພາຍໃນຂອງບໍລິສັດ.

- ສະຫຼຸບກ່ຽວກັບຄວາມເໝາະສົມຂອງການນຳໃຊ້ພື້ນຖານຂອງບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດ ຂອງຄະນະບໍລິຫານ ໂດຍອີງຕາມຫຼັກຖານການກວດສອບທີ່ໄດ້ຮັບ ບໍ່ວ່າຈະເປັນຄວາມບໍ່ແນ່ນອນທີ່ສຳຄັນທີ່ອາດເກີດຂຶ້ນຈາກບັນ ດາເຫດການ ຫຼື ເງື່ອນໄຂທີ່ອາດເປັນຂໍ້ສົງໃສທີ່ສຳຄັນກ່ຽວກັບຄວາມອາດສາມາດຂອງບໍລິສັດໃນຄວາມສືບເນື່ອງໃນການດຳເນີນທຸ ລະກິດ. ຖ້າຫາກພວກຂ້າພະເຈົ້າສະຫຼຸບໄດ້ວ່າ ມີຄວາມບໍ່ແນ່ນອນທີ່ສຳຄັນເກີດຂຶ້ນ, ພວກຂ້າພະເຈົ້າຈະໄດ້ລະບຸໃນບົດລາຍງານຂອງ ນັກກວດສອບອິດສະຫຼະ ໃນການເປີດເຜີຍທີ່ກ່ຽວຂ້ອງໃນເອກະສານລາຍງານການເງິນ ເພື່ອສະເໜີໃຫ້ເອົາໃຈໃສ່ຕື່ມອີກ ຫຼື ຖ້າຫາກ ຂາດການເປີດເຜີຍທີ່ພຽງພໍ, ພວກຂ້າພະເຈົ້າຈະຕ້ອງໄດ້ສະແດງຄຳເຫັນແບບມີເງື່ອນໄຂການສະຫຼຸບຂອງພວກຂ້າພະເຈົ້າແມ່ນອີງຕາມ ຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີຂອງບົດລາຍງານຂອງນັກກວດສອບອິດສະຫຼະ. ເຖິງຢ່າງໃດກໍ່ຕາມ, ບັນດາເຫດການ ໃນອະນາຄົດ ຫຼື ເງື່ອນໄຂອື່ນໆ ອາດເປັນສາເຫດເຮັດໃຫ້ບໍລິສັດຢຸດຕິການສືບຕໍ່ຄວາມສືບເນື່ອງໃນການດຳເນີນທຸລະກິດ.

- ປະເມີນຄວາມເໝາະສົມຂອງບັນດານະໂຍບາຍທາງບັນຊີທີ່ນຳໃຊ້ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງການບັນຊີ ແລະ ການເປີດເຜີຍທີ່ກ່ຽວຂ້ອງທີ່ໄດ້ຖືກນຳໃຊ້ໂດຍຄະນະບໍລິຫານ.

ພວກຂ້າພະເຈົ້າໄດ້ປຶກສາຫາລືກັບຄະນະບໍລິຫານຂອງບໍລິສັດກ່ຽວກັບບັນດາບັນຫາອື່ນໆ, ການວາງແຜນຂອບເຂດ ແລະ ເວລາຂອງການ ກວດສອບ ແລະ ຂໍ້ຄົ້ນພົບທາງການກວດສອບທີ່ສຳຄັນ ລວມທັງບັນດາຂໍ້ບົກຜ່ອງທີ່ສຳຄັນໃນການຄວບຄຸມພາຍໃນທີ່ພວກຂ້າພະເຈົ້າໄດ້ ກຳນົດໃນລະຫວ່າງການກວດສອບຂອງພວກຂ້າພະເຈົ້າ.

ໃນນາມ ແລະ ຕາງໜ້າ ບໍລິສັດ ເອີນແອນຢັ ງ ລາວ ຈຳກັດ

ບໍລິສັດ ເອີ ແອນ ຢັ ງ ລາວ ຈຳກັດ ERNST & YOUNG LAO CO.,LTD

Trinh Hoang Anh
ຮຸ້ນສ່ວນ

ນະຄອນຫຼວງວຽງຈັນ, ສປປ ລາວ

18 ສິງຫາ 2021

A member firm of Ernst & Young Global Limited

ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານຜົນການດຳເນີນງານ ແລະ ໃບລາຍງານຜົນການດຳເນີນງານນອກການທຸລະກິດ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2020

	ບົດອະທິບາຍ ເລກທີ	2020 ກີບ	2019 (ປັບປຸງ) ກີບ
ລາຍຮັບດອກເບ້ຍ ແລະ ລາຍຮັບຄ້າຍຄືກັນ		231,983,384,223	255,930,576,723
ດອກເບ້ຍອື່ນໆ ແລະ ລາຍຮັບທີ່ຄ້າຍຄືກັນ		19,326,467,950	6,512,899,181
ລາຍຈ່າຍດອກເບ້ຍ ແລະ ລາຍຮັບຄ້າຍຄືກັນ		(44,576,285,134)	(15,885,810,357)
ລາຍຮັບດອກເບ້ຍສຸດທິ	7	**206,733,567,039**	**246,557,665,547**
ລາຍຮັບຄ່າທຳນຽມ ແລະ ຄ່ານາຍໜ້າ		-	-
ລາຍຈ່າຍຄ່າທຳນຽມ ແລະ ຄ່ານາຍໜ້າ	8	(9,784,019,312)	(11,096,708,551)
ລາຍຮັບຄ່າທຳນຽມ ແລະ ຄ່ານາຍໜ້າສຸດທິ		**(9,784,019,312)**	**(11,096,708,551)**
ກຳໄລ/(ຂາດທຶນ)ຈາກອັດຕາແລກປ່ຽນສຸດທິ		5,385,128,847	5,993,494,780
ລາຍຮັບ/(ລາຍຈ່າຍ) ຈາກການດຳເນີນງານອື່ນໆ	9	1,334,558,290	9,372,109,752
ລວມລາຍຮັບຈາກການດຳເນີນງານ		**203,669,234,864**	**250,826,561,528**
ການປ່ຽນແປງລາຍຈ່າຍເງິນແຮສຳລັບຄ່າເສື່ອມໜີ້ເສຍ	14.2	10,166,696,685	(33,816,837,595)
ລາຍຮັບຈາກການດຳເນີນງານສຸດທິ		**213,835,931,549**	**217,009,723,933**
ລາຍຈ່າຍທີ່ກ່ຽວຂ້ອງກັບພະນັກງານ	10	(30,689,830,127)	(38,611,311,405)
ຄ່າຫຼຸ້ຍຫ້ຽນຂອງຊັບສິນບັດ ແລະ ອຸປະກອນ	16	(988,360,672)	(1,343,340,899)
ລາຍຈ່າຍຈາກການດຳເນີນງານອື່ນໆ	11	(35,237,763,517)	(46,565,952,672)
ລວມລາຍຈ່າຍຈາກການດຳເນີນງານ		**(66,915,954,316)**	**(86,520,604,976)**
ກຳໄລກ່ອນຫັກອາກອນ		**146,919,977,234**	**130,489,118,957**
ລາຍຈ່າຍອາກອນກຳໄລໃນປີ	19	(20,694,852,744)	(38,188,585,823)
ກຳໄລສຸດທິພາຍໃນປີ		**126,225,124,490**	**92,300,533,134**
ລາຍຮັບນອກການທຸລະກິດອື່ນໆ		-	-
ລວມລາຍຮັບນອກການທຸລະກິດພາຍໃນປີ		**126,225,124,490**	**92,300,533,134**
ກຳໄລຕໍ່ຮຸ້ນ			
ພື້ນຖານ, ກຳໄລພາຍໃນປີປັນໃຫ້ກັບຜູ້ຖືຮຸ້ນສາມັນ	20	419	350

ທ່ານ ນາງ. Risa Yamaguchi
ຜູ້ອຳນວຍການໃຫຍ່

ທ່ານ. Adnan Ghani
ຫົວໜ້າພະແນກບັນຊີ - ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

18 ສິງຫາ 2021

ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານຖານະການເງິນ
ນະວັນທີ 31 ທັນວາ 2020

	ບົດອະທິບາຍ ເລກທີ	*31 ທັນວາ 2020* ກີບ	*31 ທັນວາ 2019 (ປັບປຸງ)* ກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ທຽບເທົ່າເງິນສົດ	12	92,900,530,090	336,866,272,315
ເງິນຝາກຢູ່ ທະນາຄານແຫ່ງ ສປປ ລາວ ("ທຫລ")	13	1,968,900,000	1,667,400,000
ໜີ້ຕ້ອງຮັບສັນຍາເຊົ່າຊື້ – ສ່ວນທີ່ໝຸນວຽນ	14	470,747,714,292	296,845,940,995
ເງິນກູ້ໃຫ້ພາກສ່ວນທີ່ກ່ຽວຂ້ອງ		5,233,900,000	-
ຊັບສິນອື່ນໆ	15	11,404,014,665	19,815,434,179
ລວມຊັບສິນໝຸນວຽນ		**582,255,059,047**	**655,195,047,489**
ຊັບສິນບໍ່ໝຸນວຽນ			
ໜີ້ຕ້ອງຮັບສັນຍາເຊົ່າຊື້ – ສ່ວນທີ່ບໍ່ໝຸນວຽນ	14	146,793,146,336	331,597,361,828
ຊັບສິມບັດ ແລະ ອຸປະກອນ	16	2,228,114,389	2,713,928,693
ຊັບສິນບໍ່ໝຸນວຽນອື່ນໆ		203,975,082	292,466,164
ລວມຊັບສິນບໍ່ໝຸນວຽນ		**149,225,235,807**	**334,603,756,685**
ລວມຊັບສິນ		**731,480,294,854**	**989,798,804,174**

ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານຖານະການເງິນ (ຕໍ່)
ນະວັນທີ 31 ທັນວາ 2020

	ບົດອະທິບາຍ ເລກທີ	*31 ທັນວາ 2020* *ກີບ*	*31 ທັນວາ 2019 (ປັບປຸງ)* *ກີບ*
ໜີ້ສິນ			
ໜີ້ສິນໝຸນວຽນ			
ພັນທະທາງກົດໝາຍ	17	88,170,186,528	75,855,488,988
ເງິນກູ້ຢືມໄລຍະສັ້ນ	18	9,277,676,355	5,812,911,034
ໜີ້ສິນອື່ນໆ		4,746,003,449	2,844,791,336
ລວມໜີ້ສິນໝຸນວຽນ		**102,193,866,332**	**84,513,191,358**
ໜີ້ສິນບໍ່ໝຸນວຽນ			
ເງິນກູ້ຢືມໄລຍະຍາວ	18	105,301,306,355	501,168,757,172
ໜີ້ຕ້ອງສົ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງ		-	6,356,857,967
ລວມໜີ້ສິນບໍ່ໝຸນວຽນ		**105,301,306,355**	**507,525,615,139**
ລວມໜີ້ສິນ		**207,495,172,687**	**592,038,806,497**
ທຶນ			
ທຶນຈົດທະບຽນທີ່ຖອກແລ້ວ	21	30,150,000,000	30,150,000,000
ສ່ວນຕ່າງມູນຄ່າຮຸ້ນ	21	155,497,646,314	155,497,646,314
ທຶນອື່ນໆ		290,000,000	290,000,000
ກຳໄລສະສົມ		338,047,475,853	211,822,351,363
ລວມທຶນ		**523,985,122,167**	**397,759,997,677**
ລວມໜີ້ສິນ ແລະ ທຶນ		**731,480,294,854**	**989,798,804,174**

ທ່ານ ນາງ. Risa Yamaguchi
ຜູ້ອຳນວຍການໃຫຍ່

ທ່ານ. Adnan Ghani
ຫົວໜ້າພະແນກບັນຊີ - ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

18 ສິງຫາ 2021

ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2020

	ທຶນຈົດທະບຽນທີ່ໄດ້ຖອກແລ້ວ ກີບ	*ສ່ວນເພີ່ມມູນຄ່າຮຸ້ນ ກີບ*	*ທຶນອື່ນໆ ກີບ*	*ກຳໄລສະສົມ (ປັບປຸງ) ກີບ*	*ລວມ ກີບ*
ຍອດເຫຼືອ ນະວັນທີ 1 ມັງກອນ 2019	24,120,000,000	-	290,000,000	119,521,818,229	143,931,818,229
ທຶນຈົດທະບຽນທີ່ຖອກໃໝ່	6,030,000,000	155,497,646,314	-	-	161,527,646,314
ກຳໄລພາຍໃນປີ	-	-	-	92,300,533,134	92,300,533,134
ຍອດເຫຼືອ ນະວັນທີ 31 ທັນວາ 2019	**30,150,000,000**	**155,497,646,314**	**290,000,000**	**211,822,351,363**	**397,759,997,677**
ກຳໄລພາຍໃນປີ	-	-	-	126,225,124,490	126,225,124,490
ຍອດເຫຼືອ ນະວັນທີ 31 ທັນວາ 2020	**30,150,000,000**	**155,497,646,314**	**290,000,000**	**338,047,475,853**	**523,985,122,167**

ທ່ານ ນາງ. Risa Yamaguchi
ຜູ້ອຳນວຍການໃຫຍ່

ທ່ານ. Adnan Ghani
ຫົວໜ້າພະແນກບັນຊີ - ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

18 ສິງຫາ 2021

ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານກະແສເງິນສົດ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2020

	ບົດອະທິບາຍ ເລກທີ	*2020 ກີບ*	*2019 (ປັບປຸງ) ກີບ*
ກິດຈະກຳການດຳເນີນງານ			
ກຳໄລກ່ອນອາກອນ		146,919,977,234	130,489,118,957
ດັດແກ້ສຳລັບ:			
ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມ	16	988,360,672	1,343,340,899
ການປ່ຽນແປງລາຍຈ່າຍເງິນແຮສຳລັບຄ່າເສື່ອມໜີ້ເສຍ	14	(10,166,696,685)	33,816,837,595
ສະສາງເງິນລ່ວງໜ້າໃຫ້ພາກສ່ວນທີ່ກ່ຽວຂ້ອງ		-	14,538,967,740
ສະສາງເງິນກູ້		-	(9,010,780,128)
ລາຍຈ່າຍດອກເບ້ຍ		44,576,285,134	15,885,810,357
ຂາດທຶນສຸດທິຈາກອັດຕາແລກປ່ຽນ		(6,112,730,788)	12,796,989,958
ສ່ວນປ່ຽນແປງໃນຊັບສິນການດຳເນີນງານ			
ການປ່ຽນແປງສຸດທິໃນໜີ້ຕ້ອງຮັບຈາກການເຊົ່າ		38,166,896,437	(56,062,806,177)
ການປ່ຽນແປງສຸດທິໃນເງິນກູ້ໃຫ້ພາກສ່ວນທີ່ກ່ຽວຂ້ອງ		(5,233,900,000)	10,039,792,707
ການປ່ຽນແປງສຸດທິໃນຊັບສິນອື່ນໆ		8,198,410,596	(413,367,854)
ສ່ວນປ່ຽນແປງໃນໜີ້ສິນການດຳເນີນງານ			
ການປ່ຽນແປງສຸດທິໃນໜີ້ຕ້ອງສົ່ງໃຫ້ພາກສ່ວນທີ່ ກ່ຽວຂ້ອງ		-	(40,274,675,543)
ການປ່ຽນແປງສຸດທິໃນໜີ້ສິນອື່ນໆ		(4,020,045,275)	(39,552,034,518)
ດອກເບ້ຍທີ່ຈ່າຍ		(49,282,127,794)	(284,447,058)
ອາກອນກຳໄລ		(7,052,420,795)	(9,472,703,877)
ກະແສເງິນສົດສຸດທິ ຈາກກິດຈະກຳການດຳເນີນງານ		**156,982,008,736**	**63,840,043,058**
ກິດຈະກຳການລົງທຶນ			
ການຊື້ຊັບສິນຍັດ ແລະ ອຸປະກອນ		(502,546,368)	(1,743,060,984)
ກະແສເງິນສົດສຸດທິ ໃຊ້ໃນກິດຈະກຳການລົງທຶນ		**(502,546,368)**	**(1,743,060,984)**

	ບົດອະທິບາຍ ເລກທີ	2020 ກີບ	2019 (ປັບປຸງ) ກີບ
ກິດຈະກຳທາງການເງິນ			
ການປະກອບທຶນ ແລະ ອອກຮຸ້ນ		-	161,527,646,314
ເງິນກູ້ທີ່ເບີກຖອນເງິນກູ້		17,912,000,000	8,600,000,000
ການຊຳລະຄືນເງິນກູ້		(418,357,204,593)	(6,706,881,766)
ກະແສເງິນສົດສຸດທິ ຈາກ/(ໃຊ້ໄປ) ກິດຈະກຳທາງການເງິນ		**(400,445,204,593)**	**163,420,764,548**
ການປ່ຽນແປງສຸດທິ ຂອງເງິນສົດ ແລະ ທຽບເທົ່າເງິນສົດ		**(243,965,742,225)**	**225,517,746,622**
ເງິນສົດ ແລະ ທຽບເທົ່າເງິນສົດໃນຕົ້ນປີ	**12**	**336,866,272,315**	**111,348,525,693**
ເງິນສົດ ແລະ ທຽບເທົ່າເງິນສົດໃນທ້າຍປີ	**12**	**92,900,530,090**	**336,866,272,315**

ທ່ານ ນາງ. Risa Yamaguchi
ຜູ້ອຳນວຍການໃຫຍ່

ທ່ານ. Adnan Ghani
ຫົວໜ້າພະແນກບັນຊີ - ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

18 ສິງຫາ 2021

1. ຂໍ້ມູນບໍລິສັດ

ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ("ບໍລິສັດ") ກ່ອນໜ້ານີ້ແມ່ນ ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ຈຳກັດ, ເປັນບໍລິສັດມະຫາຊົນທີ່ດຳເນີນທຸລະກິດໃນ ສປປ ລາວ ອີງຕາມໃບທະບຽນວິສາຫະກິດ ເລກທີ 081/ກທຄວ ອອກໂດຍກົມທະ ບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ, ລົງວັນທີ 5 ກຸມພາ 2015 ແລະ ໃບທະບຽນວິສາຫະກິດສະບັບ ປັບປຸງລ່າສຸດ ເລກທີ 0222/ກທຄວ, ລົງວັນທີ 19 ກຸມພາ 2019. ບໍລິສັດໄດ້ຮັບອະນຸຍາດຈາກ ທະນາຄານແຫ່ງ ສປປ ລາວ (ທຫລ) ລົງວັນທີ 2 ກຸມພາ 2015 ແລະ ສະບັບປັບປຸງລ່າສຸດ ວັນທີ 14 ກັນຍາ 2017 ໃນການດຳເນີນກິດຈະກຳໃຫ້ເຊົ່າສິນ ເຊື່ອ.

ກິດຈະກຳຫຼັກຂອງບໍລິສັດ ແມ່ນການບໍລິການໃຫ້ເຊົ່າຊື້ໂດຍການສະໜອງສິນເຊື່ອເຊົ່າຊື້ສຳລັບລູກຄ້າສ່ວນບຸກຄົນ ແລະ ບໍລິສັດ ຕ່າງໆເພື່ອຊື້ລົດຈັກ ແລະ ລົດໃຫຍ່.

ທຶນຈົດທະບຽນທີ່ຖອກແລ້ວຂອງບໍລິສັດ ນະວັນທີ 31 ທັນວາ 2020 ແມ່ນ 30,150,000,000 ກີບ.

ສຳນັກງານໃຫຍ່ຂອງບໍລິສັດຕັ້ງຢູ່ ຊັ້ນ 2, ອາຄານ NNN, ບ້ານ ໂພນສີນວນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ.

ນະວັນທີ 31 ທັນວາ 2020, ບໍລິສັດມີພະນັກງານທັງໝົດ 593 ຄົນ (2019: 609 ຄົນ).

2. ພື້ນຖານການກະກຽມເອກະສານລາຍງານການເງິນ

ເອກະສານລາຍງານການເງິນແມ່ນຖືກກະກຽມສຳລັບບໍລິສັດເພື່ອນຳໃຊ້ໃນການລາຍງານຕາມຂໍ້ກຳນົດຂອງຄະນະບໍລິຫານຂອງ ບໍລິສັດ, ຜູ້ຖືຮຸ້ນ, ທະນາຄານແຫ່ງ ສປປ ລາວ ແລະ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບເທົ່ານັ້ນ. ເອກະສານລາຍງານ ການເງິນ ສະບັບນີ້ແມ່ນໄດ້ຖືກກະກຽມໂດຍສອດຄ່ອງກັບນະໂຍບາຍການບັນຊີທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍເລກທີ 5. ນະໂຍບາຍການບັນຊີດັ່ງກ່າວໃນເບື້ອງຕົ້ນແມ່ນອີງຕາມມາດຕະຖານສາກົນດ້ານການລາຍງານການເງິນ ("IFRS") ທີ່ອອກ ໂດຍຄະນະກຳມະການກຳນົດມາດຕະຖານການບັນຊີສາກົນ. ເຖິງຢ່າງໃດກໍຕາມ, ການກະກຽມເອກະສານລາຍງານການເງິນ ດັ່ງກ່າວ ບໍ່ແມ່ນເອກະສານລາຍງານການເງິນທີ່ຄົບຖ້ວນຕາມວັດຖຸປະສົງໂດຍທົ່ວໄປທີ່ໄດ້ຖືກກະກຽມໂດຍສອດຄ່ອງກັບ ມາດຕະຖານ IFRS.

ດັ່ງນັ້ນ, ເອກະສານລາຍງານການເງິນແມ່ນບໍ່ໄດ້ມີວັດຖຸປະສົງໃນການກະກຽມໃຫ້ສອດຄ່ອງກັບມາດຕະຖານສາກົນດ້ານການ ລາຍງານການເງິນ ("ເອກະສານລາຍງານການເງິນສຳລັບຈຸດປະສົງພິເສດ").

ເອກະສານລາຍງານການເງິນສຳລັບຈຸດປະສົງພິເສດ ແມ່ນໄດ້ຖືກກະກຽມ ໂດຍນຳໃຊ້ຫຼັກການຕົ້ນທຶນເດີມ, ຍົກເວັ້ນທີ່ໄດ້ເປີດ ເຜີຍເພີ່ມເຕີມໃນບົດອະທິບາຍອື່ນໆ.

ບໍລິສັດ ໄດ້ບັນທຶກບັນຊີເປັນສະກຸນເງິນກີບລາວ ("ກີບ") ເຊິ່ງເປັນສະກຸນເງິນຫຼັກທີ່ບໍລິສັດນຳໃຊ້ເຂົ້າໃນລາຍການເຄື່ອນໄຫວ ທຸລະກິດ ແລະ ນຳສະເໜີເອກະສານລາຍງານການເງິນເປັນສະກຸນເງິນກີບລາວ.

ປີການບັນຊີຂອງບໍລິສັດແມ່ນ ເລີ່ມແຕ່ ວັນທີ 1 ມັງກອນ ແລະ ສິ້ນສຸດ ວັນທີ 31 ທັນວາ.

3. ການນຳສະເໜີເອກະສານລາຍງານການເງິນ

ບໍລິສັດໄດ້ນຳສະເໜີໃບລາຍງານຖານະການເງິນ ໂດຍລຽງລຳດັບຕາມສະພາບຄ່ອງ. ຊັບສິນ ແລະ ໜີ້ສິນທາງການເງິນ ໂດຍທົ່ວໄປຖືກລາຍງານເປັນຍອດລວມໃນໃບລາຍງານຖານະການເງິນ. ຊັບສິນ ແລະ ໜີ້ສິນທາງການເງິນ ຈະຖືກນຳມາຫັກລ້າງກັນ ແລະ ລາຍງານເປັນມູນຄ່າສຸດທິ ເມື່ອ ຫຼື ໃນສະຖານະການຜົນບັງຄັບໃຊ້ຕາມກົດໝາຍໂດຍບໍ່ມີເງື່ອນໄຂທີ່ຈະຫັກລ້າງຈຳນວນທີ່ຖືກຮັບຮູ້ໄປແລ້ວ ຊຶ່ງບໍ່ໄດ້ຄຳນຶງເຖິງເຫດການໃນອະນາຄົດ, ພາກສ່ວນຕ່າງໆມີຈຸດປະສົງທີ່ແກ້ໄຂບັນຫາບົນພື້ນຖານສຸດທິໃນທຸກເຫດການດັ່ງລຸ່ມນີ້:

- ໃນກໍລະນີທີ່ຕາມເງື່ອນໄຂປົກກະຕິຂອງທຸລະກິດ
- ໃນກໍລະນີທີ່ທຸລະກິດມີການລະເມີດສັນຍາ
- ໃນກໍລະນີຂອງການລົ້ມລະລາຍ ຫຼື ການລົ້ມລະລາຍຂອງບໍລິສັດ ແລະ/ຫຼື ຄູ່ຄ້າຂອງຕົນ

4. ການປ່ຽນແປງຂອງນະໂຍບາຍ ແລະ ເປີດເຜີຍຂໍ້ມູນທາງດ້ານການບັນຊີ

ວັນທີ 1 ມັງກອນ 2020, ບໍລິສັດໄດ້ເລືອກທີ່ຈະປ່ຽນແປງນະໂຍບາຍທາງການບັນຊີສຳລັບຄ່າເສື່ອມຂອງເຄື່ອງມືທາງການເງິນ ຈາກວິທີການຄິດໄລ່ໜີ້ເສຍພາຍໃຕ້ IAS 39 ເປັນ IFRS 9: "ເຄື່ອງມືທາງການເງິນ" ເນື່ອງຈາກບໍລິສັດເຊື່ອວ່າເຕັກນິກວິທີການແບບ ECL ສອດຄ່ອງກັບ IFRS 9 ທີ່ມີຄວາມໜ້າເຊື່ອຖືໃນການຄິດໄລ່ຄ່າເສື່ອມມູນຄ່າ ແລະ ສອດຄ່ອງກັບແນວທາງປະຕິບັດທີ່ຊຸ່ແຂ່ງນຳໃຊ້. ນອກຈາກນັ້ນ, ການຈັດອັນດັບ, ການວັດແທກ ແລະ ເປີດເຜີຍຂອງເຄື່ອງມືທາງການເງິນຍັງຄົງຮຸບແບບເດີມກັບເອກະສານລາຍງານການເງິນປີທີ່ສິ້ນສຸດວັນທີ 31 ທັນວາ 2020.

ຜົນກະທົບຈາການປ່ຽນແປງທີ່ກ່າວມາຂ້າງເທິງມີລາຍລະອຽດດັ່ງລຸ່ມນີ້:
ບໍລິສັດໄດ້ປ່ຽນແປງນະໂຍບາຍທາງການບັນຊີສຳລັບຄ່າເສື່ອມໜີ້ເສຍຂອງສັນຍາເຊົ່າຊື້ໂດຍປ່ຽນແທນ IAS 39 ໂດຍການຄາດຄະເນໜີ້ເສຍລ່ວງໜ້າ (ECL) ທີ່ສອດຄ່ອງຕາມແນວທາງ IFRS 9.

- ອີງຕາມ IAS 39, ບໍລິສັດຄາດຄະເນວ່າ ນະມື້ທີ່ລາຍງານບໍ່ໄດ້ມີການຫັກຄ່າເສື່ອມຂອງຊັບທາງການເງິນ ຫຼື ກຸ່ມຂອງຊັບທາງການເງິນ. ຊັບສິນທາງການເງິນ ຫຼື ກຸ່ມຂອງຊັບທາງການເງິນຈະຖືເປັນການຫັກຄ່າເສື່ອມ, ກໍຕໍ່ເມື່ອມີວັດຖຸປະສົງໃນການຫັກຄ່າເສື່ອມທີ່ມີຜົນຈາກເຫດການໃດໜຶ່ງ ຫຼື ຫຼາຍເຫດການທີ່ເກີດຂຶ້ນ ຫຼັງຈາກການຮັບຮູ້ສະພາບຂອງຊັບສິນໃນເບື້ອງຕົ້ນ ("ເຫດທີ່ກໍ່ໃຫ້ເກີດໜີ້ເສຍ") ແລະ ເຫດການນັ້ນມີຜົນກະທົບໃຫ້ແກ່ການຄາດຄະເນກະແສເງິນສົດໃນອະນາຄົດຂອງຊັບສິນທາງການ ຫຼື ກຸ່ມຂອງຊັບທາງການເງິນທີ່ມີການຄາດຄະເນທີ່ສາມາດເຊື່ອຖືໄດ້. ບໍລິສັດມີວິທີການຄິດໄລ່ຄ່າເສື່ອມໜີ້ເສຍທີ່ປະກອບດ້ວຍການຫັກຄ່າເສື່ອມໜີ້ເສຍສະເພາະ ສຳລັບເປັນລາຍບຸກຄົນ ຫຼື ລະບຸຄວາມສ່ຽງໂດຍສະເພາະ ແລະ ການເກັບຄືນຄ່າເສື່ອມ ບໍ່ວ່າຈະເປັນຄວາມສ່ຽງລາຍບຸກຄົນ ຫຼື ເປັນຄວາມສ່ຽງທີ່ເກີດຂຶ້ນແລ້ວ ແຕ່ຍັງບໍ່ໄດ້ຮັບຮູ້ເປັນໜີ້ເສຍ.

- IFRS 9 ກຳນົດໃຫ້ບໍລິສັດບັນທຶກເງິນແຮສຳລັບ ECLs ຂອງໜີ້ຕ້ອງຮັບສັນຍາເຊົ່າຊື້ ແລະ ໜີ້ສິນທາງການເງິນອື່ນໆທີ່ບໍ່ມີຢູ່ໃນ FVPL. ການຫັກເງິນແຮແມ່ນອີງຕາມ ECLs ທີ່ກ່ຽວຂ້ອງກັບການຜິດນັດຊຳລະພາຍໃນ 12 ເດືອນຖັດໄປ ເວັ້ນເສຍແຕ່ວ່າມີຄວາມສ່ຽງທາງສິນເຊື່ອເພີ່ມຂຶ້ນຫຼາຍນັບຕັ້ງແຕ່ເລີ່ມຕົ້ນ. ຖ້າຫາກຊັບສິນທາງການເງິນເປັນໄປຕາມຄວາມໝາຍຂອງການຊື້ ຫຼື ຄ່າເສື່ອມຂອງຊັບສິນ (POCI), ເງິນແຮຈະຖືກຫັກຕາມການປ່ຽນແປງໃນ ECLs ຕະຫຼອດອາຍຸການໃຊ້ງານຂອງຊັບສິນ. ລາຍລະອຽດຂອງວິທີການຫັກຄ່າເສື່ອມຂອງບໍລິສັດແມ່ນໄດ້ເປີດເຜີຍຢູ່ບົດອະທິບາຍເລກທີ 5.9. ການປ່ຽນແປງດັ່ງກ່າວມີຜົນກະທົບຍ້ອນຫຼັງ ແລະ ກະທົບດ້ານປະລິມານຂອງການນຳໃຊ້ IFRS 9 ນະວັນທີ 1 ມັງກອນ 2020 ແມ່ນໄດ້ເປີດເຜີຍຢູ່ບົດອະບາຍເລກທີ 31.

5. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ

5.1 *ການປ່ຽນຄ່າເງິນຕາຕ່າງປະເທດ*

ການເຄື່ອນໄຫວຕ່າງໆໃນສະກຸນເງິນຕາຕ່າງປະເທດ ແມ່ນບັນທຶກຕາມອັດຕາແລກປ່ຽນຂອງສະກຸນເງິນທີ່ໃຊ້ໃນມື້ທີ່ມີລາຍການເຄື່ອນໄຫວ. ຊັບສິນ ແລະ ໜີ້ສິນທາງການເງິນທີ່ສະແດງມູນຄ່າເປັນເງິນຕາຕ່າງປະເທດແມ່ນໄດ້ມີການຕີມູນຄ່າມາເປັນສະກຸນເງິນກີບຕາມອັດຕາແລກປ່ຽນ ນະວັນທີລາຍງານ (ເບິ່ງລາຍການອັດຕາແລກປ່ຽນທີ່ໃຊ້ໃນການຕີມູນຄ່າມາເປັນສະກຸນເງິນກີບ ນະວັນທີ 31 ທັນວາ 2020 ແລະ 31 ທັນວາ 2019 ໄດ້ນຳສະເໜີໃນບົດອະທິບາຍ ເລກທີ 30). ສ່ວນຕ່າງຂອງອັດຕາແລກປ່ຽນທີ່ຍັງບໍ່ທັນເກີດຂຶ້ນຈິງຈາກການຕີມູນຄ່າຂອງຊັບສິນ ແລະ ໜີ້ສິນແມ່ນໄດ້ຖືກລາຍງານໃນໃບລາຍງານຜົນການດຳນິນງານ.

5.2 *ເຄື່ອງມືທາງດ້ານການເງິນ - ການຮັບຮູ້ໃນເບື້ອງຕົ້ນ ແລະ ການຕີມູນຄ່າຕາມພາຍຫຼັງ*

5.2.1 *ວັນທີຂອງການຮັບຮູ້*

ຊັບສິນ ແລະ ໜີ້ສິນທາງການເງິນທັງໝົດ, ຍົກເວັ້ນໜີ້ຕ້ອງຮັບສັນຍາເຊົ່າຊື້, ຖືກຮັບຮູ້ເບື້ອງຕົ້ນໃນມື້ທີ່ຖືກຊື້ - ຂາຍ ເຊັ່ນ ມື້ທີ່ບໍລິສັດກາຍເປັນພາກສ່ວນໜຶ່ງໃນຜັນທະສັນຍາຂອງເຄື່ອງມືທາງການເງິນ. ນີ້ລວມທັງ "ວິທີການຄ້າປົກກະຕິ" - ການຊື້ ຫຼື ການຂາຍຂອງຊັບສິນທາງການເງິນ ທີ່ຮຽກຮ້ອງໃຫ້ມີການນຳສົ່ງຕາມກຳນົດເວລາທີ່ໄດ້ຖືກກຳນົດໂດຍກົດໝາຍ ຫຼື ລະບຽບການເງິນໃນສະຖານທີ່ຊື້ຂາຍ. ໜີ້ຕ້ອງຮັບສັນຍາເຊົ່າຊື້ ແມ່ນໄດ້ຖືກຮັບຮູ້ເມື່ອເງິນໄດ້ຖືກໂອນເຂົ້າບັນຊີເພື່ອຊຳລະຄ່າງວດພາຍໃຕ້ສັນຍາເຊົ່າຊື້.

5.2.2 *ການອັດແທກເບື້ອງຕົ້ນຂອງເຄື່ອງມືທາງການເງິນ*

ການຈັດປະເພດເຄື່ອງມືທາງການເງິນຕາມການຮັບຮູ້ມູນຄ່າເບື້ອງຕົ້ນ ແມ່ນຂຶ້ນກັບລັກສະນະຂອງເຄື່ອງມືທາງການເງິນ ແລະ ຈຸດປະສົງຂອງຄະນະບໍລິຫານຕໍ່ເຄື່ອງມືທາງການເງິນທີ່ຕ້ອງການ. ເຄື່ອງມືທາງການເງິນທັງໝົດແມ່ນຖືກຕີມູນຄ່າໃນເບື້ອງຕົ້ນຕາມມູນຄ່າຍຸຕິທຳບວກກັບລາຍຈ່າຍທີ່ເກີດຈາກການຊື້, ຍົກເວັ້ນໃນກໍລະນີຂອງຊັບສິນ ແລະ ໜີ້ສິນທາງການເງິນທີ່ມູນຄ່າຍຸຕິທຳຖືກບັນທຶກໂດຍຜ່ານກຳໄລ ຫຼື ຂາດທຶນ.

5.2.3 *ວິທີການຄິດໄລ່ອັດຕາດອກເບ້ຍທີ່ແທ້ຈິງ*

ອັດຕາດອກເບ້ຍທີ່ແທ້ຈິງ (EIR) ແມ່ນອັດຕາສ່ວນຫຼຸດຕົວຈິງທີ່ໄດ້ຈາກການຄາດຄະເນການຊຳລະເງິນສົດໃນອະນາຄົດ ຫຼື ລາຍຮັບຕາມອາຍຸການທີ່ໄດ້ຄາດຄະເນຂອງເຄື່ອງມືການເງິນ ຫຼື ໄລຍະສັ້ນກວ່າທີ່ຍອມຮັບໄດ້ຂອງ ຍອດຍົກມາສຸດທິຂອງຊັບສິນ ຫຼື ໜີ້ສິນທາງການເງິນ. ຄ່າເສື່ອມຕົ້ນທຶນຂອງຊັບສິນ ຫຼື ໜີ້ສິນທາງການເງິນແມ່ນຖືກດັດແກ້ ເມື່ອບໍລິສັດໄດ້ແກ້ໄຂການຄາດຄະເນລາຍຮັບ ຫຼື ລາຍຈ່າຍຂອງບໍລິສັດ ໂດຍຖືກຄິດໄລ່ໂດຍນຳໃຊ້ອັດຕາດອກເບ້ຍຕົວຈິງ ແລະ ສ່ວນຜິດຕ່ຽງຂອງມູນຄ່າດັ່ງກ່າວຈະຖືກບັນທຶກເປັນ 'ດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືດອກເບ້ຍ' ສຳລັບຊັບສິນທາງການເງິນ ແລະ 'ດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືດອກເບ້ຍ' ສຳລັບໜີ້ສິນທາງການເງິນ. ນະໂຍບາຍການບັນຊີສຳລັບວິທີ EIR ແມ່ນມີຄວາມແຕກຕ່າງຕາມແຕ່ລະປະເພດຂອງການນຳໃຊ້ເຄື່ອງມື ເຊິ່ງໄດ້ອະທິບາຍເພີ່ມເຕີມໃນບົດອະທິບາຍເລກທີ:

- 5.2.5 ສຳລັບ 'ໜີ້ຕ້ອງຮັບການເຊົ່າ'
- 5.2.6 ສຳລັບ 'ການກູ້ຢືມ'
- 5.4 ສຳລັບ 'ການເສື່ອມມູນຄ່າຂອງຊັບສິນທາງການເງິນ'
- 5.5 ສຳລັບ 'ການຮັບຮູ້ລາຍຮັບ ແລະ ລາຍຈ່າຍ'

5. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

5.2 ເຄື່ອງມືທາງດ້ານການເງິນ - ການຮັບຮູ້ໃນເບື້ອງຕົ້ນ ແລະ ການຕີມູນຄ່າຕາມພາຍຫຼັງ (ຕໍ່)

5.2.4 'ມື້ທີ 1' ກຳໄລ ຫຼື ຂາດທຶນ

ເມື່ອລາຄາໃນມື້ທີ່ການເຄື່ອນໄຫວເກີດຂຶ້ນ ຕ່າງຈາກມູນຄ່ຍຸຕິທຳຂອງລາຄາຕາມທ້ອງຕະຫຼາດໃນປັດຈຸບັນ ຂອງເຄື່ອງມືການເງິນອັນດຽວກັນ ຫຼື ອີງຕາມມູນຄ່າທີ່ໄດ້ສຳຫຼວດໃນຕະຫຼາດ, ບໍລິສັດຮັບຮູ້ສ່ວນຜິດຕ່ຽງລະຫວ່າງລາຄາໃນມື້ທີ່ການເຄື່ອນໄຫວເກີດຂຶ້ນ ແລະ ມູນຄ່ຍຸຕິທຳ ('ມື້ທີ 1' ກຳໄລ ຫຼື ຂາດທຶນ) ໃນ "ລາຍຮັບສຸດທິຈາກການຄ້າ". ໃນກໍລະນີທີ່ມູນຄ່ຍຸຕິທຳຖືກຳນົດຕາມຖານຂໍ້ມູນທີ່ບໍ່ໄດ້ຖືກສຳຫຼວດ, ສ່ວນຜິດຕ່ຽງລະຫວ່າງລາຄາໃນມື້ທີ່ການເຄື່ອນໄຫວເກີດຂຶ້ນ ແລະ ມູນຄ່າທີ່ໄດ້ຈາກນຳໃຊ້ເຕັກນິກການຕີມູນຄ່າດັ່ງກ່າວ ແມ່ນຈະຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານກໍ່ຕໍ່ເມື່ອຂໍ້ມູນສາມາດຊອກຫາໄດ້ ຫຼື ເມື່ອເຄື່ອງມືການເງິນບໍ່ຖືກຮັບຮູ້.

5.2.5 ໜີ້ຕ້ອງຮັບການເຊົ່າ

ໜີ້ຕ້ອງຮັບການເຊົ່າແມ່ນໄດ້ຖືກຈັດເປັນປະເພດ "ເງິນໃຫ້ກູ້ຢືມ ແລະ ໜີ້ຕ້ອງຮັບ" ອີງຕາມມາດຕະຖານບັນຊີສາກົນ ເລກທີ 39. ຫຼັງຈາກການວັດມູນຄ່າເບື້ອງຕົ້ນ "ໜີ້ຕ້ອງຮັບການເຊົ່າ" ແມ່ນຈະວັດມູນຄ່າຕາມຕົ້ນທຶນຄ່າເສື່ອມໂດຍການໃຊ້ວິທີອັດຕາດອກເບ້ຍທີ່ແທ້ຈິງ, ຫັກເງິນແຮະຂອງການເສື່ອມມູນຄ່າ. ຕົ້ນທຶນຂອງຄ່າເສື່ອມ ແມ່ນຄິດໄລ່ໂດຍຄຳນຶງເຖິງສ່ວນຫຼຸດ ແລະ ສ່ວນເກີນມູນຄ່າໃນສ່ວນທີ່ໄດ້ມາ ແລະ ຄ່າທຳນຽມ ແລະ ຄ່າໃຊ້ຈ່າຍ ທີ່ເປັນສ່ວນໜຶ່ງຂອງອັດຕາດອກເບ້ຍທີ່ແທ້ຈິງ. ດັ່ງນັ້ນ, ບໍລິສັດຈຶ່ງຮັບຮູ້ລາຍຮັບດອກເບ້ຍ ໂດຍນຳໃຊ້ອັດຕາຜົນຕອບແທນ ທີ່ສະແດງການຄາດການທີ່ສົມເຫດສົມຜົນທີ່ສຸດໃນການປະເມີນອັດຕາຄົງທີ່ຂອງຜົນຕອບແທນ ແລະ ອາຍຸການໃຫ້ສິນເຊື່ອທີ່ຄາດວ່າອາດຈະສູງກວ່າທີ່ຄາດຄະເນໄວ້, ພຶດຕິກຳຂອງລູກໜີ້, ດ້ວຍເຫດນີ້, ການຮັບຮູ້ ຜົນກະທົບທີ່ອາດແຕກຕ່າງກັນໃນແຕ່ລະຊ່ວງເວລາ ແລະ ລັກສະນະອື່ນໆຂອງວົງຈອນຜະລິດຕະພັນ (ການຈ່າຍລ່ວງໜ້າ, ຄ່າປັບໃໝດອກເບ້ຍ ແລະ ຄ່າທຳນຽມ).

ຖ້າການຄາດຄະເນຕ່າງໆຖືກທົບທວນຄືນ ການດັດແກ້ແມ່ນຖືກຈັດເປັນທາງບວກ ຫຼື ທາງລົບ, ການດັດແກ້ມູນຄ່າຕາມບັນຊີຢູ່ໃນໃບລາຍງານຖານະການເງິນດ້ວຍການເພີ່ມຂຶ້ນ ຫຼື ຫຼຸດລົງຂອງລາຍຮັບດອກເບ້ຍ. ການດັດແກ້ແມ່ນຈະຫັກຄ່າເສື່ອມໃນພາຍຫຼັງ ຕະຫຼອດຮອດລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນໃນໃບລາຍງານຜົນການດຳເນີນງານ.

5.2.6 ການກູ້ຢືມ

"ການກູ້ຢືມ" ແມ່ນລວມທັງຂໍ້ຕົກລົງໃນສັນຍາທີ່ມີຜົນເຮັດໃຫ້ບໍລິສັດມີພາລະຜູກພັນທີ່ຈະຕ້ອງສົ່ງມອບເງິນສົດ ຫຼື ຊັບສິນທາງການເງິນອື່ນໆໃຫ້ແກ່ເຈົ້າໜີ້.

ພາຍຫຼັງຈາກການວັດຜົນເບື້ອງຕົ້ນ, "ການກູ້ຢືມ" ແມ່ນຖືກປະເມີນຕາມຜົນທີ່ໄດ້ມາຂອງຕົ້ນທຶນຄ່າເສື່ອມມູນຄ່າດ້ວຍການໃຊ້ວິທີອັດຕາດອກເບ້ຍທີ່ແທ້ຈິງ. ຕົ້ນທຶນຄ່າເສື່ອມແມ່ນຖືກຄິດໄລ່ໂດຍຄຳນຶງເຖິງ ການຄຳນວນດ້ານສ່ວນຫຼຸດ ຫຼື ສ່ວນເກີນມູນຄ່າທີ່ເປັນຄ່າໃຊ້ຈ່າຍທີ່ເປັນສ່ວນໜຶ່ງຂອງອັດຕາດອກເບ້ຍທີ່ແທ້ຈິງ.

5. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

5.2 ເຄື່ອງມືທາງດ້ານການເງິນ - ການຮັບຮູ້ໃນເບື້ອງຕົ້ນ ແລະ ການຕີມູນຄ່າຕາມພາຍຫຼັງ (ຕໍ່)

5.2.7 ການຈັດປະເພດຄືນໃໝ່ຂອງຊັບສິນທາງການເງິນ

ພິນບັງຄັບໃຊ້ຈາກວັນທີ 1 ກໍລະກົດ 2008, ທາງບໍລິສັດໄດ້ຖືກອະນຸຍາດໃຫ້ຈັດປະເພດຄືນໃໝ່, ໃນບາງສະຖານະການ, ຊັບສິນທີ່ບໍ່ແມ່ນອະນຸພັນທາງການເງິນນອກເໜືອຈາກປະເພດ 'ຖືໄວ້ເພື່ອຄ້າ' ແລະ ກ້າວໄປສູ່ປະເພດ 'ມີໄວ້ເພື່ອຂາຍ', 'ເງິນກູ້ ແລະ ໜີ້ຕ້ອງຮັບ' ຫຼື ' ຖືໄວ້ຈົນຄົບກຳນົດ'. ໃນປັດຈຸບັນນີ້, ກໍຍັງໄດ້ຖືກອະນຸຍາດໃຫ້ຈັດຄືນປະເພດຊັບສິນ, ໃນບາງສະຖານະການ, ເຄື່ອງມືທາງການເງິນນອກເໜືອຈາກປະເພດ 'ມີໄວ້ເພື່ອຂາຍ' ແລະ ກາຍເປັນປະເພດ 'ເງິນກູ້ ແລະ ໜີ້ຕ້ອງຮັບ' ການຈັດປະເພດຄືນແມ່ນໄດ້ຖືກບັນທຶກໃນມູນຄ່າຍຸຕິທຳໃນວັນທີເຮັດການຈັດປະເພດຄືນ ເຊິ່ງກາຍມາເປັນຄ່າເສື່ອມມູນຄ່າອັນໃໝ່.

ສຳລັບຊັບສິນທາງການເງິນທີ່ໄດ້ຈັດປະເພດຄືນນອກເໜືອຈາກປະເພດ 'ມີໄວ້ເພື່ອຂາຍ', ຜົນກຳໄລ ຫຼື ຂາດທຶນທີ່ຊັບສິນໄດ້ຖືກຮັບຮູ້ໃນຮູບແບບສ່ວນຂອງເຈົ້າຂອງແມ່ນໄດ້ຫັກອອກເປັນກຳໄລ ຫຼື ຂາດທຶນ ຕະຫຼອດອາຍຸທີ່ຍັງເຫຼືອຂອງການລົງທຶນໂດຍການໃຊ້ວິທີອັດຕາດອກເບ້ຍທີ່ແທ້ຈິງ. ຄວາມແຕກຕ່າງລະຫວ່າງມູນຄ່າເສື່ອມອັນໃໝ່ ແລະ ການຄາດຄະເນກະແສເງິນສົດແມ່ນຖືກຫັກອອກເກີນອາຍຸຍັງເຫຼືອຂອງຊັບສິນໂດຍການໃຊ້ວິທີອັດຕາດອກເບ້ຍທີ່ແທ້ຈິງ. ຖ້າຊັບສິນໄດ້ຖືກກຳນົດໃນພາຍຫຼັງນັ້ນເກີດຄວາມບົກພ່ອງ, ມູນຄ່າທີ່ໄດ້ບັນທຶກໃນສ່ວນຂອງເຈົ້າຂອງແມ່ນຈະຖືກເອົາກັບນຳມາໃຊ້ໃນໃບລາຍງານຜົນການດຳເນີນງານ.

ໃນສະຖານະການທີ່ເກີດຂຶ້ນຍາກ, ບໍລິສັດອາດຈັດຄືນປະເພດຊັບສິນທີ່ບໍ່ແມ່ນອະນຸພັນທາງການຄ້າອອກຈາກປະເພດຊັບສິນ 'ຖືໄວ້ເພື່ອຄ້າ' ແລະ ກາຍເປັນປະເພດ 'ເງິນກູ້ ແລະ ໜີ້ຕ້ອງຮັບ' ຖ້າກົງກັບຄວາມໝາຍຂອງເງິນກູ້ ແລະ ໜີ້ຕ້ອງຮັບ ແລະບໍລິສັດຈະມີເຈດຕະນາ ແລະ ຄວາມສາມາດທີ່ຈະຖືຊັບສິນທາງການເງິນເພື່ອຄາດຄະເນອະນາຄົດລ່ວງໜ້າ ຫຼື ຈົນກວ່າຮອດກຳນົດ. ຖ້າຊັບສິນທາງການເງິນຖືກຈັດປະເພດຄືນ ແລະ ຖ້າບໍລິສັດເພີ່ມຄ່າທີ່ປະເມີນສູງຂຶ້ນໃນອະນາຄົດ ເງິນສິດຮັບທີ່ເປັນຜົນຈາກການເພີ່ມຂຶ້ນຄືນຂອງບັນດາເງິນສິດຮັບ, ຜົນຂອງການເພີ່ມຂຶ້ນໄດ້ຖືກຮັບຮູ້ເປັນການດັດແກ້ເພື່ອໃຫ້ສອດຄ່ອງກັບວິທີອັດຕາດອກເບ້ຍທີ່ແທ້ຈິງນັບຈາກວັນທີທີ່ມີການປ່ຽນແປງການຕີລາຄາຊັບສິນ

ການຈັດປະເພດຄືນແມ່ນຂຶ້ນຢູ່ທີ່ການເລືອກເຟັ້ນຂອງຄະນະອຳນວຍການ, ແລະ ຖືກກຳນົດເປັນເຄື່ອງມືອັນໜຶ່ງໂດຍພື້ນຖານຂອງເຄື່ອງມືທາງການເງິນ.

5. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

5.3 *ການບໍ່ຮັບຮູ້ເປັນຊັບສິນ ແລະ ໜີ້ສິນທາງການເງິນ*

5.3.1 ຊັບສິນທາງການເງິນ

ຊັບສິນທາງການເງິນ (ຫຼື ສິ່ງທີ່ສາມາດປັບໃຊ້ໄດ້ທີ່ເປັນສ່ວນຂອງຊັບສິນທາງການເງິນ ຫຼື ພາກສ່ວນຂອງກຸ່ມຊັບສິນທາງການເງິນທີ່ຄ້າຍຄືກັນ) ແມ່ນບໍ່ຖືກຮັບຮູ້ ເມື່ອສິດໃນການຮັບກະແສເງິນສົດຈາກຊັບສິນໄດ້ໝົດອາຍຸແລ້ວ. ບໍລິສັດຍັງໄດ້ຕັດລາຍການຊັບສິນອອກຫາກໄດ້ໂອນຊັບສິນທັງໝົດ ແລະ ການໂອນທີ່ໄດ້ຮັບຄ່າເສື່ອມມູນຄ່າ.

ບໍລິສັດໄດ້ໂອນຊັບສິນໃນກໍລະນີໃດກໍລະນີໜຶ່ງດັ່ງນີ້:

- ບໍລິສັດໄດ້ໂອນສິດຕາມສັນຍາເພື່ອຮັບກະແສເງິນສົດຈາກຊັບສິນ;
  ຫຼື
- ບໍລິສັດຮັກສາສິດໃນກະແສເງິນສົດ ແຕ່ມີພາລະຜູກພັນທີ່ຈະຕ້ອງຈ່າຍກະແສເງິນສົດຢ່າງເຕັມທີ່ໂດຍບໍ່ຕ້ອງມີຄວາມລ່າຊ້າຕໍ່ບຸກຄົນທີສາມພາຍໃຕ້ຂໍ້ຕົກລົງ.

ການເຮັດສັນຍາຜ່ານບໍລິສັດຖືວ່າເປັນລາຍການທີ່ເກີດຂຶ້ນ ເມື່ອບໍລິສັດຍັງຄົງມີສິດຕາມສັນຍາຮັບກະແສເງິນສົດຂອງຊັບສິນທາງການເງິນ (ຊັບສິນເດີມ) ແຕ່ຕ້ອງຮັບພາລະຜູກພັນຕາມສັນຍາໂດຍການຈ່າຍກະແສເງິນສົດດັ່ງກ່າວໃຫ້ກັບກິດຈະການໜຶ່ງ ຫຼື ຫຼາຍກິດຈະການ (ຜູ້ຮັບໃນທ້າຍທີ່ສຸດ) ເມື່ອເງື່ອນໄຂບາງຢ່າງເປັນໄປຕາມນັ້ນ. ວັນທີ 31 ທັນວາ 2020, ບໍລິສັດບໍ່ມີຊັບສິນທາງການເງິນທີ່ຈະເຮັດໃຫ້ມີເງື່ອນໄຂກ່ຽວກັບຂໍ້ຕົກລົງດັ່ງກ່າວ.

ການໂອນຈະມີຄຸນສົມບັດຕ່າງໆດັ່ງນີ້ສຳລັບການບໍ່ຮັບຮູ້ເປັນຊັບສິນ:

- ບໍລິສັດໄດ້ໂອນຄວາມສ່ຽງ ແລະ ຜົນຕອບແທນທັງໝົດຂອງຊັບສິນຢ່າງມີສາລະສຳຄັນ;
  ຫຼື
- ບໍລິສັດບໍ່ໄດ້ໂອນຍ້າຍ ຫຼື ຮັກສາໄວ້ກ່ຽວກັບຄວາມສ່ຽງ ແລະ ຜົນຕອບແທນທັງໝົດຂອງຊັບສິນ ແຕ່ໄດ້ໂອນການຄວບຄຸມຂອງຊັບສິນແລ້ວ.

ໃນສ່ວນທີ່ກ່າວມາຂ້າງເທິງນັ້ນ, ບໍລິສັດຈະພິຈາລະນາການຄວບຄຸມໃຫ້ເປັນການໂອນໃນສະເພາະກໍລະນີທີ່ຜູ້ຮັບໂອນມີຄວາມສາມາດໃນທາງປະຕິບັດໃນການຂາຍຊັບສິນທັງໝົດໃຫ້ບຸກຄົນທີສາມທີ່ບໍ່ມີສ່ວນກ່ຽວຂ້ອງ ແລະ ສາມາດໃຊ້ຄວາມສາມາດນີ້ພຽງຝ່າຍດຽວໂດຍບໍ່ຕ້ອງກຳນົດຂໍ້ຈຳກັດເພີ່ມເຕີມກ່ຽວກັບການໂອນ.

ເມື່ອບໍລິສັດໄດ້ໂອນສິດໃນການຮັບກະແສເງິນສົດຈາກຊັບສິນ ຫຼື ໄດ້ເຮັດສັນຍາເຊົ່າຊື້ເປັນທີ່ຮຽບຮ້ອຍແລ້ວ, ແລະ ບໍ່ໄດ້ໂອນ ຫຼື ຮັບຄວາມສ່ຽງທັງໝົດໄວ້ ແລະ ຜົນຕອບແທນຂອງຊັບສິນ ຕະຫຼອດຮອດການທີ່ບໍ່ໄດ້ໂອນການຄວບຄຸມຂອງຊັບສິນ, ໃນກໍລະນີທີ່ກ່າວນັ້ນ, ບໍລິສັດກໍຈະຮັບຮູ້ໜີ້ສິນທີ່ກ່ຽວຂ້ອງດ້ວຍເຊັ່ນກັນ. ຊັບສິນທີ່ໂອນ ແລະ ໜີ້ສິນທີ່ກ່ຽວຂ້ອງໄດ້ວັດມູນຄ່າຕາມເກນທີ່ສະທ້ອນເຖິງສິດທິ ແລະ ພາລະຜູກພັນທີ່ບໍລິສັດຖືຢູ່.

ການມີສ່ວນຮ່ວມຢ່າງຕໍ່ເນື່ອງເຊິ່ງຖືເປັນຮູບແບບການຮັບປະກັນຂອງຊັບສິນທີ່ໂອນໄປແມ່ນຈະວັດດ້ວຍມູນຄ່າທີ່ຕ່ຳກວ່າຂອງມູນຄ່າຕາມບັນຊີຂອງຊັບສິນ ແລະ ຈຳນວນເງິນສູງສຸດທີ່ບໍລິສັດຈະຕ້ອງຊຳລະ.

ບໍລິສັດຈະບໍ່ຮັບຮູ້ຊັບສິນທາງການເງິນ, ໂດຍສະເພາະ ເງິນກູ້ໃຫ້ລູກຄ້າ ເມື່ອເງື່ອນໄຂ ແລະ ຂໍ້ຕົກລົງດັ່ງກ່າວໄດ້ຮັບການເຈລະຈາກັນໃໝ່ໃນສ່ວນທີ່ເປັນເງິນກູ້ຈອດໃໝ່, ດ້ວຍການມີຜົນທີ່ແຕກຕ່າງກັນນັ້ນຈະຖືກຮັບຮູ້ເປັນລາຍການຂາດທຶນຈາກການເສື່ອມມູນຄ່າໃນໃບລາຍງານຜົນການດຳເນີນງານ.

5. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

5.3 ການບໍ່ຮັບຮູ້ເປັນຊັບສິນ ແລະ ໜີ້ສິນທາງການເງິນ (ຕໍ່)

5.3.2 ໜີ້ສິນທາງການເງິນ

ໜີ້ສິນທາງການເງິນຈະຖືກຫັກອອກຈາກບັນຊີເມື່ອພັນທະຜູກພັນຂອງໜີ້ສິນນັ້ນໄດ້ຖືກຊຳລະ ຫຼື ຍົກເລີກ ຫຼື ໝົດອາຍຸ. ໃນກໍລະນີທີ່ຄວາມຄວາມຜິດຊອບຕໍ່ໜີ້ສິນທາງການເງິນທີ່ມີຢູ່ໄດ້ຮັບການແທນທີ່ຈາກຜູ້ໃຫ້ກູ້ລາຍດຽວກັນໃນເງື່ອນໄຂທີ່ແຕກຕ່າງກັນຫຼາຍ ຫຼື ຂໍ້ກຳນົດຂອງໜີ້ສິນທີ່ມີຢູ່ໄດ້ຮັບການແກ້ໄຂຢ່າງຫຼວງຫຼາຍ, ການດັດແປງ ຫຼື ການແກ້ໄຂດັ່ງກ່າວຖືວ່າເປັນການບໍ່ຮັບຮູ້ໜີ້ສິນເດີມ ແລະ ຈະເປັນການຮັບຮູ້ໜີ້ສິນໃໝ່. ຜົນຕ່າງລະຫວ່າງມູນຄ່າຕາມບັນຊີຂອງໜີ້ສິນທາງການເງິນເດີມ ກັບ ມູນຄ່າທີ່ຊຳລະຈະຖືກຮັບຮູ້ໃນກຳໄລ ຫຼື ຂາດທຶນ.

5.4 ການເສື່ອມມູນຄ່າຂອງຊັບສິນທາງການເງິນ

5.4.1 ພາບລວມຂອງຫຼັກການໜີ້ເສຍທີ່ຄາດວ່າຈະເກີດ

ອີງຕາມບົດອະທິບາຍເລກທີ 4.1.1, ການໝຸນໃຊ້ IFRS 9 ເຂົ້າໃນການປ່ຽນແປງວິທີການຄິດໄລ່ຄ່າເສື່ອມໜີ້ເສຍຂອງບໍລິສັດ ໂດຍການປ່ຽນແທນ IAS 39 ຂອງວິທີການຄິດໄລ່ໜີ້ເສຍທີ່ເກີດຂຶ້ນກັບຂໍ້ມູນທີ່ເປັນການຄາດການລ່ວງໜ້າໃນວິທີການ ECL. ນັບຕັ້ງແຕ່ວັນທີ 1 ມັງກອນ 2020, ບໍລິສັດໄດ້ບັນທຶກເງິນແຮສຳລັບໜີ້ເສຍທາງສິນເຊື່ອທີ່ຄາດວ່າຈະເກີດຂຶ້ນໃນທຸກສັນຍາເງິນກູ້ ແລະ ໜີ້ສິນຂອງຊັບສິນທາງການເງິນອື່ນໆ ທີ່ບໍ່ໄດ້ລະບຸໄວ້ໃນ FVTPL ໃນພາກສ່ວນດັ່ງກ່າວນີ້ເອີ້ນວ່າ 'ເຄື່ອງມືທາງການເງິນ' ແລະ ປຽບທຽບຕົວເລກທີ່ມີການປັບປຸງຄືນໃໝ່.

ເງິນແຮຈາກໜີ້ເສຍທີ່ຄາດວ່າຈະເກີດ (ECL) ແມ່ນອີງຕາມການໜີ້ສິນຄາດວ່າຈະເສຍຕະຫຼອດອາຍຸຂອງຊັບສິນ (ຕະຫຼອດອາຍຸຂອງໜີ້ເສຍທີ່ຄາດວ່າຈະເກີດ), ຍົກເວັ້ນວ່າບໍ່ມີການເພີ່ມຂຶ້ນຢ່າງສຳຄັນໃນຄວາມສ່ຽງດ້ານສິນເຊື່ອນັບແຕ່ເລີ່ມຕົ້ນ, ເຊິ່ງໃນກໍລະນີນີ້, ເງິນແຮແມ່ນອີງໃສ່ໜີ້ເສຍທີ່ຄາດວ່າຈະເກີດໃນ 12 ເດືອນ ດັ່ງທີ່ໄດ້ລະບຸໃນບົດອະທິບາຍເລກທີ 5.4.2. ນະໂຍບາຍຂອງບໍລິສັດ ສຳລັບກຳນົດຖ້າມີການເພີ່ມຂຶ້ນຢ່າງສຳຄັນໃນຄວາມສ່ຽງສິນເຊື່ອແມ່ນໄດ້ອະທິບາຍໃນ ບົດອະທິບາຍເລກທີ 27.1.

ECL ຂອງ 12 ເດືອນ ແມ່ນສ່ວນໜຶ່ງຂອງອາຍຸຂອງ ECL ທີ່ໄດ້ສະແດງເຖິງ ECL ທີ່ມີຜົນມາຈາກການຜິດນັດຊຳລະໃນເຄື່ອງມືທາງການເງິນທີ່ເປັນໄປໄດ້ພາຍໃນ 12 ເດືອນຫຼັງຈາກວັນທີລາຍງານ.

ທັງ ECL ຕະຫຼອດອາຍຸ ແລະ ECL ຂອງ 12 ເດືອນ ແມ່ນຖືກຄິດໄລ່ບໍ່ວ່າຈະເປັນ ພື້ນຖານແບບບຸກຄົນ ຫຼື ແບບກຸ່ມ, ຂຶ້ນກັບລັກສະນະຂອງກຸ່ມຫຼັກຊັບຂອງເຄື່ອງມືທາງການເງິນທີ່ນຳມາຄິດໄລ່.

ບໍລິສັດໄດ້ສ້າງນະໂຍບາຍເພື່ອທີ່ຈະປະຕິບັດການປະເມີນ ໃນແຕ່ລະທ້າຍຂອງໄລຍະການລາຍງານ ວ່າຄວາມສ່ຽງສິນເຊື່ອຂອງເຄື່ອງມືທາງການເງິນມີການເພີ່ມຂຶ້ນຢ່າງສຳຄັນ ຫຼື ບໍ່ ນັບຕັ້ງແຕ່ການຮັບຮູ້ຄັ້ງທຳອິດ, ໂດຍການພິຈາລະນາສ່ວນປ່ຽນແປງໃນຄວາມສ່ຽງຂອງການຜິດນັດຊຳລະທີ່ເກີດຂຶ້ນຕະຫຼອດອາຍຸຂອງເຄື່ອງມືທາງການເງິນທີ່ເຫຼືອຢູ່. ເຊິ່ງໄດ້ອະທິບາຍລະອຽດເພີ່ມເຕີມໃນບົດອະທິບາຍເລກທີ 27.1.

5. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

5.4 ການເສື່ອມມູນຄ່າຂອງຊັບສິນທາງການເງິນ (ຕໍ່)

5.4.1 ພາບລວມຂອງຫຼັກການໜີ້ເສຍທີ່ຄາດວ່າຈະເກີດ (ຕໍ່)

ໂດຍອີງຕາມຂັ້ນຕອນທາງເທິງ, ບໍລິສັດໄດ້ຈັດກຸ່ມເງິນກູ້ເປັນ ຂັ້ນທີ 1, ຂັ້ນທີ 2, ຂັ້ນທີ 3 ແລະ ຊັບສິນທາງດ້ານການເງິນທີ່ມີຄ່າເສື່ອມມູນຄ່າທາງສິນເຊື່ອຕັ້ງແຕ່ເມື່ອເລີ່ມຊື້ ຫຼື ໄດ້ມາ (POCI), ເຊິ່ງໄດ້ອະທິບາຍດັ່ງລຸ່ມນີ້:

- ຂັ້ນທີ 1 ເມື່ອເງິນກູ້ຖືກຮັບຮູ້ຄັ້ງທຳອິດ, ບໍລິສັດຮັບຮູ້ເງິນແຮອີງໃສ່ ECL ຂອງ 12 ເດືອນ. ເງິນກູ້ຂັ້ນທີ 1 ຍັງໄດ້ລວມເອົາສິ່ງທີ່ເອື້ອອຳນວຍຄວາມສ່ຽງສິນເຊື່ອໄດ້ປັບປຸງ ແລະ ເງິນກູ້ໄດ້ຖືກຈັດປະເພດຄືນໃໝ່ຈາກ ຂັ້ນທີ 2.
- ຂັ້ນທີ 2 ເມື່ອເງິນກູ້ໄດ້ສະແດງການເພີ່ມຂຶ້ນຢ່າງສຳຄັນໃນຄວາມສ່ຽງສິນເຊື່ອນັບຕັ້ງແຕ່ເລີ່ມປ່ອຍສິນເຊື່ອ, ບໍລິສັດບັນທຶກເງິນແຮສຳລັບ ECL ຕະຫຼອດອາຍຸ. ເງິນກູ້ ຂັ້ນທີ 2 ແມ່ນຍັງໄດ້ລວມເອົາສິ່ງທີ່ເອື້ອອຳນວຍຄວາມສ່ຽງສິນເຊື່ອໄດ້ປັບປຸງ ແລະ ເງິນກູ້ໄດ້ຖືກຈັດປະເພດຄືນໃໝ່ຈາກ ຂັ້ນທີ 3.
- ຂັ້ນທີ 3 ເງິນກູ້ທີ່ຖືກພິຈາລະນາຄ່າເສື່ອມສິນເຊື່ອ (ດັ່ງທີ່ໄດ້ອະທິບາຍໃນບົດອະທິບາຍເລກທີ 27.1.). ບໍລິສັດບັນທຶກເງິນແຮຂອງໜີ້ເສຍທີ່ຄາດວ່າຈະເກີດຕະຫຼອດອາຍຸ.

ສຳລັບຊັບສິນທາງດ້ານການເງິນທີ່ບໍລິສັດບໍ່ມີການຄາດການທີ່ສົມເຫດສົມຜົນ ໃນການກູ້ຄືນບໍ່ວ່າຈະປັນມູນຄ່າຄົງຄ້າງທັງໝົດ ຫຼື ຕາມສັດສ່ວນ ສະນັ້ນ, ມູນຄ່າຕາມບັນຊີຂັ້ນຕົ້ນຂອງຊັບສິນທາງດ້ານການເງິນຈະຖືກຫຼຸດລົງ. ເຊິ່ງນີ້ເປັນການຢຸດຮັບຮູ້ຊັບສິນທາງດ້ານການເງິນ (ບາງສ່ວນ).

5. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

5.4 ການເສື່ອມມູນຄ່າຂອງຊັບສິນທາງການເງິນ (ຕໍ່)

5.4.2 *ການຄິດໄລ່ໜີ້ເສຍທີ່ຄາດວ່າຈະເກີດ*

ບໍລິສັດຄິດໄລ່ ECL ໂດຍອີງໃສ່ແບບຖ່ວງນ້ຳໜັກສະຖານະການຄວາມອາດຈະເປັນໄປໄດ້ 3 ກໍລະນີ ເພື່ອວັດແທກການຂາດແຄນເງິນສົດທີ່ຄາດວ່າຈະເກີດ, ອັດຕາສ່ວນຫຼຸດໂດຍປະມານຕໍ່ອັດຕາດອກເບ້ຍທີ່ແທ້ຈິງ. ການຂາດແຄນເງິນສົດແມ່ນສ່ວນຕ່າງລະຫວ່າງກະແສເງິນສົດທີ່ຄົບກຳນົດຕາມສັນຍາ ແລະ ກະແສເງິນສົດທີ່ບໍລິສັດຄາດວ່າຈະໄດ້ຮັບ.

ກົນໄກຂອງການຄຳນວນ ECL ແມ່ນຖືກສະແດງຢູ່ດ້ານລຸ່ມ ແລະ ມີອົງປະກອບທີ່ສຳຄັນ ດັ່ງລຸ່ມນີ້:

- ຄວາມອາດຈະເປັນໄປໄດ້ໃນການຜິດນັດຊຳລະ ("PD") — ຄວາມອາດຈະເປັນໄປໄດ້ໃນການຜິດນັດຊຳລະແມ່ນການຄາດຄະເນຄວາມອາດຈະເປັນໄປໄດ້ຂອງການຜິດນັດຊຳລະໃນຕະຫຼອດຊ່ວງເວລາທີ່ກຳນົດ. ການຜິດນັດຊຳລະອາດຈະເກີດຂຶ້ນໃນຊ່ວງເວລາທີ່ແນ່ນອນໃດໜຶ່ງຕະຫຼອດໄລຍະການປະເມີນ, ຖ້າຫາກວ່າຄວາມສິ່ງທີ່ເອື້ອອຳນວຍບໍ່ໄດ້ຖືກຢຸດຮັບຮູ້ໃນກ່ອນໜ້າ ແລະ ຍັງມີຢູ່ໃນກຸ່ມຫຼັກຊັບ. ແນວຄວາມຄິດຂອງຄວາມອາດຈະເປັນໄປໄດ້ໃນການຜິດນັດຊຳລະແມ່ນຖືກອະທິບາຍເພີ່ມເຕີມໃນບົດອະທິບາຍເລກທີ 27.1.
- ຍອດໜີ້ເມື່ອຜິດນັດຊຳລະ ("EAD") — ຍອດໜີ້ເມື່ອຜິດນັດຊຳລະ ແມ່ນການປະມານການຍອດນີ້ໃນອັນທີຜິດນັດຊຳລະໃນອະນາຄົດ, ໂດຍພິຈາລະນາສ່ວນປ່ຽນແປງທີ່ຄາດການໄວ້ໃນຍອດໜີ້ຫຼັງຈາກມື້ລາຍງານ ເຊິ່ງລວມເອົາການຊຳລະຄືນທັງເງິນຕົ້ນ ແລະ ດອກເບ້ຍ, ບໍ່ວ່າຈະຕາມກຳນົດໃນສັນຍາ ຫຼື ບໍ່ກໍຕາມ, ການເບີກຖອນທີ່ຄາດການໄວ້, ແລະ ດອກເບ້ຍຄ້າງຈ່າຍຈາກການຜິດນັດຊຳລະ. EAD ແມ່ນຖືກອະທິບາຍເພີ່ມເຕີມໃນບົດອະທິບາຍເລກທີ 25.
- ຄວາມເສຍຫາຍທີ່ເກີດຂຶ້ນເມື່ອຜິດນັດຊຳລະ ("LGD") — ຄວາມເສຍຫາຍທີ່ເກີດຂຶ້ນເມື່ອຜິດນັດຊຳລະແມ່ນການປະມານການຄວາມເສຍຫາຍທີ່ມາຈາກກໍລະນີທີ່ການຜິດນັດຊຳລະເກີດຂຶ້ນໃນເວລາທີ່ກຳນົດ. ເຊິ່ງຂຶ້ນກັບສ່ວນຕ່າງລະຫວ່າງກະແສເງິນສົດຕາມສັນຍາທີ່ຄົບກຳນົດ ແລະ ບັນດາມູນຄ່າຕ່າງໆ ທີ່ຜູ້ໃຫ້ກູ້ຢືມຄາດວ່າຈະໄດ້ຮັບ, ເຊິ່ງລວມຈາກການຮັບຮູ້ບັນດາຫຼັກຊັບຄ้ำປะกัน ต่างๆ. ໂດຍປົກກະຕິ LGD ແມ່ນຖືກສະແດງເປັນອັດຕາສ່ວນຮ້ອຍຂອງ EAD. LGD ແມ່ນຖືກອະທິບາຍເພີ່ມເຕີມໃນບົດອະທິບາຍເລກທີ 27.1

ເມື່ອຄາດຄະເນໜີ້ເສຍທີ່ອາດຈະເກີດ, ບໍລິສັດພິຈະລະນາຈາກ 2 ຫາ 3 ສະຖານະການ (ກໍລະນີປົກກະຕິ, ກໍລະນີທີ່ດີ ແລະ ກໍລະນີຮ້າຍແຮງ). ສະຖານະການເຫຼົ່ານີ້ ແມ່ນກ່ຽວພັນກັບຄ່າຂອງ PDs, EADs ແລະ LGDs ທີ່ແຕກຕ່າງກັນ. ເມື່ອມີການກ່ຽວຂ້ອງກັນ, ການປະເມີນຫຼາຍໆກໍລະນີແມ່ນຖືກລວມເຂົ້າກັນກັບວິທີທີ່ແຕ່ລະເງິນກູ້ທີ່ມີຄວາມສຳຄັນທີ່ຖືກຄາດວ່າຈະຖືກຟື້ນຟູ ເຊິ່ງລວມເອົາຄວາມອາດຈະເປັນໄປໄດ້ທີ່ເງິນກູ້ຈະຖືກຊຳລະຄືນຢ່າງກົງເວລາ ແລະ ມູນຄ່າຂອງຫຼັກຊັບค้ำประกัน ຫຼື ມູນຄ່າທີ່ອາດຈະໄດ້ຮັບສຳລັບການຂາຍຊັບສິນ.

ຂາດທຶນຄ່າເສື່ອມມູນຄ່າ ແລະ ການສູນເສຍຈະຖືກບັນທຶກ ແລະ ສະເໜີແຍກຕ່າງຫາກຈາກການດັດແກ້ກຳໄລ ຫຼື ຂາດທຶນທີ່ເກີດຈາກການດັດແກ້ມູນຄ່າຕາມບັນຊີລວມຂອງຊັບສິນທາງດ້ານການເງິນ.

5. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

5.4 ການເສື່ອມມູນຄ່າຂອງຊັບສິນທາງການເງິນ (ຕໍ່)

5.4.2 *ການຄິດໄລ່ໜີ້ເສຍທີ່ຄາດວ່າຈະເກີດ* (ຕໍ່)

ແຮສຳລັບ ECLS ສຳລັບພັນທະຜູກພັນເງິນກູ້ທີ່ບໍ່ໄດ້ເບີກໃຊ້ແມ່ນຖືກປະເມີນ.

ກົນໄກວິທີຄິດໄລ່ຂອງ ECL ແມ່ນຖືກສະຫຼຸບດັ່ງລຸ່ມນີ້:

- ຂັ້ນທີ 1 ECL 12 ເດືອນແມ່ນຖືກຄິດໄລ່ເປັນສ່ວນໜຶ່ງຂອງ ECLs ຕະຫຼອດອາຍຸຂອງຊັບສິນທີ່ສະແດງເຖິງ ECLs ທີ່ມີຜົນມາຈາກເຫດການການຜິດນັດຊຳລະໃນເຄື່ອງມືທາງການເງິນທີ່ເປັນໄປໄດ້ໃນ 12 ເດືອນຫຼັງຈາກມື້ລາຍງານ. ບໍລິສັດຄຳນວນເງິນແຮ ECL 12 ເດືອນໂດຍອີງໃສ່ການຄາດການການຜິດນັດຊຳລະທີ່ເກີດຂຶ້ນໃນ 12 ເດືອນຫຼັງຈາກມື້ລາຍງານ. ຄວາມອາດຈະເປັນໄປໄດ້ໃນການຜິດນັດຊຳລະ 12 ເດືອນທີ່ຄາດການໄວ້ນີ້ ແມ່ນຖືກນຳໃຊ້ເພື່ອຄາດຄະເນ EAD ແລະ ຄູນກັບ LGD ທີ່ຄາດການໄວ້ ແລະ ຫຼຸດໂດຍອັດຕາດອກເບ້ຍທີ່ແທ້ຈິງເດີມໂດຍປະມານ. ການຄຳນວນນີ້ແມ່ນຖືກສ້າງຂຶ້ນສຳລັບແຕ່ລະກໍລະນີ ທັງ 3 ກໍລະນີດັ່ງທີ່ໄດ້ອະທິບາຍຂ້າງເທິງ.
- ຂັ້ນທີ 2 ເມື່ອເງິນກູ້ໄດ້ສະແດງໃຫ້ເຫັນເຖິງການເພີ່ມຂຶ້ນຂອງຄວາມສ່ຽງສິນເຊື່ອຢ່າງມີຄວາມສຳຄັນຕັ້ງແຕ່ເລີ່ມຕົ້ນ, ບໍລິສັດບັນທຶກເງິນແຮ ECLs ຕະຫຼອດອາຍຸຂອງຊັບສິນ. ກົນໄກນີ້ແມ່ນຄ້າຍຄືກັບທີ່ໄດ້ອະທິບາຍຂ້າງເທິງທີ່ລວມເຖິງການນຳໃຊ້ຫຼາຍກໍລະນີ ແຕ່ວ່າ PDs ແລະ LGDs ແມ່ນຖືກຄາດຄະເນຕະຫຼອດອາຍຸຂອງເຄື່ອງມື. ການຂາດແຄນເງິນສົດທີ່ຄາດການໄວ້ແມ່ນຖືກຫຼຸດຄ່າໂດຍອັດຕາດອກເບ້ຍທີ່ແທ້ຈິງເດີມໂດຍປະມານ.
- ຂັ້ນທີ 3 ສຳລັບເງິນກູ້ທີ່ພິຈາລະນາວ່າມີການເສື່ອມມູນຄ່າສິນເຊື່ອ, ບໍລິສັດຮັບຮູ້ລາຍຈ່າຍໜີ້ເສຍທີ່ຄາດການໄວ້ຕະຫຼອດອາຍຸສຳລັບເງິນກູ້ເຫຼົ່ານີ້. ວິທີນີ້ແມ່ນຄ້າຍຄືກັບ ຂັ້ນທີ 2 ພ້ອມກັບ PD ທີ່ຕັ້ງໄວ້ທີ່ 100%.

5. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

5.4 ການເສື່ອມມູນຄ່າຂອງຊັບສິນທາງການເງິນ (ຕໍ່)

5.4.3 ຂໍ້ມູນທີ່ເປັນການຄາດການລ່ວງໜ້າ

ໃນຕົວແບບຈຳລອງ ECL, ບໍລິສັດໄດ້ນຳໃຊ້ຂໍ້ມູນທີ່ເປັນການຄາດການລ່ວງໜ້າເປັນຂໍ້ມູນທາງເສດຖະກິດເຊັ່ນ:

- ອັດຕາການເຕີບໂຕຂອງ GDP
- ອັດຕາເງິນຕາຕ່າງປະເທດ

ຂໍ້ມູນ ແລະ ຕົວແບບຈຳລອງທີ່ໄດ້ນຳໃຊ້ໃນການຄິດໄລ່ ECL ອາດຈະບໍ່ກຳໄດ້ລັກສະນະພິເສດທັງໝົດຂອງຕະຫຼາດໃນວັນທີ ຂອງເອກະສານລາຍງານທາງດ້ານການເງິນໄດ້ຕະຫຼອດ. ເພື່ອທີ່ຈະສະທ້ອນໃຫ້ເຫັນສິ່ງເຫຼົ່ານີ້, ຈຶ່ງມີການດັດແກ້ແບບຄຸນະພາບ ຫຼື ການທັບຊ້ອນ ເຊິ່ງເປັນການດັດແກ້ຊົ່ວຄາວເມື່ອສ່ວນຕ່າງເຫຼົ່ານັ້ນຖືວ່າມີຜົນຢ່າງສຳຄັນ.

5.5 ການຮັບຮູ້ລາຍຮັບ ແລະ ຄ່າໃຊ້ຈ່າຍ

ລາຍຮັບແມ່ນໄດ້ຖືກຮັບຮູ້ໃນຂອບເຂດຂອງຄວາມເປັນໄປໄດ້ທີ່ວ່າຜົນປະໂຫຍດໃນທາງເສດຖະກິດຈະໄຫຼເຂົ້າບໍລິສັດ ແລະ ລາຍຮັບເຫຼົ່ານັ້ນຈະຖືກຕີມູນຄ່າຢ່າງເຊື່ອຖືໄດ້. ຫລັກການການຮັບຮູ້ສະເພາະດັ່ງຕໍ່ໄປນີ້ຈະຕ້ອງຖືກປະເມີນກ່ອນລາຍຮັບຈະຖືກຮັບຮູ້.

5.5.1 ດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືດອກເບ້ຍ ແລະ ລາຍຈ່າຍ

ສຳລັບທຸກໆເຄື່ອງມືທາງການເງິນທີ່ຖືກຕີມູນຄ່າຕາມລາຄາຄ່າເສື່ອມຕົ້ນທຶນ ແລະ ຊັບສິນທາງການເງິນທີ່ມີດອກເບ້ຍ ໄດ້ຈັດປະເພດເປັນ ຊັບສິນທີ່ມີໄວ້ເພື່ອຂາຍ ແລະ ເຄື່ອງມືທາງການເງິນໄດ້ກຳນົດຕາມມູນຄ່າຍຸຕິທຳ ໂດຍຜ່ານກຳໄລ ແລະ ຂາດທຶນ, ລາຍຮັບ ຫຼື ລາຍຈ່າຍດອກເບ້ຍ ແມ່ນຖືກບັນທຶກໂດຍນຳໃຊ້ອັດຕາດອກເບ້ຍຕົວຈິງ ເຊິ່ງແມ່ນອັດຕາສ່ວນຫຼຸດຕົວຈິງທີ່ໄດ້ຈາກການຄາດຄະເນການຊຳລະເງິນສົດໃນອະນາຄົດ ຫຼື ລາຍຮັບຕາມອາຍຸການທີ່ໄດ້ຄາດຄະເນຂອງເຄື່ອງມືການເງິນ ຫຼື ໄລຍະສັ້ນກວ່າທີ່ຍອມຮັບໄດ້ຂອງ ຍອດຍົກມາສຸດທິຂອງຊັບສິນ ຫຼື ໜີ້ສິນທາງການເງິນ. ການຄິດໄລ່ແມ່ນຄຳນຶງເຖິງທຸກໆຂໍ້ກຳນົດໃນສັນຍາຂອງເຄື່ອງມືການເງິນ (ເຊັ່ນວ່າ: ທາງເລືອກໃນການຊຳລະລ່ວງໜ້າ) ລວມທັງທຸກໆຄ່າທຳນຽມ ຫຼື ຄ່າໃຊ້ຈ່າຍບໍລິຫານທີ່ກ່ຽວພັນກັບເຄື່ອງມື ແລະ ເຊິ່ງເປັນສ່ວນປະກອບຂອງອັດຕາດອກເບ້ຍທີ່ແທ້ຈິງ, ແຕ່ບໍ່ແມ່ນຂາດທຶນສິນເຊື່ອໃນອະນາຄົດ.

ເມື່ອມູນຄ່າຕາມບັນຊີຂອງຊັບສິນທາງການເງິນ ຫຼື ກຸ່ມຂອງຊັບສິນທາງການເງິນທີ່ຄ້າຍຄືກັນຖືກຫຼຸດລົງໂດຍການຫັກຄ່າເສື່ອມມູນຄ່າ, ລາຍຮັບດອກເບ້ຍຈະຖືກຮັບຮູ້ໂດຍການນຳໃຊ້ອັດຕາດອກເບ້ຍທີ່ໃຊ້ໃນການຄິດໄລ່ກະແສເງິນສົດໃນອະນາຄົດສຳລັບເພື່ອຈຸດປະສົງຂອງການວັດຄ່າເສື່ອມ.

5. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

5.5 ການຮັບຮູ້ລາຍຮັບ ແລະ ຄ່າໃຊ້ຈ່າຍ (ຕໍ່)

5.5.2 ລາຍຮັບຈາກຄ່າທຳນຽມ ແລະ ຄ່ານາຍໜ້າ

ບໍລິສັດມີລາຍຮັບຈາກຄ່າທຳນຽມ ແລະ ຄ່ານາຍໜ້າ ຈາກການໃຫ້ບໍລິການຫລາຍຮູບແບບແກ່ລູກຄ້າ. ລາຍຮັບຈາກຄ່າທຳນຽມ ແລະ ຄ່ານາຍໜ້າ ແມ່ນຖືກຮັບຮູ້ເປັນຈຳນວນທີ່ມີຜົນກະທົບໃນການຕັດສິນໃຈທີ່ບໍລິສັດຄາດວ່າໄດ້ຈາກການແລກປ່ຽນຈາກການໃຫ້ບໍລິການ. ເງື່ອນໄຂການປະຕິບັດ, ເຊັ່ນດຽວກັນກັບເວລາຂອງຄວາມເພິ່ງພໍໃຈຈະຖືກລະບຸ ແລະ ຖືກກຳນົດໄວ້ໃນສັນຍາ. ໂດຍທົ່ວໄປສັນຍາລາຍຮັບຂອງບໍລິສັດຈະບໍ່ໄດ້ປະກອບມີພຽງແຕ່ພັນທະການປະຕິບັດງານແບບຫຼາຍຢ່າງ, ດັ່ງທີ່ໄດ້ອະທິບາຍໃນ 5.5.2.1 ແລະ 5.5.2.2 ຂ້າງລຸ່ມນີ້. ເມື່ອບໍລິສັດໄດ້ໃຫ້ບໍລິການແກ່ລູກຄ້າ, ການຕັດສິນໃຈແມ່ນໃບຮຽກເກັບເງິນ ແລະ ໂດຍທົ່ວໄປເນື່ອງຈາກຄວາມພໍໃຈຂອງບໍລິການທີ່ສະຫນອງໃນເວລາໃດຫນຶ່ງ ຫຼື ໃນເວລາສິ້ນສຸດສັນຍາສຳລັບການບໍລິການທີ່ໄດ້ຮັບພາຍໃນເວລາ (ເວັ້ນເສຍແຕ່ລະບຸໄວ້ໃນ 5.5.2.1 ແລະ 5.5.2 ຂ້າງລຸ່ມນີ້). ບໍລິສັດໄດ້ສະຫຼຸບໂດຍທົ່ວໄປວ່າ ເປັນຕົ້ນທຶນໃນການຈັດການລາຍຮັບເນື່ອງຈາກໂດຍປົກກະຕິແລ້ວ ຈະມີການຄວບຄຸມການບໍລິການກ່ອນທີ່ຈະໂອນໃຫ້ແກ່ລູກຄ້າ.

5.5.2.1 ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ ຈາກການໃຫ້ບໍລິການປະຕິບັດຕາມພັນທະທີ່ມີຄວາມພໍໃຈໃນໄລຍະເວລາໃດໜຶ່ງ.

ພັນທະການປະຕິບັດທີ່ມີຄວາມພໍໃຈໃນໄລຍະເວລາໃດໜຶ່ງລວມໄປເຖິງບໍລິການທີ່ລູກຄ້າໄດ້ຮັບ ແລະ ໃຊ້ປະໂຫຍດຈາກຜົນການດຳເນີນງານຂອງບໍລິສັດ.

5.5.2.2 ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການຈາກການໃຫ້ບໍລິການທີ່ປະຕິບັດຕາມພັນທະທີ່ມີຄວາມພໍໃຈໃນກຳນົດເວລາ

ການສະຫນອງການບໍລິການການປະຕິບັດຕາມພັນທະຂອງບໍລິສັດທີ່ມີຄວາມພໍໃຈໃນກຳນົດເວລາ ແມ່ນຈະຖືກຮັບຮູ້ເປັນໜຶ່ງການຄວບຄຸມເມື່ອການບໍລິການໄປເຖິງລູກຄ້າແລ້ວ. ນີ້ແມ່ນປົກກະຕິກ່ຽວກັບການສຳເລັດຂອງທຸລະກຳ ຫຼື ການບໍລິການທີ່ກ່ຽວຂ້ອງ ຫຼື, ສຳລັບຄ່າທຳນຽມ ຫຼື ສ່ວນປະກອບຂອງຄ່າທຳນຽມທີ່ເສື່ອມຕໍ່ກັບການປະຕິບັດງານທີ່ແນ່ນອນຫຼັງຈາກປະຕິບັດຕາມເກນທີ່ສອດຄ່ອງກັນ. ສິ່ງເຫຼົ່ານີ້ລວມມີຄ່າທຳນຽມ ແລະ ຄ່າບໍລິການທີ່ເກີດຂຶ້ນຈາກການເຈລະຈາ ຫຼື ການເຂົ້າຮ່ວມໃນການເຈລະຈາຂອງພາກສ່ວນທີ່ກ່ຽວຂ້ອງ, ເຊັ່ນ ການຈັດການ/ການມີສ່ວນຮ່ວມ ຫຼື ການເຈລະຈາຂອງການຊື້ຮຸ້ນ ຫຼື ຫຼັກຊັບອື່ນໆ, ຫຼື ການຊື້ ຫຼື ຂາຍທຸລະກິດ, ຄ່ານາຍຫນ້າ ແລະ ຄ່າທຳນຽມຈາກການຈັດທະບຽນ.

ໂດຍປົກກະຕິບໍລິສັດມີພັນທະການປະຕິບັດງານດຽວທີ່ກ່ຽວກັບການບໍລິການເຫຼົ່ານີ້, ເຊິ່ງແມ່ນເພື່ອປະຕິບັດສຳເລັດໃນການເຮັດທຸລະກຳລະບຸໄວ້ໃນສັນຍາ

5.6 ເງິນສົດ ແລະ ທຽບເທົ່າເງິນສົດ

ເງິນສົດໃນໃບລາຍງານຖານະການເງິນປະກອບມີເງິນສົດຢູ່ທະນາຄານທີ່ມີກຳນົດ 3 ເດືອນ ຫຼື ໜ້ອຍກວ່າ ແລະ ເງິນສົດໃນຄັງ.

5. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

5.7 *ຊັບສິນບັດ ແລະ ອຸປະກອນ*

ຊັບສິນບັດ ແລະ ອຸປະກອນ ແມ່ນໄດ້ລາຍງານ ຕາມຕົ້ນທຶນຂອງການບໍລິການມື້ຕໍ່ມື້ລົບຄ່າຫລຸ້ຍຫ້ຽນສະສົມ ແລະ ຄ່າເສື່ອມສະສົມ. ການປ່ຽນແປງຂອງອາຍຸການນຳໃຊ້ ແມ່ນໄດ້ລົງບັນຊີຕາມການປ່ຽນແປງຂອງໄລຍະການເສື່ອມຄ່າ ຫຼື ວິທີຫັກຄ່າເສື່ອມ ຕາມຄວາມເໝາະສົມ ແລະ ເຮັດໃຫ້ມີການປ່ຽນແປງຕາມການຄາດຄະເນທາງການບັນຊີ.

ຄ່າຫຼ້ຍຫ້ຽນຖືກຄິດໄລ່ອີງຕາມພື້ນຖານການຄິດໄລ່ຄ່າຫຼ້ຍຫ້ຽນແບບສະເໝີຕົ້ວ ເພື່ອຫຼຸດຕົ້ນທຶນຂອງຊັບສິມບັດ ແລະ ອຸປະກອນໃຫ້ຖືກຕາມມູນຄ່າທີ່ຍັງເຫຼືອຕົວຈິງຕາມອາຍຸການໃຊ້ງານ. ອາຍຸການນຳໃຊ້ທີ່ໄດ້ຄາດຄະເນແມ່ນມີດັ່ງລຸ່ມນີ້:

ເຄື່ອງໃຊ້ຫ້ອງການ	20%
ອຸປະກອນຄອມພິວເຕີ	20%
ເຟີນີເຈີ ແລະ ສິ່ງຕິດຕັ້ງ	20%
ພາຫະນະ	20%

ຊັບສິນ ແລະ ອຸປະກອນ ຈະບໍ່ຖືກຮັບຮູ້ເມື່ອມີການສະສາງອອກ ຫຼື ເມື່ອເຫັນວ່າບໍ່ມີຜົນປະໂຫຍດຕໍ່ທຸລະກິດໃນອະນາຄົດຈາກການນຳໃຊ້ຊັບສິມບັດ ແລະ ອຸປະກອນດັ່ງກ່າວ. ກຳໄລ ຫຼື ຂາດທຶນທີ່ເກີດຈາກການສະສາງຊັບສິມບັດ (ຄິດໄລ່ໄດ້ລະຫວ່າງມູນຄ່າສະສາງອອກ ແລະ ມູນຄ່າຍັງເຫຼືອຂອງຊັບສິມບັດ) ແມ່ນຖືກຮັບຮູ້ເປັນ "ລາຍຮັບຈາກການດຳເນີນງານອື່ນໆ" ໃນໃບລາຍງານຜົນການດຳເນີນງານຂອງປີທີ່ຊັບສິມບັດໄດ້ຖືກສະສາງອອກ.

5.8 *ການເສື່ອມມູນຄ່າຂອງຊັບສິນທີ່ບໍ່ແມ່ນທາງດ້ານການເງິນ*

ບໍລິສັດປະເມີນນະມື້ເຮັດເອກະສານລາຍງານ ວ່າມີຊັບສິນໃດທີ່ມີການເສື່ອມຄ່າ ຫຼື ບໍ່. ຖ້າມີ ຫຼື ເມື່ອເຮັດການທົດສອບ ການເສື່ອມຄ່າຊັບສິນປະຈຳປີຕາມທີ່ໄດ້ກຳນົດ ບໍລິສັດປະເມີນຈຳນວນເງິນທີ່ເກັບກູ້ຄືນໄດ້ຂອງຊັບສິນ. ຈຳນວນເງິນທີ່ສາມາດເກັບກູ້ ຄືນໄດ້ຂອງຊັບສິນ ແມ່ນໄດ້ຈາກ ມູນຄ່າທີ່ສູງກວ່າລະຫວ່າງ ມູນຄ່າຍຸຕິທຳຂອງຊັບສິນ ຫຼື ມູນຄ່າຍຸຕິທຳຂອງຫົວໜ່ວຍຊັບສິນທີ່ກໍ່ໃຫ້ເກີດເງິນສົດ (CGU) ລົບໃຫ້ຕົ້ນທຶນຂາຍ ແລະ ມູນຄ່າທີ່ຖືກນຳໃຊ້. ເມື່ອຍອດຍົກມາ ຂອງຊັບສິນ ຫຼື ມູນຄ່າຂອງ CGU ຫລາຍກວ່າມູນຄ່າທີ່ສາມາດເກັບກູ້ຄືນໄດ້, ຊັບສິນຈະຖືວ່າເສື່ອມຄ່າ ແລະ ຈະຫຼຸດມູນຄ່າລົງໃຫ້ເທົ່າກັບມູນຄ່າທີ່ສາມາດເກັບກູ້ຄືນໄດ້.

ໃນການປະເມີນມູນຄ່າທີ່ຖືກນຳໃຊ້, ກະແສເງິນສົດທີ່ຖືກປະເມີນໃນອະນາຄົດແມ່ນຫລຸດລົງ ເພື່ອໃຫ້ໄດ້ມູນຄ່າປັດຈຸບັນ ໂດຍການນຳໃຊ້ອັດຕາສ່ວນຫລຸດກ່ອນອາກອນ ທີ່ສົ່ງຜົນຕໍ່ການປະເມີນມູນຄ່າຕາມທ້ອງຕະຫຼາດໃນປັດຈຸບັນຂອງເງິນ ແລະ ຄວາມສ່ຽງສະເພາະຂອງຊັບສິນ. ໃນການກຳນົດມູນຄ່າຍຸຕິທຳລົບໃຫ້ຕົ້ນທຶນຂາຍ, ແບບວິທີການຕີມູນຄ່າທີ່ເໝາະສົມຈະຖືກນຳໃຊ້. ການຄິດໄລ່ຈະຖືກປະຕິບັດໂດຍການຕີມູນຄ່າທີ່ຫຼາກຫຼາຍ, ລາຄາຮຸ້ນທີ່ສະເໜີຂາຍສຳລັບບໍລິສັດທີ່ຂາຍທົ່ວໄປ ຫຼື ຕົວຊີ້ບອກມູນຄ່າຍຸຕິທຳອື່ນໆທີ່ມີຢູ່.

ສຳລັບຊັບສິນທີ່ບໍ່ລວມຄ່ານິຍົມ, ການປະເມີນຈະຖືກເຮັດໃນມື້ສ້າງບົດລາຍງານ ເພື່ອເບິ່ງວ່າອາດຈະມີຕົວຊີ້ບອກເຖິງການເສື່ອມຄ່າຂອງຊັບສິນທີ່ຜ່ານມານັ້ນຈະບໍ່ເກີດຂຶ້ນອີກ ຫຼື ອາດຫລຸດລົງ. ຖ້າຫາກມີຕົວຊີ້ບອກ, ບໍລິສັດຈະຄາດຄະເນ ຈຳນວນເງິນທີ່ສາມາດຮຽກເກັບຄືນມາໄດ້ຂອງຊັບສິນ. ການເສື່ອມຄ່າຜ່ານມາຈະສາມາດຮຽກເກັບຄືນມາໄດ້ກໍ່ຕໍ່ເມື່ອມັນ ມີການປ່ຽນແປງ ໃນການກຳນົດມູນຄ່າທີ່ສາມາດເກັບຄືນໄດ້ຂອງຊັບສິນ ນັບຕັ້ງແຕ່ການເສື່ອມຄ່າຄັ້ງສຸດທ້າຍໄດ້ຖືກຮັບຮູ້. ການປົ້ນຄືນແມ່ນຖືກກຳນົດຂຶ້ນ ສະນັ້ນ ຍອດຍົກມາຂອງຊັບສິນແມ່ນບໍ່ເກີນມູນຄ່າທີ່ສາມາດເກັບຄືນໄດ້ ຫຼື ບໍ່ເກີນຍອດ ຍົກມາທີ່ຖືກກຳນົດລົບໃຫ້ຄ່າຫລຸ້ຍຫ້ຽນ, ບໍ່ມີຄ່າເສື່ອມຂອງຊັບສິນໃນປີຜ່ານມາ. ການປົ້ນຄືນແມ່ນຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານ.

5. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

5.9 *ຜົນປະໂຫຍດຂອງພະນັກງານ*

ຜົນປະໂຫຍດຂອງພະນັກງານຫລັງອອກການ

ຜົນປະໂຫຍດຫລັງອອກການ ແມ່ນຈະຖືກຈ່າຍໃຫ້ພະນັກງານບໍລິສັດ ຜູ້ທີ່ກະສຽນ ໂດຍກົມກອງທຶນປະກັນສັງຄົມ ເຊິ່ງຂຶ້ນກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ. ນະໂຍບາຍຂອງບໍລິສັດແມ່ນຫັກຈາກເງິນເດືອນພື້ນຖານຂອງພະນັກງານທຸກໆ ເດືອນ ເພື່ອເກັບຮັກສາໄວ້. ປັດຈຸບັນນີ້ ແມ່ນໃຊ້ອັດຕາ 6.00% ຈາກເງິນເດືອນພື້ນຖານຂອງພະນັກງານໃນແຕ່ລະເດືອນ. ບໍລິສັດບໍ່ມີພັນທະເພີ່ມເຕີມກ່ຽວກັບຜົນປະໂຫຍດຂອງພະນັກງານຫລັງອອກການນອກເໜືອຈາກນີ້.

ຜົນປະໂຫຍດໃນການຍົກເລີກສັນຍາຈ້າງງານ

ອີງຕາມມາດຕາ 82 ຂອງກົດໝາຍແຮງງານສະບັບປັບປຸງ ເລກທີ 43/ສພຊ ອອກໂດຍປະທານປະເທດແຫ່ງ ສປປ ລາວ ລົງວັນທີ 28 ມັງກອນ 2014, ບໍລິສັດມີພັນທະຈ່າຍຊົດເຊີຍໃຫ້ແກ່ພະນັກງານຜູ້ທີ່ລາອອກອີງຕາມເງື່ອນໄຂລຸ່ມນີ້:

- ກໍລະນີພະນັກງານຂາດທັກສະຄວາມຊຳນິຊຳນານ ຫຼື ມີສຸຂະພາບບໍ່ແຂງແຮງ ແລະ ບໍ່ສາມາດສືບຕໍ່ເຮັດ ວຽກໄດ້;
- ກໍລະນີບໍລິສັດພິຈາລະນາວ່າຈຳເປັນຕ້ອງຫລຸດພະນັກງານ ເພື່ອປັບປຸງການເຮັດວຽກພາຍໃນອົງກອນ.

ສຳລັບການຍົກເລີກສັນຍາຈ້າງງານໃນຂົງເຂດທີ່ໄດ້ກ່າວມາຂ້າງເທິງນັ້ນ, ນາຍຈ້າງຕ້ອງຈ່າຍເງິນເບ້ຍລ້ຽງໃຫ້ພະນັກງານ ໂດຍອີງໃສ່ພື້ນຖານການຄິດໄລ່ 10% ຂອງເງິນເດືອນພື້ນຖານ ເດືອນສຸດທ້າຍຄູນໃຫ້ຈຳນວນເດືອນທີ່ເຮັດວຽກກັບບໍລິສັດ. ໃນວັນທີ 31 ທັນວາ 2020, ບໍ່ມີພະນັກງານບໍລິສັດຖືກຢຸດຈ້າງຕາມເງື່ອນໄຂທີ່ລະບຸໄວ້ຂ້າງເທິງ. ດັ່ງນັ້ນ ບໍລິສັດບໍ່ໄດ້ຫັກຄັງແຮສຳລັບການຍົກເລີກການຈ້າງດັ່ງກ່າວໃນເອກະສານລາຍງານການເງິນ.

5.10 *ເງິນແຮ*

ເງິນແຮ ຈະຖືກຮັບຮູ້ ກໍ່ຕໍ່ເມື່ອບໍລິສັດມີພັນທະ (ທາງດ້ານກົດໝາຍ ຫຼື ຕາມການຕີກລົງ) ເນື່ອງຈາກເຫດການທີ່ຜ່ານມາ ແລະ ມີຄວາມເປັນໄປໄດ້ວ່າຈະມີລາຍຈ່າຍ ເພື່ອຊຳລະສະສາງໜີ້ສິນທີ່ອາດຈະເກີດຂຶ້ນ ແລະ ມູນຄ່າຄາດຄະເນດັ່ງກ່າວຕ້ອງເຊື່ອຖືໄດ້. ໃນເວລາທີ່ຜົນກະທົບຂອງມູນຄ່າເງິນເວລາ, ບໍລິສັດກຳນົດລະດັບເງິນແຮດ້ວຍວິທີຄິດໄລ່ອັດຕາສ່ວນຫຼຸດກະແສເງິນສົດທີ່ຄາດວ່າຈະໄດ້ຮັບ ໂດຍອັດຕາກ່ອນການອາກອນ ຊຶ່ງແມ່ນອັດຕາການປັດຈຸບັນທີ່ກຳນົດໄວ້ສະເພາະກັບໜີ້ສິນ. ລາຍຈ່າຍທີ່ກ່ຽວຂ້ອງກັບຄັງແຮຖືກລາຍງານໃນໃບລາຍງານຜົນການດຳເນີນງານຫັກລາຍຈ່າຍຕ່າງໆໃນລາຍຈ່າຍການດຳເນີນງານອື່ນໆ.

5.11 *ອາກອນກຳໄລ*

ອາກອນພາຍໃນປີ

ຊັບສິນ ແລະ ໜີ້ສິນອາກອນພາຍໃນປີ ສຳລັບປີປັດຈຸບັນ ແລະ ປີກ່ອນ ແມ່ນຖືກຕີມູນຄ່າຕາມຈຳນວນທີ່ຄາດວ່າຈະເກັບ ຄືນ ຫຼື ຈ່າຍໃຫ້ກົມສ່ວຍສາອາກອນ. ອັດຕາອາກອນ ແລະ ກົດໝາຍວ່າດ້ວຍສ່ວຍສາອາກອນທີ່ຖືກນຳໃຊ້ຄິດໄລ່ອາກອນແມ່ນມີຜົນສັກສິດນຳໃຊ້ໃນມື້ສ້າງໃບລາຍງານຖານະການເງິນ ພາຍໃນປະເທດທີ່ບໍລິສັດດຳເນີນທຸລະກິດ ແລະ ສ້າງລາຍຮັບທີ່ຕ້ອງເສຍອາກອນ.

ອາກອນລາຍໄດ້ພາຍໃນປີທີ່ກ່ຽວຂ້ອງກັບລາຍການທີ່ບັນທຶກໃນບັນຊີທຶນແມ່ນຖືກຮັບຮູ້ໃນທຶນເຈົ້າຂອງ ແລະ ບໍ່ໄດ້ມີການບັນທຶກໃນບັນຊີກຳໄລ ຫຼື ຂາດທຶນ, ຄະນະບໍລິຫານໄດ້ມີການປະເມີນສະຖານະການປະຕິບັດອາກອນເປັນແຕ່ລະໄລຍະໂດຍອີງຕາມກົດລະບຽບທາງດ້ານອາກອນ ເພື່ອການຕີລາຄາຄືນ ແລະ ສ້າງຄັງແຮໃນເວລາທີ່ເໝາະສົມ.

5. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

5.11 *ອາກອນກຳໄລ* (ຕໍ່)

ອາກອນເຍື້ອນຊຳລະ

ອາກອນເຍື້ອນຊຳລະ ແມ່ນຖືກຄິດໄລ່ ຈາກສ່ວນຜິດຕ່ຽງຊົ່ວຄາວ ຕາມມື້ທີ່ອອກບົດລາຍງານ ລະຫວ່າງຊັບສິນ ແລະ ໜີ້ສິນ ອາກອນ ແລະ ຍອດຍົກມາສຳລັບການລາຍງານການເງິນ. ໜີ້ຕ້ອງສິ່ງອາກອນເຍື້ອນຊຳລະແມ່ນຖືກຮັບຮູ້ເປັນສ່ວນຕ່າງອາກອນຊົ່ວຄາວ, ຍົກເວັ້ນເມື່ອໜີ້ສິນອາກອນເຍື້ອນຊຳລະເກີດຂຶ້ນຈາກການຮັບຮູ້ເບື້ອງຕົ້ນຂອງຊັບສິນ ຫຼື ໜີ້ສິນ ໃນການເຄື່ອນໄຫວ ທີ່ບໍ່ແມ່ນການລວມກິດຈະການ ແລະ ໃນເວລານັ້ນການເຄື່ອນໄຫວບໍ່ມີຜົນກະທົບຕໍ່ກຳໄລທາງດ້ານບັນຊີ ຫຼື ກຳໄລ ແລະ ຂາດທຶນທີ່ຖືກອາກອນ.

ຍອດຍົກມາຂອງໜີ້ຕ້ອງຮັບທາງອາກອນ ແມ່ນຖືກກວດກາຄືນໃນມື້ສ້າງບົດລາຍງານ ແລະ ຫຼຸດລົງ ຖ້າມີຄວາມເປັນໄປໄດ້ວ່າ ຈະບໍ່ມີກຳໄລທີ່ຖືກເສຍອາກອນທີ່ອະນຸຍາດໃຫ້ ຫຼື ພາກສ່ວນໜຶ່ງຂອງໜີ້ ຕ້ອງຮັບອາກອນຈະຖືກອະນຸຍາດໃຫ້ຫັກ. ໜີ້ຕ້ອງຮັບອາກອນທີ່ບໍ່ຖືກຮັບຮູ້ ແມ່ນຖືກປະເມີນຄືນໃນມື້ກະກຽມບົດລາຍງານ ແລະ ຖືກຮັບຮູ້ເມື່ອມີຄວາມເປັນໄປໄດ້ວ່າກຳໄລທີ່ຖືກເສຍອາກອນໃນອະນາຄົດ ຈະອະນຸຍາດໃຫ້ໜີ້ຕ້ອງຮັບອາກອນ ສາມາດຫັກອອກໄດ້.

ໜີ້ຕ້ອງຮັບ ແລະ ໜີ້ຕ້ອງສິ່ງອາກອນເຍື້ອນຊຳລະແມ່ນຖືກໄລ່ລຽງຕາມອັດຕາອາກອນທີ່ຄາດວ່າຈະນຳໄປໃຊ້ ພາຍໃນໄລຍະເມື່ອຊັບສິນຖືກຮັບຮູ້ມູນຄ່າຕົວຈິງ ຫຼື ໜີ້ສິນຖືກສະສາງ ອີງຕາມອັດຕາອາກອນ (ແລະ ກົດໝາຍສ່ວຍສາອາກອນ) ທີ່ໄດ້ປະກາດໃຊ້ນະມື້ລາຍງານ.

ອາກອນພາຍໃນໄປປີ ແລະ ອາກອນເຍື້ອນຊຳລະຈະຖືກຮັບຮູ້ຜົນປະໂຫຍດທາງອາກອນ ຫຼື ຄ່າໃຊ້ຈ່າຍໃນໃບລາຍງານຜົນການດຳເນີນງານ, ຍົກເວັ້ນອາກອນທີ່ກ່ຽວຂ້ອງກັບການຕີມູນຄ່າຕາມລາຄາຍຸຕິທຳຂອງຊັບສິນທີ່ມີໄວ້ສຳລັບການຂາຍ, ການຜິດຕ່ຽງອັດຕາແລກປ່ຽນ ແລະ ມູນຄ່າສຸດທິຂອງກະແສເງິນສົດ, ເຊິ່ງສາມາດຄິດຄ່າທຳນຽມ ຫຼື ບັນທຶກບັນຊີເປັນ OCI. ຂໍ້ຍົກເວັ້ນເຫຼົ່ານີ້ແມ່ນໄດ້ຖືກຈັດປະເພດຄືນໃໝ່ ຈາກ OCI ໄປໃບລາຍງານຜົນການດຳເນີນງານ ໃນບັນຊີກຳໄລ ຫຼື ຂາດທຶນ ລໍຖ້າຊຳລະສະສາງ. ບໍລິສັດຍັງໄດ້ຮັບຮູ້ອາກອນພາຍຫຼັງທີ່ມີການຊຳລະສະສາງ ທີ່ກ່ຽວຂ້ອງກັບເຄື່ອງມືທາງດ້ານການເງິນທີ່ຖືກຈັດປະເພດເປັນທຶນເຈົ້າຂອງ.

ບໍລິສັດຫັກລ້າງໜີ້ຕ້ອງຮັບ ແລະ ໜີ້ຕ້ອງສິ່ງອາກອນເຍື້ອນຊຳລະ ເມື່ອມີທັງສິດທາງດ້ານກົດໝາຍ ແລະ ບໍລິສັດມີຈຸດປະສົງທີ່ຈະຫັກລ້າງກັນບົນພື້ນຖານມູນຄ່າສຸດທິ.

5.12 *ມາດຕະຖານແຕ່ຍັງບໍ່ທັນບັງຄັບໃຊ້*

ມາດຕະຖານ ແລະ ການຕີຄວາມໝາຍທີ່ໄດ້ວ່າງອອກ, ແຕ່ວ່າຍັງບໍ່ທັນມີຜົນບັງຄັບໃຊ້, ຈົນເຖິງມື້ອອກເອກະສານລາຍງານການເງິນຂອງບໍລິສັດ ແມ່ນໄດ້ເປີດເຜີຍດັ່ງຕໍ່ໄປນີ້. ບໍລິສັດຈະຮັບຮອງເອົາມາດຕະຖານເຫຼົ່ານີ້, ຖ້າສາມາດນຳໃຊ້ໄດ້ໃນເວລາທີ່ມາດຕະຖານດັ່ງກ່າວໄດ້ມີຜົນບັງຄັບໃຊ້.

IFRS 17 ສັນຍາປະກັນໄພ

ໃນເດືອນພຶດສະພາ ປີ 2017, IASB ອອກມາດຕະຖານສັນຍາປະກັນໄພ IFRS 17, ເຊິ່ງເປັນມາດຕະຖານການບັນຊີໃໝ່ທີ່ຄວບຄຸມສຳລັບສັນຍາປະກັນໄພ ການຮັບຮູ້, ການວັດແທກ, ການນຳສະເໜີ ແລະ ການເປີດເຜີຍ. ເຊິ່ງຈະນຳໃຊ້ IFRS 17 ແທນສັນຍາປະກັນໄພ IFRS 4 ທີ່ໄດ້ອອກໃນປີ2005. IFRS 17 ໄດ້ນຳໃຊ້ໃນທຸກສັນຍາປະກັນໄພ (ເຊັ່ນ: ປະກັນໄພຊີວິດ ,ປະກັນໄພທົ່ວໄປ, ປະກັນໄພໂດຍຕົງ ແລະ ປະກັນໄພຕໍ່) ໂດຍບໍ່ໄດ້ຄຳນຶງເຖິງປະເພດຂອງທຸລະກິດ, ພ້ອມນັ້ນເພື່ອຄ້ຳປະກັນ ແລະ ເຄື່ອງມືທາງການເງິນ ກັບການເຂົ້າຮ່ວມທີ່ຈຳເປັນ. ຈະມີຂອບເຂດຂໍ້ຍົກເວັ້ນຈຳນວນໜຶ່ງ. ຈຸດປະສົງຂອງ IFRS 17 ແມ່ນເພື່ອສະໜອງຮູບແບບການບັນຊີ ສຳລັບສັນຍາປະກັນໄພທີ່ມີປະໂຫຍດຫຼາຍກວ່າເກົ່າ ແລະ ສອດຄ່ອງກັບຜູ້ຮັບປະກັນ.

5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

5.12 *ມາດຕະຖານແຕ່ຍັງບໍ່ທັນບັງຄັບໃຊ້* (ຕໍ່)

ກົງກັນຂ້າມກັບທີ່ກຳນົດໄວ້ໃນ IFRS 4, ເຊິ່ງສ່ວນຫຼາຍແມ່ນອີງໃສ່ນະໂຍບາຍການບັນຊີຂອງທ້ອງຖິ່ນ, IFRS 17 ສະໜອງ ຮູບແບບທີ່ສົມບູນແບບສຳລັບສັນຍາປະກັນໄພ. ຫຼັກການ IFRS 17 ແມ່ນຮູບແບບທົ່ວໄປ, ເພີ່ມເຕີມດັ່ງນີ້:

- ການປັບປຸງສະເພາະ ສຳລັບສັນຍາທີ່ມີການຮ່ວມມືໂດຍກົງ(ວິທີຄິດໄລ່ຄ່າທຳນຽມ)
- ວິທີການແບບງ່າຍດາຍ (ວິທີການແບ່ງສ່ວນເບ້ຍປະກັນໄພ) ສ່ວນຫຼາຍແມ່ນໃຊ້ກັບສັນຍາໄລຍະຍາວ

IFRS 17 ມີຜົນບັງຄັບໃຊ້ສຳລັບປີທີ່ເລີ່ມຕົ້ນນະວັນທີ ຫຼື ຫຼັງວັນທີ 1 ມັງກອນ 2021. ມາດຕະຖານໃຫມ່ດັ່ງກ່າວ ສາມາດນຳ ໃຊ້ລ່ວງໜ້າໄດ້, ຖ້າອີງກອນນຳໃຊ້IFRS 9 ແລະ IFRS 15 ມາກ່ອນ. ມາດຕະຖານນີ້ແມ່ນບໍ່ສອດຄ່ອງສຳລັບບໍລິສັດ.

ການປັບປຸງ IFRS 3: ນິຍາມຂອງທຸລະກິດ

ໃນເດືອນຕຸລາ 2018, IASB ໄດ້ອອກແຈ້ງການ ການປັບປຸງນິຍາມຂອງທຸລະກິດໃນ IFRS 3 ການປະສົມປະສານທຸລະກິດ ເພື່ອຊ່ວຍໃຫ້ບັນດາຫົວໜ່ວຍທຸລະກິດ ກຳນົດກິດຈະກຳ ແລະ ຊັບສິນທີ່ໄດ້ມາ ແມ່ນເປັນຂອງທຸລະກິດ ຫຼື ບໍ່. ພວກເຂົາຊີ້ແຈງ ຄວາມຕ້ອງການຂັ້ນຕ່ຳສຸດ ສຳລັບທຸລະກິດ, ລົບເລີກການປະເມີນຜູ້ເຂົ້າຮ່ວມຕະຫຼາດ ທີ່ສາມາດປ່ຽນແທນອົງປະກອບທີ່ຂາດ ຫາຍໄປ, ເພີ່ມແນວທາງ ຄຳແນະນຳ ເພື່ອໃຫ້ທຸລະກິດປະເມີນຂັ້ນຕອນທີ່ໄດ້ມານັ້ນແມ່ນມີຄວາມສຳຄັນ, ການຈຳກັດນິຍາມ ຂອງທຸລະກິດ ແລະ ຜົນຮັບ, ແລະນຳສະເໜີການກວດສອບມູນຄ່າຍຸຕິທຳທີ່ເປັນຕົວເລືອກ. ຕົວຢ່າງໄດ້ສະໜອງຕາມການ ປັບປຸງ.

ເລີ່ມແຕ່ນຳໃຊ້ການປັບປຸງເຂົ້າໃນການດຳເນີນທຸລະກຳ ຫຼື ເຫດການອື່ນໆທີ່ເກີດຂຶ້ນໃນວັນທີນຳໃຊ້ ຫຼື ຫຼັງມື້ນຳໃຊ້ ຄັ້ງທຳອິດ, ບໍລິສັດຈະບໍ່ໄດ້ຮັບຜົນກະທົບຈາກການປັບປຸງເຫຼົ່ານີ້.

ການປັບປຸງ IAS 1 ແລະ IAS 8: ນິຍາມຂອງຄ່າສຳຄັນທຽບຖານ

ໃນເດືອນຕຸລາ 2018, IASB 1 ໄດ້ອອກການປັບປຸງ IAS 1 ໃນການນຳສະເໜີເອກະສານລາຍງານທາງການເງິນ ແລະ IAS 8 ນະໂຍບາຍບັນຊີ, ການປ່ຽນແປງໃນການປະເມີນທາງບັນຊີ ແລະ ຂໍ້ຜິດພາດເພື່ອໃຫ້ນິຍາມຂອງ 'ຄ່າສຳຄັນທຽບຖານ' ສອດຄ່ອງ ກັບມາດຕະຖານ ແລະ ເພື່ອຊີ້ແຈງລັກສະນະຂອງຄຳນິຍາມ. ຄຳນິຍາມໃໝ່ລະບຸວ່າ 'ຂໍ້ມູນມີຄ່າສຳຄັນທຽບຖານຖ້າຫາກວ່າມີການ ລຶບ, ຜິດພາດ ຫຼື ປິດບັງຂໍ້ມູນມັນອາດຈະເປັນເຫດຜົນທີ່ຈະມີອິດທິພົນຕໍ່ການຕັດສິນໃຈຕໍ່ຈຸດປະສົງຂອງຜູ້ນຳໃຊ້ເອກະສານລາຍ ງານທາງການເງິນເຫຼົ່ານີ້, ເຊິ່ງການສະໜອງຂໍ້ມູນທາງການເງິນກ່ຽວກັບການລາຍງານສະເພາະຂອງທຸລະກິດ.

ການປັບປຸງນິຍາມຂອງຄ່າສຳຄັນທຽບຖານ ແມ່ນຄາດວ່າຈະບໍ່ມີຜົນກະທົບທີ່ສຳຄັນຕໍ່ເອກະສານລາຍງານການເງິນຂອງບໍລິສັດ.

5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

5.13 ມາດຕະຖານທີ່ອອກແລ້ວແຕ່ບໍ່ທັນນຳໃຊ້

***IFRS 9* ເຄື່ອງມືທາງການເງິນ**

ເດືອນກໍລະກົດ ປີ 2014, IASB ໄດ້ອອກສະບັບລ່າສຸດຂອງ *IFRS 9* ເຄື່ອງມືທາງການເງິນ ທີ່ໃຊ້ແທນເຄື່ອງມືທາງການເງິນ IAS 39: ການຮັບຮູ້ ແລະ ວັດແທກ ຂອງ *IFRS 9* ສະບັບກ່ອນໜ້ານີ້. *IFRS 9* ສະບັບກ່ອນໜ້ານີ້ນຳໃຊ້ກັບ 3 ລັກສະນະຂອງບັນຊີ ສຳລັບເຄື່ອງມືທາງການເງິນ ການຈັດລຽງ, ການວັດແທກ, ການເສື່ອມມູນຄ່າ ແລະ ບັນຊີປ້ອງກັນຄວາມສ່ຽງ. *IFRS 9* ມີຜົນນຳໃຊ້ສຳລັບປີການບັນຊີ ເລີ່ມວັນທີໃນວັນທີ ຫຼື ຫຼັງວັນທີ 1 ມັງກອນ 2018, ໂດຍໄດ້ຮັບອະນຸຍາດລ່ວງໜ້າ. ຍົກເວັ້ນບັນຊີປ້ອງກັນຄວາມສ່ຽງ, ການນຳໃຊ້ຍ້ອນຫຼັງແມ່ນໄດ້ຮຽກຮ້ອງໃຫ້ປະຕິບັດ ແຕ່ການສະໜອງຂໍ້ມູນປຽບທຽບແມ່ນບໍ່ໄດ້ບັງຄັບ. ສຳລັບບັນຊີປ້ອງກັນຄວາມສ່ຽງແມ່ນນຳໃຊ້ໂດຍທົ່ວໄປ , ໂດຍມີຂໍ້ຍົກເວັ້ນຈຳກັດ.

ອີງຕາມບົດອະທິບາຍເລກທີ 4, ບໍລິສັດໄດ້ຮັບຮູ້ການນຳໃຊ້ ແລະ ຄິດໄລ່ຄ່າເສື່ອມໃຫ້ສອດຄ່ອງກັບ IFRS 9 ທີ່ເລີ່ມນຳໃຊ້ຕັ້ງແຕ່ວັນທີ 1 ມັງກອນ 2020 ແລະ ບໍລິສັດກຳລັງດຳເນີນການປະເມີນລາຍລະອຽດຂອງຜົນກະທົບຂອງ IFRS 9 ແລະ ຈະນຳໃຊ້ໃນການຕັດສິນໃຈຂອງການຄຸ້ມຄອງ ແລະ ການຊີ້ນຳຈາກທະນາຄານແຫ່ງ ສປປ ລາວ.

6. ການຄາດຄະເນທີ່ສຳຄັນທາງບັນຊີ ແລະ ການຕັ້ງສົມມຸດຖານ

ໃນການກະກຽມເອກະສານລາຍງານການເງິນຂອງບໍລິສັດ, ຮຽກຮ້ອງໃຫ້ຄະນະບໍລິຫານຕ້ອງມີການພິຈາລະນາ, ຕີລາຄາ ແລະ ການປະເມີນຜົນກະທົບຕໍ່ຈຳນວນລາຍຮັບ, ລາຍຈ່າຍ, ຊັບສິນ ແລະ ໜີ້ສິນ ແລະ ການເປີດເຜີຍທີ່ກ່ຽວຂ້ອງ, ລວມທັງການເປີດເຜີຍໜີ້ສິນທີ່ອາດເກີດຂຶ້ນ. ຄວາມບໍ່ແນ່ນອນໃນການປະເມີນ ແລະ ການຕີລາຄາ ອາດຈະເຮັດໃຫ້ເກີດມີຄວາມຮຽກຮ້ອງຕ້ອງການດ້ານການດັດແກ້ມູນຄ່າຂອງຍອດຍົກມາຂອງຊັບສິນ ແລະ ໜີ້ສິນທີ່ຈະສົ່ງຜົນກະທົບໃນອະນາຄົດ.

ໃນຂະບວນການຂອງການຈັດຕັ້ງປະຕິບັດນະໂຍບາຍການບັນຊີຂອງບໍລິສັດ, ຄະນະບໍລິຫານໄດ້ພິຈາລະນາດັ່ງນີ້ ເຊິ່ງມີຜົນກະທົບອັນສຳຄັນໃຫ້ແກ່ຕົວເລກການຮັບຮູ້ທີ່ມີຄວາມສ່ຽງຫລາຍ ເຊິ່ງຜົນມາຈາກເຄື່ອງມືການດັດແກ້ທີ່ສຳຄັນຂອງມູນຄ່າຕົວຈິງຂອງຊັບສິນ ແລະ ໜີ້ສິນພາຍໃນປີການເງິນຕໍ່ໜ້າ. ບໍລິສັດໄດ້ອີງໃສ່ຂໍ້ສົມມຸດຖານ ແລະ ການຄາດຄະເນຂອງຕົນ ກ່ຽວກັບການກຳນົດເວລາທີ່ມີການລາຍງານທາງດ້ານການເງິນທີ່ຖືກກະກຽມ. ສະພາບການ ແລະ ສົມມຸດຖານ ກ່ຽວກັບການພັດທະນາໃນອະນາຄົດ, ຢ່າງໃດກໍ່ຕາມ, ອາດຈະມີການປ່ຽນແປງ ເນື່ອງມາຈາກການປ່ຽນແປງຂອງຕະຫຼາດ ຫຼື ສະພາບການທີ່ຄວບຄຸມບໍລິສັດ. ການປ່ຽນແປງດັ່ງກ່າວໄດ້ສະທ້ອນໃຫ້ເຫັນໃນຂໍ້ສົມມຸດຖານໃນເວລາທີ່ເກີດຂຶ້ນ.

6.1 ຄ່າເສື່ອມຂອງຊັບສິນທາງການເງິນ

ໃນການປະເມີນຄ່າເສື່ອມມູນຄ່າພາຍໃຕ້ຮູບແບບ IFRS 9 ໃນທຸກປະເພດຂອງຊັບສິນທາງການເງິນຕາມຂອບເຂດທີ່ຮຽກຮ້ອງໃຫ້ມີການພິຈາລະນາ, ໂດຍສະເພາະການຄາດຄະເນຈຳນວນ ແລະ ໄລຍະເວລາຂອງກະແສເງິນສົດໃນອະນາຄົດ ເມື່ອມີການກຳນົດຄ່າເສື່ອມ ແລະ ການປະເມີນຄວາມສ່ຽງສຳຄັນທີ່ອາດເພີ່ມຂຶ້ນ. ການຄາດຄະເນດັ່ງກ່າວໄດ້ຖືກຂັບເຄື່ອນ ໂດຍປັດໄຈດ້ານຈຳນວນ, ການປ່ຽນແປງທີ່ອາດສົ່ງຜົນໃຫ້ເກີດມີເງື່ອນໄຂຫຼາຍລະດັບທີ່ແຕກຕ່າງກັນ.

ການຄິດໄລ່ຂອງບໍລິສັດແມ່ນມີຜົນລັບເປັນຮູບແບບທີ່ຊັບຊ້ອນໂດຍມີພື້ນຖານຂໍ້ສົມມຸດຖານຈຳນວນໜຶ່ງທີ່ກ່ຽວກັບປັດໄຈຂໍ້ມູນ ແລະ ຄວາມເປັນອິດສະຫຼະຂອງບັນດາຂໍ້ມູນ. ອົງປະກອບຂອງວິທີການ ECL ທີ່ຖືກພິຈາລະນາໃນການຕັດສິນໃຈທາງການບັນຊີ ແລະ ການຄາດຄະເນລວມທັງ:

6. ການຄາດຄະເນທີ່ສຳຄັນທາງບັນຊີ ແລະ ການຕັ້ງສົມມຸດຖານ (ຕໍ່)

6.1 *ຄ່າເສື່ອມຂອງຊັບສິນທາງການເງິນ* (ຕໍ່)

- ວິທີການຈັດອັນດັບສິນເຊື່ອພາຍໃນບໍລິສັດ, ເຊິ່ງມອບໝາຍໂດຍ PDs ຕາມແຕ່ລະອັນດັບ;
- ເງື່ອນໄຂຂອງບໍລິສັດສຳລັບການປະເມີນ ຖ້າມີຄວາມສ່ຽງດ້ານສິນເຊື່ອທີ່ເພີ່ມຂຶ້ນຢ່າງຫຼວງຫຼາຍ ແລະ ສະນັ້ນ, ເງິນຜົນສຳລັບຊັບສິນທາງການເງິນຄວນຖືກວັດແທກບົນພື້ນຖານ LTECL ແລະ ຖືກປະເມີນຄຸນນະພາບ
- ການແບ່ງສ່ວນຂອງຊັບສິນທາງການເງິນ ເມື່ອວິທີການ ECL ຫຼື ອົງປະກອບຂອງ ECL ໄດ້ຖືກປະເມີນບົນພື້ນຖານການຮຽກເກັບຄືນ;
- ການພັດທະນາວິທີແບບ ECL, ລວມທັງຮູບແບບຕ່າງໆ ແລະ ທາງເລືອກໃນການປ້ອນເຂົ້າຂໍ້ມູນ;
- ການກຳນົດການພົວພັນລະຫວ່າງເສດຖະກິດມະຫາພາກ ແລະ ການປ້ອນເຂົ້າຂໍ້ມູນທາງເສດຖະກິດເຊັ່ນ: ການຂະຫຍາຍຕົວຂອງ GDP, ດັດສະນີ CPI ແລະ ອັດຕາຂອງການຊຳລະຊ້ຳ, ແລະ ຜົນກະທົບຂອງ PDs;
- ການຄັດເລືກເສດຖະກິດມະຫາພາກທີ່ຄາດວ່າຈະເກີດຂຶ້ນລ່ວງໜ້າ ແລະ ອາດຈະເກີດຂຶ້ນໄດ້ ເພື່ອຫາປັດໄຈທີ່ໃຊ້ໃນການປ້ອນເຂົ້າຂໍ້ມູນທາງເສດຖະກິດ ECL.

ບໍລິສັດມີນະໂຍບາຍທີ່ຈະກວດກາວິທີການດັ່ງກ່າວຢ່າງສະໝ່ຳສະເໝີ ອີງຕາມໜີ້ເສຍທີ່ເກີດຂຶ້ນຜ່ານມາ ແລະ ມີການດັດແກ້ຫາກຈຳເປັນ.

6.2 *ຄວາມສືບເນື່ອງໃນການດຳເນີນທຸລະກິດ*

ຄະນະບໍລິຫານຂອງບໍລິສັດໄດ້ປະເມີນຄວາມອາດສາມາດຂອງບໍລິສັດ ກ່ຳຄືຄວາມສືບເນື່ອງໃນການດຳເນີນທຸລະກິດ ແລະ ເປັນທີ່ໜ້າພໍໃຈວ່າບໍລິສັດມີແຫລ່ງທຶນ ເພື່ອສືບຕໍ່ໃນການດຳເນີນທຸລະກິດໃນອະນາຄົດ. ຍິ່ງໄປກວ່ານັ້ນ, ຄະນະບໍລິຫານບໍ່ມີສິ່ງຜິດປົກກະຕິໃດໆເປັນທີ່ໜ້າສົງໃສຕໍ່ກັບຄວາມອາດສາມາດຂອງບໍລິສັດ ເພື່ອສືບຕໍ່ດຳເນີນງານກ່ຳຄືຄວາມສືບເນື່ອງໃນການດຳເນີນທຸລະກິດ. ເພາະສະນັ້ນ, ເອກະສານລາຍງານການເງິນ ຍັງສືບຕໍ່ສ້າງຂຶ້ນບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ.

6.3 *ວິທີການຄິດໄລ່ອັດຕາດອກເບ້ຍທີ່ແທ້ຈິງ*

ດັ່ງທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍເລກທີ 5.2.3, ການຮັບຮູ້ດອກເບ້ຍພາຍໃຕ້ອັດຕາຂອງເງິນໄດ້ຮັບຄືນ ທີ່ສາມາດກຳນົດໄດ້ຢ່າງຖືກຕ້ອງທີ່ສຸດໂດຍນຳໃຊ້ອັດຕາດັ່ງທີ່ ຕາມອາຍຸຂອງເງິນກູ້ ແລະ ເງິນຝາກ ແລະ ຮັບຮູ້ຜົນກະທົບຂອງອັດຕາດອກເບ້ຍທີ່ອາດຈະແຕກຕ່າງໃນແຕ່ລະຂັ້ນຕອນ ແລະ ລັກສະນະອື່ນໆ ຈາກວົງຈອນອາຍຸຂອງແຕ່ລະຜະລິດຕະພັນ (ເຊັ່ນ: ການຈ່າຍລ່ວງໜ້າ, ຄ່າປັບໃໝ, ດອກເບ້ຍ ແລະ ຄ່າທຳນຽມອື່ນໆ). ການຄາດຄະເນນີ້ໄດ້ອີງໃສ່ລັກສະນະ, ອົງປະກອບຂອງການຕັດສິນໃຈ ກ່ຽວກັບລັກສະນະທີ່ຄາດຄະເນໄວ້ ແລະ ວົງຈອນຊີວິດຂອງເຄື່ອງມື, ເນື່ອງຈາກການປ່ຽນແປງຂອງລາຍຮັບ/ລາຍຈ່າຍອື່ນໆເປັນສ່ວນສຳຄັນຂອງເຄື່ອງມື.

7. ລາຍຮັບດອກເບ້ຍສຸດທິ

	2020 *ກີບ*	*2019* *ກີບ*
ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນໂດຍນຳໃຊ້ວິທີອັດຕາດອກເບ້ຍທີ່ແທ້ຈິງ:		
ໜີ້ຕ້ອງຮັບສັນຍາເຊົ່າຊື້	231,912,130,077	255,917,485,046
ເງິນຝາກປະຢັດ	71,254,146	13,091,677
ລາຍຮັບອື່ນໆດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ	19,326,467,950	6,512,899,181
	251,309,852,173	**262,443,475,904**
ລາຍຈ່າຍດອກເບ້ຍສຳລັບ:	(44,576,285,134)	(15,885,810,357)
ການກູ້ຢືມໄລຍະຍາວ	**(44,576,285,134)**	**(15,885,810,357)**
	206,733,567,039	**246,557,665,547**

8. ລາຍຈ່າຍຄ່າທຳນຽມ ແລະ ຄ່ານາຍໜ້າສຸດທິ

	2020 *ກີບ*	*2019* *ກີບ*
ລາຍຈ່າຍຄ່າທຳນຽມ ແລະ ຄ່ານາຍໜ້າສຸດທິສຳລັບ:		
ຄ່າທຳນຽມນາຍໜ້າ	1,417,136,715	2,359,095,640
ຄ່າທຳນຽມໂອນກຳມະສິດລົດໃຫ່ຍ/ລົດຈັກ	5,496,980,000	5,745,384,551
ຄ່າທຳນຽມອື່ນໆ	2,869,902,597	2,992,228,360
	9,784,019,312	**11,096,708,551**

9. ລາຍຮັບ/(ລາຍຈ່າຍ) ອື່ນໆຈາກການດຳເນີນງານ

	2020 *ກີບ*	*2019* *ກີບ*
ສະສາງເງິນກູ້	-	9,010,780,128
ລາຍຮັບອື່ນໆຈາກການດຳເນີນງານ	1,334,558,290	361,329,624
	1,334,558,290	**9,372,109,752**

10. ລາຍຈ່າຍທີ່ກ່ຽວຂ້ອງກັບພະນັກງານ

	2020 *ກີບ*	*2019* *ກີບ*
ລາຍຈ່າຍທີ່ກ່ຽວຂ້ອງກັບພະນັກງານ	24,851,275,198	25,259,623,081
ຄ່າໃຊ້ຈ່າຍອື່ນໆໃຫ້ພະນັກງານ	5,838,554,929	13,351,688,324
	30,689,830,127	**38,611,311,405**

11. ລາຍຈ່າຍໃນການດຳເນີນງານອື່ນໆ

	2020 *ກີບ*	*2019* *ກີບ*
ລາຍຈ່າຍການຕະຫຼາດ	117,838,908	521,110,064
ຄ່ານ້ຳມັນ	1,916,450,000	1,786,975,361
ຜູ້ສະໜອງ	3,429,653,629	3,354,099,450
ຄ່າທຳນຽມທາງກົດໝາຍ	468,611,620	457,461,009
ການສ້ອມແປງ ແລະ ບຳລຸງຮັກສາ	1,251,873,346	1,533,159,668
ຄ່າສາທາລະນຸປະໂພກ	3,300,061,335	2,930,599,608
ປະກັນໄພ	119,333,676	103,184,757
ຄ່າໃຊ້ຈ່າຍໃນການຂົນສົ່ງ ແລະ ເດີນທາງ	2,605,009,068	2,294,752,074
ອາກອນ ແລະ ຜັນທະປະກັນສັງຄົມ	10,388,024,810	7,461,028,584
ຄ່າເຊົ່າ	4,648,390,111	3,883,266,692
ລາຍຈ່າຍທີ່ປຶກສາ	3,221,850,901	2,157,151,002
ສະສາງເງິນລ່ວງໜ້າໃຫ້ພາກສ່ວນທີ່ກ່ຽວຂ້ອງ	-	14,538,967,740
ອື່ນໆ	3,770,666,113	5,544,196,663
	35,237,763,517	**46,565,952,672**

12. ເງິນສົດ ແລະ ທຽບເທົ່າເງິນສົດ

	31 ທັນວາ 2020	*31 ທັນວາ 2019*
	ກີບ	*ກີບ*
ເງິນສົດໃນຄັງ	1,310,333,042	1,636,095,318
ເງິນຝາກກະແສລາຍວັນ/ເງິນຝາກປະຢັດຢູ່ທະນາຄານ		
- ສະກຸນເງິນກີບ	15,558,659,989	49,859,207,344
- ສະກຸນເງິນບາດ	2,930,974,327	9,701,950,668
- ສະກຸນເງິນໂດລາ	73,005,139,438	275,592,957,285
- ສະກຸນເງິນອື່ນໆ	95,423,294	76,061,700
	92,900,530,090	**336,866,272,315**

13. ເງິນຝາກນຳທະນາຄານແຫ່ງ ສປປ ລາວ ("ທຫລ")

	31 ທັນວາ 2020	*31 ທັນວາ 2019*
	ກີບ	*ກີບ*
ຄັງສຳຮອງທຶນຈົດທະບຽນ		
- ສະກຸນເງິນກີບ	1,968,900,000	1,667,400,000
	1,968,900,000	**1,667,400,000**

ພາຍໃຕ້ກົດລະບຽບຂໍ້ບັງຄັບຂອງ ທຫລ, ບໍລິສັດຈະຕ້ອງຮັກສາຍອດເງິນຝາກຕ່ຳສຸດນຳ ທະນາຄານແຫ່ງ ສປປ ລາວ ເຊິ່ງ ຍອດຕ່ຳສຸດແມ່ນ 10% ຂອງທຶນຈົດທະບຽນ, ໂດຍອີງຕາມການແຈ້ງການຈາກ ທຫລ ເປັນແຕ່ລະໄລຍະ. ຍອດຂອງເງິນຝາກນີ້ ແມ່ນຈະບໍ່ໄດ້ຮັບດອກເບ້ຍ.

14. ໜີ້ຕ້ອງຮັບສັນຍາເຊົ່າຊື້

14.1 ໜີ້ຕ້ອງຮັບສັນຍາເຊົ່າຊື້

	31 ທັນວາ 2020	*31 ທັນວາ 2019*
	ກີບ	*ກີບ*
ໜີ້ຕ້ອງຮັບສັນຍາເຊົ່າຊື້	659,836,689,059	680,905,827,939
ເງິນແຮສຳລັບການເສື່ອມມູນຄ່າໜີ້ເສຍ	(42,295,828,431)	(52,462,525,116)
	617,540,860,628	**628,443,302,823**
ເຊິ່ງລວມ:		
ສ່ວນທີ່ໝຸນວຽນ	*470,747,714,292*	*296,845,940,995*
ສ່ວນທີ່ບໍ່ໝຸນວຽນ	*146,793,146,336*	*331,597,361,828*

14. ໜີ້ຕ້ອງຮັບສັນຍາເຊົ່າຊື້ (ຕໍ່)

14.1 *ໜີ້ຕ້ອງຮັບສັນຍາເຊົ່າຊື້ (ຕໍ່)*

ກຳມະສິດຂອງສິນຄ້າ ແມ່ນຈະຖືກໂອນໄປເປັນຊື່ຂອງລູກຄ້າໂດຍສົມບູນພາຍຫຼັງທີ່ມີການຊຳລະເງິນຕົ້ນ ແລະ ດອກເບ້ຍຮຽບຮ້ອຍແລ້ວ. ບັນຊີລູກໜີ້ຈະຖືກຮັບປະກັນໂດຍບຸກຄົນທີສາມເຊິ່ງຈະເປັນຄົນຮັບຜິດຊອບຊຳລະສະສາງແທນໃນກໍລະນີທີ່ລູກຄ້າບໍ່ມາຊຳລະ.

ອັດຕາດອກເບ້ຍສຳລັບໜີ້ຕ້ອງຮັບສັນຍາເຊົ່າຊື້ພາຍໃນປີແມ່ນດັ່ງລຸ່ມນີ້:

	2020 *% ຕໍ່ເດືອນ*	*2019* *% ຕໍ່ເດືອນ*
ໜີ້ຕ້ອງຮັບສັນຍາເຊົ່າຊື້ຈາກຜະລິດຕະພັນລິດໃຫຍ່	0.01% - 5.00%	0.65% - 5.00%
ໜີ້ຕ້ອງຮັບສັນຍາເຊົ່າຊື້ຈາກຜະລິດຕະພັນລິດຈັກ	0.01% - 6.00%	1.8% - 10%

ວິເຄາະໂດຍສະກຸນເງິນ

	31 ທັນວາ 2020 *ກີບ*	*31 ທັນວາ 2019* *ກີບ*
ໜີ້ຕ້ອງຮັບສັນຍາເຊົ່າຊື້ໃນສະກຸນເງິນ ກີບ	17,572,356,110	13,399,170,836
ໜີ້ຕ້ອງຮັບສັນຍາເຊົ່າຊື້ໃນສະກຸນເງິນ ໂດລາ	611,330,013,731	644,749,594,476
ໜີ້ຕ້ອງຮັບສັນຍາເຊົ່າຊື້ໃນສະກຸນເງິນ ບາດ	30,934,319,218	22,757,062,627
	659,836,689,059	**680,905,827,939**

14.2 *ເງິນແຮສຳລັບການເສື່ອມມູນຄ່າໜີ້ເສຍ*

ຕາຕະລາງລຸ່ມນີ້ສະແດງໃຫ້ເຫັນສ່ວນປ່ຽນແປງໃນເງິນແຮສຳລັບຄ່າເສື່ອມຂອງໜີ້ເສຍຂອງໜີ້ຕ້ອງຮັບສັນຍາເຊົ່າຊື້ທີ່ບັນທຶກໃນໃບລາຍງານຜົນການດຳເນີນງານ.

	ຂັ້ນທີ 1 *ກີບ*	*ຂັ້ນທີ 2* *ກີບ*	*ຂັ້ນທີ 3* *ກີບ*	*ລວມ* *ກີບ*
ໜີ້ຕ້ອງຮັບສັນຍາເຊົ່າຊື້	327,318,311	14,886,217,447	(5,046,839,073)	10,166,696,685
ລວມໜີ້ຕ້ອງຮັບສັນຍາເຊົ່າຊື້	**327,318,311**	**14,886,217,447**	**(5,046,839,073)**	**10,166,696,685**

ການປ່ຽນແປງໃນເງິນແຮສຳລັບຄ່າເສື່ອມຂອງໜີ້ເສຍແມ່ນປະກອບມີດັ່ງລຸ່ມນີ້:

	2020 *ກີບ*	*2019* *ກີບ*
ຍອດຍົກມາ	52,462,525,116	18,645,687,521
ປ່ຽນແປງ/(ລົບລ້າງ) ພາຍໃນປີ	(10,166,696,685)	33,816,837,595
ຍອດເຫຼືອທ້າຍ	**42,295,828,431**	**52,462,525,116**

14. ໜີ້ຕ້ອງຮັບສັນຍາເຊົ່າຊື້ (ຕໍ່)

14.2 ເງິນຮອງສຳລັບການເສື່ອມມູນຄ່າໜີ້ເສຍ (ຕໍ່)

ຕາຕະລາງລຸ່ມນີ້ສະແດງເຖິງຄຸນນະພາບຂອງສິນເຊື່ອ ແລະ ຄວາມສ່ຽງດ້ານສິນເຊື່ອທີ່ເກີດຂຶ້ນສູງສຸດໃນການຈັດອັນດັບສິນເຊື່ອຂອງລະບົບພາຍໃນ, 12 ເດືອນອີງຕາມອັນດັບຂອງ PD ແລະ ການຈັດອັນດັບທ້າຍປີ.

ການຈັດອັນດັບພາຍໃນ (ຈຳນວນ DPD)	*12-ເດືອນ PD ອະຫລ່ຽ*	*ຂັ້ນທີ 1*		*ຂັ້ນທີ 2*		*ຂັ້ນທີ 3*		*ລວມ*	
		ມູນຄ່າຍອດຍົກມາ ກີບ	*ECL ກີບ*	*ມູນຄ່າຍອດຍົກມາ ກີບ*	*ECL ກີບ*	*ມູນຄ່າຍອດຍົກມາ ກີບ*	*ECL ກີບ*	*ມູນຄ່າຍອດຍົກມາ ກີບ*	*ECL ກີບ*
	1.84% ຫາ								
0 DPD	10.44%	394,970,636,914	874,502,455	-	-	-	-	394,970,636,914	874,502,455
	16.12% ຫາ								
1 - 89 DPD	49.42%	-	-	100,437,967,739	3,042,771,791	-	-	100,437,967,739	3,042,771,791
90+ DPD	100.00%	-	-	-	-	164,428,084,406	38,378,554,185	164,428,084,406	38,378,554,185
		394,970,636,914	**874,502,455**	**100,437,967,739**	**3,042,771,791**	**164,428,084,406**	**38,378,554,185**	**659,836,689,059**	**42,295,828,431**

15. ຊັບສິນອື່ນໆ

	31 ທັນວາ 2020	*31 ທັນວາ 2019*
	ກີບ	*ກີບ*
ເງິນລ່ວງໜ້າໃຫ້ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍເລກທີ 22)	96,591,650	-
ອາກອນເງິນປັນຜົນລ່ວງໜ້າ	1,487,761,490	1,487,761,491
ເງິນລ່ວງໜ້າໃຫ້ພາກສ່ວນທີ່ກ່ຽວຂ້ອງອື່ນ	6,116,513,481	11,006,734,837
ເງິນລ່ວງໜ້າອື່ນໆ	291,818,469	756,507,869
ຄ່າເຊົ່າຈ່າຍລ່ວງໜ້າ	2,338,968,613	2,242,209,206
ຊັບສິນອື່ນໆ	1,072,360,962	4,322,220,776
	11,404,014,665	**19,815,434,179**

16. ຊັບສິມບັດ ແລະ ອຸປະກອນ

ການເຄື່ອນໄຫວຂອງຊັບສິມບັດ ແລະ ອຸປະກອນ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2020 ມີດັ່ງລຸ່ມນີ້:

	ພາຫານະ	*ເຟີນີເຈີ ແລະ ສິ່ງຕິດຕັ້ງ*	*ອຸປະກອນ ຄອມພິວເຕີ*	*ລວມ*
	ກີບ	*ກີບ*	*ກີບ*	*ກີບ*
ຕົ້ນທຶນ				
ນະວັນທີ 1 ມັງກອນ 2020	4,369,517,343	411,694,422	2,599,626,403	7,380,838,168
ຊື້ເພີ່ມ	-	166,738,926	335,807,442	502,546,368
ນະວັນທີ 31 ທັນວາ 2020	4,369,517,343	578,433,348	2,935,433,845	7,883,384,536
ຄ່າຫຼຸ້ຍຫ້ຽນສະສົມ				
ນະວັນທີ 1 ມັງກອນ 2020	3,656,270,556	185,053,457	825,585,462	4,666,909,475
ຄ່າຫຼຸ້ຍຫ້ຽນພາຍໃນປີ 2020	307,173,616	102,899,555	578,287,501	988,360,672
ນະວັນທີ 31 ທັນວາ 2020	3,963,444,172	287,953,012	1,403,872,963	5,655,270,147
ມູນຄ່າສຸດທິຕາມບັນຊີ				
ນະວັນທີ 1 ມັງກອນ 2020	713,246,787	226,640,965	1,774,040,941	2,713,928,693
ນະວັນທີ 31 ທັນວາ 2020	406,073,171	290,480,336	1,531,560,882	2,228,114,389

17. ພັນທະທາງກົດໝາຍ

	31 ທັນວາ 2020	*31 ທັນວາ 2019*
	ກີບ	*ກີບ*
ອາກອນເງິນເດືອນ	404,976,125	5,413,787
ອາກອນທີ່ຫັກໄວ້ຈາກຜູ້ຮັບເໝົາຕ່າງປະເທດ	8,490,226,552	10,217,523,299
ອາກອນກຳໄລ (*)	79,274,983,851	65,632,551,902
	88,170,186,528	**75,855,488,988**

(*) ລາຍລະອຽດຂອງອາກອນກຳໄລແມ່ນມີດັ່ງລຸ່ມນີ້:

	31 ທັນວາ 2020	*31 ທັນວາ 2019*
	ກີບ	*ກີບ*
ອາກອນກຳໄລປີ 2019	58,680,131,107	27,443,966,079
ອາກອນກຳໄລປີ 2020 *(ບົດອະທິບາຍເລກທີ 19)*	20,594,852,744	38,188,585,823
	79,274,983,851	**65,632,551,902**

ອີງຕາມບົດບັນທຶກການກວດກາຂອງເຈົ້າໜ້າທີ່ສ່ວຍສາອາກອນ ກ່ຽວກັບຜົນໄດ້ຮັບຈາກການກວດກາ ສຳລັບປີ 2015 – 2020, ມູນຄ່າໜີ້ຕ້ອງສົ່ງອາກອນກຳໄລ ນະວັນທີ 31 ທັນວາ 2020 ແມ່ນ 1.7 ຕື້ກີບ. ສ່ວນຕ່າງມູນຄ່າ 77.3 ຕື້ກີບລະຫວ່າງ ຕົວເລກໜີ້ຕ້ອງສົ່ງອາກອນທີ່ນຳສະເໜີໃນເອກະສານລາຍງານການເງິນ ແລະ ບົດບັນທຶກການກວດກາສ່ວຍສາອາກອນອາດ ກໍ່ໃຫ້ເກີດມີການຮຽກຮ້ອງໃຫ້ມອບອາກອນເພີ່ມເຕີມໂດຍເຈົ້າໜ້າທີ່ສ່ວຍສາອາກອນໃນອະນາຄົດ.

18. ເງິນກູ້ຢືມ

ເງິນກູ້ຢືມນະວັນທີ 31 ທັນວາ 2020 ມີດັ່ງນີ້:

ຜູ້ໃຫ້ກູ້ຢືມ	*31 ທັນວາ 2020* *ກີບ*	*31 ທັນວາ 2019* *ກີບ*
ເງິນກູ້ໄລຍະສັ້ນ		
ທະນາຄານ ລາວ-ຝຣັ່ງ	12,666,524,877	5,812,911,034
First Geneva Investors SA	57,600,515,586	173,084,439,747
Varteni Investment Limited	44,311,942,247	328,084,317,425
	114,578,982,710	**506,981,668,206**
ເຊິ່ງລວມ:		
ສ່ວນທີ່ໝຸນວຽນ	*9,277,676,355*	*5,812,911,034*
ສ່ວນທີ່ບໍ່ໝຸນວຽນ	*105,301,306,355*	*501,168,757,172*
	12,666,524,877	5,812,911,034

ລາຍລະອຽດຂອງເງື່ອນໄຂ ແລະ ດອກເບ້ຍຂອງເງິນກູ້ຢືມນະວັນທີ 31 ທັນວາ 2020 ມີດັ່ງນີ້:

ຜູ້ໃຫ້ກູ້ຢືມ	*ສະກຸນເງິນ*	*31 ທັນວາ 2020* *ມູນຄ່າຕາມສະກຸນ* *ເງິນເດີມ*	*ໄລຍະເວລາ*	*ວິທີການຊຳລະເງິນກູ້*	*ອັດຕາດອກເບ້ຍ*
ທະນາຄານ ລາວ-ຝຣັ່ງ	ໂດລາ	1,364,762	2 ປີ ເລີ່ມຕັ້ງແຕ່ 30 ເມສາ 2020	ຕົ້ນທຶນ ແລະ ດອກເບ້ຍ ແມ່ນຊຳລະທຸກໆເດືອນ	8.50% ຕໍ່ປີ
First Geneva Investors SA	ໂດລາ	6,175,682	10 ປີ ເລີ່ມຕັ້ງແຕ່ 9 ພຶດສະພາ 2015	ຕົ້ນທຶນ ແລະ ດອກເບ້ຍ ແມ່ນຊຳລະມື້ຄົບກຳນົດ	10.00% ຕໍ່ປີ
Varteni Investment Limited	ໂດລາ	4,766,262	10 ປີ ເລີ່ມຕັ້ງແຕ່ 29 ກໍລະກົດ 2015	ຕົ້ນທຶນ ແລະ ດອກເບ້ຍ ແມ່ນຊຳລະມື້ຄົບກຳນົດ	10.00% ຕໍ່ປີ

19. ອາກອນກຳໄລ

ອາກອນກຳໄລໃນປີ

ສ່ວນປະກອບຫຼັກຂອງລາຍຈ່າຍອາກອນກຳໄລ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2020 ແລະ 31 ທັນວາ 2019 ປະກອບມີ:

	2020 *ກີບ*	2019 *ກີບ*
ອາກອນກຳໄລໃນປີ:		
ອາກອນກຳໄລໃນປີ	19,099,597,040	28,616,724,311
ລາຍຈ່າຍທີ່ບໍ່ຖືໃຫ້ເປັນລາຍຈ່າຍ	1,595,255,704	9,571,861,512
ລາຍຈ່າຍອາກອນກຳໄລທີ່ລາຍງານໃນໃບລາຍງານຜົນການດຳເນີນງານ	**20,694,852,744**	**38,188,585,823**

ອີງຕາມກົດໝາຍສ່ວຍສາອາກອນ ສະບັບເລກທີ 70/ສພຊ ລົງວັນທີ 15 ທັນວາ 2015 ເຊິ່ງມີຜົນບັງຄັບໃຊ້ແຕ່ວັນທີ ຫຼື ຫຼັງວັນທີ 24 ພຶດສະພາ 2016. ບໍລິສັດແມ່ນໄດ້ຮັບອັດຕາອາກອນກຳໄລຫຼຸດຈາກອັດຕາປົກກະຕິ 5% ຈາກອັດຕາອາກອນກຳໄລທົ່ວໄປ ສຳລັບ 4 ປີ ນັບຈາກ 2019 ຫາ 2022. ຫຼັງຈາກນັ້ນ, ບໍລິສັດມີພັນທະຕ້ອງຈ່າຍອາກອນ ດັ່ງນັ້ນ ກຳໄລທີ່ຕ້ອງເສຍອາກອນ ປີ 2019 ແມ່ນຄິດໄລ່ 24%. ດັ່ງນັ້ນ, ອັດຕາອາກອນກຳໄລຂອງບໍລິສັດສຳລັບປີ 2019 ແມ່ນ 19%.

ອີງຕາມກົດໝາຍສ່ວຍສາອາກອນສະບັບເລກທີ 67/ສພຊ ລົງວັນທີ 18 ມິຖຸນາ 2019 (ປ່ຽນແທນກົດໝາຍສ່ວຍສາອາກອນ ສະບັບເລກທີ 70/ສພຊ) ເຊິ່ງມີຜົນສັກສິດນັບຕັ້ງແຕ່ວັນທີ 1 ມັງກອນ 2020, ບໍລິສັດທີ່ຈົດທະບຽນເຂົ້າຕະຫຼາດຫຼັກຊັບລາວເປັນໄລຍະເວລາ 4 ປີ ນັບຕັ້ງແຕ່ມື້ຈົດທະບຽນຈະນຳໃຊ້ອັດຕາ 13% ແລະ 20% ສຳລັບປີຖັດໄປ. ອີງຕາມ, ອັດຕາອາກອນກຳໄລທີ່ບໍລິສັດນຳໃຊ້ໃນປີ 2020 ແມ່ນ 13%.

ເນື່ອງຈາກກົດໝາຍ ແລະ ລະບຽບທາງດ້ານສ່ວຍສາອາກອນແມ່ນຖືກນຳໃຊ້ກັບລາຍການເຄື່ອນໄຫວຫຼາຍປະເພດ ເຊິ່ງອາດຈະມີການຕີຄວາມໝາຍທີ່ແຕກຕ່າງກັນ, ຈຳນວນ ທີ່ໄດ້ສະແດງຢູ່ໃນເອກະສານລາຍງານການເງິນ ປີອາດຈະຖືກປ່ຽນແປງຫຼັງຈາກມື້ໄລ່ລຽງຂອງກົມສ່ວຍສາອາກອນ.

20. ກຳໄລຕໍ່ຮຸ້ນ

ພື້ນຖານຄິດໄລ່ ກຳໄລຕໍ່ຮຸ້ນ ແມ່ນຄິດໄລ່ເງິນປັນຜົນຂອງກຳໄລພາຍໃນປີຫານໃຫ້ຈຳນວນ ຜູ້ຖືຮຸ້ນສາມັນຂອງບໍລິສັດແມ່ດ້ວຍການເອົາຈຳນວນສະເລ່ຍຈຳນວນ ຮຸ້ນສາມັນທັງໝົດພາຍໃນປີ.

ຕາຕະລາງຕໍ່ໄປນີ້ສະແດງໃຫ້ເຫັນລາຍຮັບ ແລະ ຂໍ້ມູນຂອງຮຸ້ນທີ່ໃຊ້ເຂົ້າໃນການຄິດໄລ່ຫາກຳໄລຕໍ່ຮຸ້ນ:

	2020 *ກີບ*	*2019* *ກີບ*
ກຳໄລທີ່ເປັນໃຫ້ສ່ວນຂອງຜູ້ຖືຮຸ້ນສາມັນຂອງບໍລິສັດແມ່	*126,225,124,490*	*92,300,533,134*
ຈຳນວນຮຸ້ນສາມັນສະເລ່ຍທັງໝົດ	*301,500,000*	*263,398,352*
ກຳໄລຕໍ່ຮຸ້ນ	*419*	*350*

21. ທຶນຈົດທະບຽນຖອກແລ້ວ

21.1 ຮຸ້ນສາມັນ

	31 ທັນວາ 2020		*31 ທັນວາ 2019*	
	ຈຳນວນຮຸ້ນ	*ມູນຄ່າ (ກີບ)*	*ຈຳນວນຮຸ້ນ*	*ມູນຄ່າ (ກີບ)*
ຮຸ້ນທີ່ໄດ້ຮັບອະນຸມັດ				
ຮຸ້ນທີ່ໄດ້ອອກ ແລະ ຖອກແລ້ວ				
ຮຸ້ນສາມັນ	301,500,000	30,150,000,000	241,200,000	24,120,000,000
ຍອດເຫຼືອທ້າຍປີ	**301,500,000**	**30,150,000,000**	**241,200,000**	**24,120,000,000**

ໃນວັນທີ 9 ກັນຍາ 2019, ບໍລິສັດໄດ້ຮັບໜັງສືຢັ້ງຢືນຜົນການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຄັ້ງທຳອິດ(IPO) ອອກໃຫ້ໂດຍສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບລາວ. ເນື່ອງຈາກວ່າບໍລິສັດໄດ້ສຳເລັດຂັ້ນຕອນອອກ IPO ດ້ວຍການອອກຈຳນວນ 60,300,000 ຮຸ້ນ ໃນລາຄາໜ້າບັດ 100 ກີບ/ຮຸ້ນ ແລະ ມີລາຄາຂາຍມູນຄ່າ 2,700ກີບ/ຮຸ້ນ

ມູນຄ່າຂອງຮຸ້ນທັງໝົດຂອງບໍລິສັດຈຳນວນ 301,500,000 ຮຸ້ນ (ພາຍໃຕ້ການເປັນເຈົ້າຂອງ " ລາວອາຊຽນ ເຊົ່າສິນເຊື່ອ") ຖືກຈົດທະບຽນຢ່າງເປັນທາງການໃນຕະຫຼາດຫຼັກຊັບ ນະວັນທີ 19 ສິງຫາ 2019. ມູນຄ່າໜ້າບັດຂອງແຕ່ລະຮຸ້ນແມ່ນ 100 ກີບ.

ລາຍລະອຽດຜູ້ຖືຮຸ້ນຂອງບໍລິສັດໃນວັນທີ 31 ທັນວາ 2019 ມີດັ່ງນີ້:

	31 ທັນວາ 2020		*31 ທັນວາ 2019*	
	ລວມ (ກີບ)	*ຈຳນວນຮຸ້ນ ສາມັນ*	*ລວມ (ກີບ)*	*ຈຳນວນຮຸ້ນ ສາມັນ*
O International Ltd. (i)	6,170,270,000	61,702,700	3,818,290,000	38,182,900
LALCO Holdings Pte Ltd. (ii)	23,617,480,000	236,174,800	23,316,000,000	233,160,000
ຜູ້ລົງທຶນອື່ນໆ	362,250,000	3,622,500	3,015,710,000	30,157,100
	30,150,000,000	**301,500,000**	**30,150,000,000**	**301,500,000**

21. ທຶນຈົດທະບຽນຖອກແລ້ວ (ຕໍ່)

21.1 ຮຸ້ນສາມັນ (ຕໍ່)

(i) O International Ltd ເປັນບໍລິສັດທີ່ຈຳກັດໜ້ສິນຕັ້ງຢູ່ໝູ່ເກາະເຄແມນ ຕາມໃບທະບຽນເລກທີ 293031 ອອກໃນວັນ ຕຸລາ ປີ 2014. ການດຳເນີນທຸລະກິດຫລັກຂອງ O International Ltd ແມ່ນການລົງທຶນ, ອຸດສາຫາກຳອະສັງຫາລິມາຊັບ ແລະ ການໃຫ້ຄຳປຶກສາ ແລະ ການບໍລິການທາງການເງິນ.

(ii) LALCO Holdings Pte Ltd. ເປັນບໍລິສັດທີ່ຈຳກັດໜ້ສິນຢູ່ໃນປະເທດສິງກະໂປ ຕາມໃບທະບຽນເລກທີ 201542276K ອອກໃນເດືອນ ທັນວາ ປີ 2015. ການດຳເນີນທຸລະກິດຫລັກຂອງ LALCO Holdings Pte Ltd. ແມ່ນການບໍລິຫານ, ເທັກໂນໂລຊີ, ແລະ ສະໜອງການບໍລິການທາງທຸລະກິດ ແລະ ທຸລະກິດການລົງທຶນ.

21.2 ສ່ວນເພີ່ມມູນຄ່າຮຸ້ນ

ສ່ວນເພີ່ມມູນຄ່າຮຸ້ນເກີດຈາກການອອກຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ຈຳນວນ 155,497,646,314 ກີບ, ແມ່ນສ່ວນຕ່າງລະຫວ່າງລາຄາຈຳໜ່າຍ 162,810,000,000 ກີບ ແລະ ມູນຄ່າໜ້າບັດຂອງຮຸ້ນທັງໝົດແມ່ນ (6,030,000,000 ກີບ) ຫັກຈາກຫັກຕົ້ນທຶນໃນການອອກຮຸ້ນ (1,282,353,686 ກີບ).

22. ບັນດາລາຍການພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ ລວມເອົາທຸກໆລາຍການເຄື່ອນໄຫວທີ່ໄດ້ດຳເນີນງານກັບພາກສ່ວນອື່ນໆ ເຊິ່ງມີສາຍພົວພັນກັບບໍລິສັດ, ພາກສ່ວນທີ່ຈະກ່ຽວຂ້ອງກັບບໍລິສັດຖ້າຫາກວ່າ:

(ກ) ແບບທາງກົງ ຫຼື ແບບທາງອ້ອມ ໂດຍຜ່ານໜຶ່ງ ຫຼື ຫຼາຍສື່ກາງ, ເຊິ່ງພາກສ່ວນດັ່ງກ່າວ:

- ມີການຄວບຄຸມ (ຖືກຄວບຄຸມໂດຍ), ຫຼື ພາຍໃຕ້ການຄວບຄຸມໂດຍ ບໍລິສັດ (ໃນນີ້ລວມມີ ບໍລິສັດແມ່, ບໍລິສັດໃນເຄືອ ແລະ ສະມາຊິກຂອງບໍລິສັດໃນເຄືອ);
- ມີຜົນປະໂຫຍດນຳກັນກັບບໍລິສັດ ເຊິ່ງສິ່ງຜົນກະທົບທີ່ໃຫຍ່ຫຼວງຕໍ່ກັບ ບໍລິສັດ; ຫຼື
- ມີສ່ວນຮ່ວມໃນການຄວບຄຸມ ບໍລິສັດ

(ຂ) ພາກສ່ວນດັ່ງກ່າວແມ່ນມີຮຸ້ນສ່ວນນຳ ບໍລິສັດ;

(ຄ) ພາກສ່ວນທີ່ກ່ຽວຂ້ອງແມ່ນສະມາຊິກຄົນສຳຄັນຂອງ ຜູ້ບໍລິຫານຫຼັກຂອງ ບໍລິສັດ ຫຼື ບໍລິສັດແມ່;

(ງ) ພາກສ່ວນທີ່ກ່ຽວຂ້ອງແມ່ນສະມາຊິກທີ່ໃກ້ຊິດຂອງຄອບຄົວຂອງບຸກຄົນສະເພາະທີ່ໄດ້ກ່າວເຖິງໃນຂໍ້ (ກ) ຫຼື (ຄ);

(ຈ) ພາກສ່ວນທີ່ກ່ຽວຂ້ອງກໍ່ແມ່ນຜູ້ທີ່ຄວບຄຸມ ບໍລິສັດ, ມີສ່ວນຮ່ວມໃນການຄວບຄຸມ ຫຼື ມີອິດທິພົນອັນໃຫຍ່ຫຼວງ, ຫຼື ມີສິດທິອຳນາດໃນການອອກສຽງສ່ວນໃຫຍ່ຕໍ່ໜ່ວຍງານທີ່ດຳເນີນທຸລະກິດຢູ່ (ໂດຍທາງກົງ ຫຼື ທາງອ້ອມ) ທຸກໆພາກສ່ວນທີ່ໄດ້ກ່າວເຖິງໃນຂໍ້ (ຄ) ຫຼື (ງ); ຫຼື

(ສ) ພາກສ່ວນທີ່ກ່ຽວຂ້ອງທີ່ມີແຜນໄດ້ຮັບຜົນປະໂຫຍດພາຍຫຼັງອອກວຽກສຳລັບພະນັກງານຂອງບໍລິສັດ ຫຼື ໜ່ວຍງານອື່ນໆທີ່ມີສາຍພົວພັນກັບ ບໍລິສັດ.

22. ບັນດາລາຍການພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ພາຍໃນປີ 2020 ແລະ 2019, ນອກເໜືອຈາກຄ່າຕອບແທນທີ່ໄດ້ຈ່າຍໃຫ້ສະພາອຳນວຍການຂອງບໍລິສັດ, ບໍລິສັດມີການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງຕໍ່ໄປນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ສາຍພົວພັນ*
► O International Ltd.	ຜູ້ຖືຮຸ້ນ
► Bluebird Co., Ltd.	ຜູ້ຖືຮຸ້ນກ່ອນ ວັນທີ 1 ມັງກອນ 2018
► BBHD Co., Ltd.	ຜູ້ຖືຮຸ້ນກ່ອນ ວັນທີ 1 ມັງກອນ 2018
► Lalugo Group Hotel Sole Co., Ltd	ເປັນເຈົ້າຂອງໂດຍອະດີດຜູ້ອຳນວຍການ ແລະ ສະມາຊິກສະພາອຳນວຍການ
► Laluco Hotel 1 Sole Co., Ltd	ເປັນເຈົ້າຂອງໂດຍອະດີດຜູ້ອຳນວຍການໃຫຍ່ ແລະ ສະມາຊິກສະພາອຳນວຍການ
► Mekong Finance	ເປັນເຈົ້າຂອງໂດຍຜູ້ອຳນວຍການໃຫ່ຍ
► Ogisaka Co.,Ltd	ເປັນເຈົ້າຂອງໂດຍຜູ້ອຳນວຍການໃຫ່ຍ
► Pawn shop number one individual Enterprise	ບໍລິສັດໃນເຄື່ອ
► Lao Thongkeo leasing Company Limited	ເປັນເຈົ້າຂອງໂດຍຫົວໜ້າຜູ້ບໍລິຫານໃຫຍ່

22. ບັນດາລາຍການພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

22.1 *ການເຄື່ອນໄຫວທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງ*

ພາກສ່ວນທີ່ກ່ຽວຂ້ອງ	*ລາຍການເຄື່ອນໄຫວ*	*2020 ກີບ*	*2019 ກີບ*
Bluebird Co., Ltd.	ການຈ່າຍເງິນໃນນາມຂອງບໍລິສັດ	-	(771,159,306)
	ບໍລິການຄຸ້ມຄອງຄິດຄ່າທຳນຽມ	-	(2,659,500,000)
	ລາຍຈ່າຍດອກເບ້ຍເງິນກູ້	-	(2,319,992,104)
	ສະສາງຈ່າຍລ່ວງໜ້າ	-	-
	ການຈ່າຍເງິນໃນນາມຂອງພາກສ່ວນທີ່ກ່ຽວຂ້ອງ	-	73,365,086,240
	ຊົດເຊີຍການຈ່າຍເງິນກູ້ຢືມໃນນາມຂອງພາກສ່ວນທີ່ກ່ຽວຂ້ອງ	-	24,223,881,065
	ການຈ່າຍເງິນໜີ້ຕ້ອງສົ່ງໃນນາມຂອງພາກສ່ວນທີ່ກ່ຽວຂ້ອງ	-	49,141,205,175
	ສະສາງລາຍຈ່າຍລ່ວງໜ້າອື່ນໆຂອງພາກສ່ວນທີ່ກ່ຽວຂ້ອງ	6,206,365,367	
BBHD Co., Ltd.	ລາຍຈ່າຍດອກເບ້ຍເງິນກູ້	-	-
	ສະສາງເງິນກູ້	-	9,010,780,128
Lalugo Group Hotel Sole Co., Ltd	ການຈ່າຍເງິນໃນນາມຂອງພາກສ່ວນທີ່ກ່ຽວຂ້ອງ	96,591,650	493,658,934
	ສະສາງເງິນກູ້	-	(7,890,507,019)
Laluco Hotel 1 Sole Co.,Ltd	ເງິນລ່ວງໜ້າໃຫ້ພາກສ່ວນທີ່ກ່ຽວຂ້ອງ	-	295,199,029
	ສະສາງເງິນລ່ວງໜ້າ	-	(711,817,450)
ຜູ້ຖືຮຸ້ນຂອງ Mekong Finace	ສະສາງເງິນລ່ວງໜ້າ	-	(1,489,320,000)
Mekong Finace	ເງິນລ່ວງໜ້າໃຫ້ພາກສ່ວນທີ່ກ່ຽວຂ້ອງ	-	488,506,377
	ສະສາງເງິນລ່ວງໜ້າ	-	(488,506,377)
Ogisaka Co., Ltd.	ເງິນລ່ວງໜ້າໃຫ້ພາກສ່ວນທີ່ກ່ຽວຂ້ອງ	153,186,321	164,915,360
	ສະສາງເງິນລ່ວງໜ້າ	-	(212,915,360)

22. ບັນດາລາຍການພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

22.2 *ຍອດເຫຼືອທີ່ສຳຄັນກັບພາກສ່ວນກ່ຽວຂ້ອງ* (ຕໍ່)

22.2.1 ລາຍຈ່າຍລ່ວງໜ້າໃຫ້ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍເລກທີ 25)

	31 ທັນວາ 2020	*31 ທັນວາ 2019*
	ກີບ	*ກີບ*
Lalugo Group Hotel Sole Co., Ltd	96,591,650	-
	96,591,650	**-**

22.2.2 *ໜີ້ຕ້ອງສົ່ງພາກສ່ວນທີ່ກ່ຽວຂ້ອງ*

	31 ທັນວາ 2020	*31 ທັນວາ 2019*
	ກີບ	*ກີບ*
Pawn shop number one Individual Enterprise	900,000,000	-
Lao Thongkeo leasing Company Limited	4,333,900,000	-
	5,233,900,000	**-**

23. ນະໂຍບາຍບໍລິຫານຄວາມສ່ຽງ

ຄຳນຳ

ຄວາມສ່ຽງໝາຍເຖິງຄວາມສ່ຽງໃນຕົວທີ່ເກີດຂຶ້ນກັບກິດຈະກຳຂອງບໍລິສັດ ໂດຍຜ່ານຕົວຊີ້ບອກທີ່ຊັດເຈນ, ຜ່ານການ ວັດແທກ ແລະ ການຄວບຄຸມ, ຂອບເຂດຄວາມສ່ຽງ ແລະ ການຄຸ້ມຄອງອື່ນໆ. ການບໍລິຫານຄວາມສ່ຽງ ແມ່ນສິ່ງທີ່ສຳຄັນຕໍ່ ຄວາມສາມາດ ສ້າງກຳໄລຢ່າງຕໍ່ເນື່ອງຂອງບໍລິສັດ ແລະ ພະນັກງານແຕ່ລະຄົນພາຍໃນບໍລິສັດ ແມ່ນຕ້ອງຮັບຜິດຊອບຕໍ່ຄວາມສ່ຽງທີ່ເກີດຂຶ້ນ ເຊິ່ງ ກ່ຽວຂ້ອງກັບໜ້າທີ່ຂອງຕົນ.

ບໍລິສັດມີຄວາມສ່ຽງທາງດ້ານສິນເຊື່ອ, ຄວາມສ່ຽງສະພາບຄ່ອງ ແລະ ຄວາມສ່ຽງທາງດ້ານຕະຫຼາດ ແລະ ຫລັງຈາກນັ້ນໄດ້ແບ່ງ ອອກເປັນກຸ່ມຄວາມສ່ຽງຍ່ອຍຄື: ຄວາມສ່ຽງການຄ້າ ແລະ ຄວາມສ່ຽງບໍ່ແມ່ນການຄ້າ. ນອກນັ້ນ, ບໍລິສັດຍັງມີຄວາມສ່ຽງອື່ນໆອີກ ທີ່ເກີດຈາກການດຳເນີນງານ.

ຂະບວນການໃນການຄຸ້ມຄອງຄວາມສ່ຽງເອກະລາດ ບໍ່ໄດ້ລວມເອົາຄວາມສ່ຽງທຸລະກິດ ເຊັ່ນ: ການປ່ຽນແປງຂອງສະພາບແວດ ລ້ອມ, ເຕັກໂນໂລຊີ ແລະ ອຸດສາຫະກຳ. ນະໂຍບາຍຂອງບໍລິສັດແມ່ນເພື່ອຄວບຄຸມຄວາມສ່ຽງທຸລະກິດຜ່ານຂັ້ນຕອນ ແລະ ແຜນ ຍຸດທະສາດຂອງບໍລິສັດ.

ໂຄງສ້າງຂອງການຄຸ້ມຄອງຄວາມສ່ຽງ

ສະພາອຳນວຍການແມ່ນມີຄວາມຮັບຜິດຊອບສຳລັບການບໍລິຫານຄວາມສ່ຽງໂດຍລວມແລະ ສຳລັບການອະນຸມັດ ກົນລະຍຸດ ແລະ ຫລັກການບໍລິຫານຄວາມສ່ຽງ.

ສະພາໄດ້ແຕ່ງຕັ້ງພະນັກງານຄວບຄຸມຄວາມສ່ຽງເຊິ່ງຮັບຜິດຊອບກ່ຽວກັບການຄວບຄຸມການຈັດການຄວາມສ່ຽງໂດຍລວມຂອງ ບໍລິສັດ.

23. ນະໂຍບາຍບໍລິຫານຄວາມສ່ຽງ (ຕໍ່)

ໂຄງສ້າງຂອງການຄຸ້ມຄອງຄວາມສ່ຽງ (ຕໍ່)

ພະນັກງານຄວບຄຸມຄວາມສ່ຽງມີຄວາມຮັບຜິດຊອບໃນການຜັດທະນາກົນລະຍຸດ ແລະ ຫລັກການໂດຍລວມ, ຂອບເຂດວຽກ, ນະໂຍບາຍ ແລະ ຂອບເຂດ. ພະນັກງານຄວບຄຸມຄວາມສ່ຽງແມ່ນຮັບຜິດຊອບໃນການຕັດສິນໃຈ ແລະ ຄວບຄຸມຄວາມສ່ຽງ ແລະ ລາຍງານໃຫ້ສະພາອຳນວຍການ.

24. ຄວາມສ່ຽງທາງດ້ານເງິນຕາ

ຄວາມສ່ຽງທາງດ້ານເງິນຕາແມ່ນຄວາມສ່ຽງໂດຍກົງຕໍ່ບໍລິສັດເນື່ອງຈາກການປ່ຽນແປງອັດຕາແລກປ່ຽນເງິນຕາຕ່າງປະເທດທີ່ມີຜົນກະທົບຕໍ່ການແລກປ່ຽນເງິນຕາຕ່າງປະເທດຂອງບໍລິສັດ. ອີງໃສ່ລະບຽບການປະເມີນຄວາມສ່ຽງພາຍໃນແລະລະບຽບການຂອງ ທຫລ, ທາງບໍລິສັດໄດ້ກຳໜົດຂອບເຂດຂອງແຕ່ລະສະກຸນເງິນ ພະນັກງານມີໜ້າທີ່ຕິດຕາມໃນແຕ່ລະມື້ເພື່ອຮັບປະກັນວ່າສະຖານະພາບຖືກຮັກສາໄວ້ພາຍໃນຂອບເຂດທີ່ກຳນົດໄວ້. ການແບ່ງປັນຊັບສິນ ແລະ ຫນີ້ສິນທີ່ໄດ້ຖືກປ່ຽນເປັນ ກີບ ນະວັນທີ 31 ທັນວາ 2020 ມີດັ່ງນີ້:

	ກີບ *ທຽບເທົ່າກີບ*	*ໂດລາ* *ທຽບເທົ່າກີບ*	*ບາດ* *ທຽບເທົ່າກີບ*	*ເຢນ* *ທຽບເທົ່າກີບ*	*ລວມ* *ທຽບເທົ່າກີບ*
ຊັບສິນ					
ເງິນສົດ ແລະ ທຽບເທົ່າເງິນສົດ	9,209,835,739	80,739,521,962	2,951,172,389	-	92,900,530,090
ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ	1,968,900,000	-	-	-	1,968,900,000
ໜີ້ຕ້ອງຮັບສັນຍາເຊົ່າຊື້ (*)	17,572,356,110	611,330,013,731	30,934,319,218	-	659,836,689,059
ເງິນກູ້ຢືມກັບພາກສ່ວນທີ່ກ່ຽວຂ້ອງ	5,233,900,000	-	-	-	5,233,900,000
ຊັບສິນອື່ນໆ	11,607,989,749	-	-	-	11,607,989,747
ລວມຊັບສິນ	**45,592,981,598**	**692,069,535,693**	**33,885,491,607**	**-**	**771,548,008,896**
ໜີ້ສິນ	-	114,578,982,710	-	-	114,578,982,710
ເງິນກູ້ຢືມໄລຍະຍາວ	-	-	-	-	-
ໜີ້ຕ້ອງສົ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງ	4,746,003,449	-	-	-	4,746,003,449
ໜີ້ສິນອື່ນໆ	**4,746,003,449**	**114,578,982,710**	**-**	**-**	**119,324,986,159**
ລວມໜີ້ສິນ	**40,846,978,149**	**577,490,552,983**	**33,885,491,607**	**-**	**652,223,022,739**
ຄວາມສ່ຽງສຸດທິ	-	114,578,982,710	-	-	114,578,982,710

(*): ບໍ່ລວມເງິນແຮສຳລັບການຂາດທຶນຈາກຄ່າເສື່ອມໜີ້ເສຍ

ຕັ້ງສົມມຸດຖານວ່າຄວາມແຕກຕ່າງອື່ນໆແມ່ນບໍ່ປ່ຽນແປງ, ຕາຕະລາງຂ້າງລຸ່ມນີ້ສະແດງໃຫ້ເຫັນຄວາມອ່ອນໄຫວຂອງກຳໄລກ່ອນທີ່ອາກອນຂອງບໍລິສັດໄດ້ມີການປ່ຽນແປງທີ່ເກີດຂຶ້ນໃນລະດັບທີ່ເໝາະສົມຂອງອັດຕາແລກປ່ຽນເງິນຕາຕ່າງປະເທດ. ດັ່ງນັ້ນ, ຄວາມສ່ຽງທີ່ເກີດຈາກການປ່ຽນແປງອັດຕາແລກປ່ຽນເງິນຕາຕ່າງປະເທດຂອງບໍລິສັດແມ່ນບໍ່ຈຳເປັນຕ້ອງພິຈາລະນາ.

	ອັດຕາແລກປ່ຽນເພີ່ມຂຶ້ນ 1.5%	*ອັດຕາແລກປ່ຽນຫຼຸດລົງ 1.5%*
ໂດລາ	8,662,358,295	(8,662,358,295)
ບາດ	508,282,374	(508,282,374)
ລວມ	**9,170,640,669**	**(9,170,640,669)**

25. ຄວາມສ່ຽງທາງດ້ານອັດຕາດອກເບ້ຍ

ຄວາມສ່ຽງດ້ານອັດຕາດອກເບ້ຍເກີດຂຶ້ນຈາກການປ່ຽນແປງອັດຕາດອກເບ້ຍເຊິ່ງຈະມີຜົນຕໍ່ລາຍໄດ້ໃນອະນາຄົດ ຫຼື ມູນຄ່າຍຸຕິທຳຂອງເຄື່ອງມືທາງການເງິນ. ບໍລິສັດໄດ້ຮັບຄວາມສ່ຽງຈາກອັດຕາດອກເບ້ຍຍ້ອນວ່າໄລ່ເວລາການຄິດໄລ່ອັດຕາດອກເບ້ຍຂອງມູນຄ່າຊັບສິນແລະຫນີ້ສິນບໍ່ກົງກັນ. ບໍລິສັດຈັດການຄວາມສ່ຽງນີ້ໂດຍຄິດໄລ່ໄລຍະເວລາຂອງສິນຊັບແລະຫນີ້ສິນໃຫ້ກົງກັນໂດຍອີ່ງໃສ່ຍຸດທະສາດການຄຸ້ມຄອງຄວາມສ່ຽງ. ຕາຕະລາງຂ້າງລຸ່ມປະເມີນຄວາມສ່ຽງອັດຕາດອກເບ້ຍລະຫວ່າງສິນຊັບທາງດ້ານການເງິນ ແລະ ຫນີ້ສິນທາງດ້ານການເງິນຂອງບໍລິສັດ. ບໍລິສັດນຳສະເໜີຊັບສິນແລະຫນີ້ສິນຕາມມູນຄ່າໜ້າບັດ ແລະ ຈັດປະເພດໂດຍອັນທີປ່ຽນແປງຂອງອັດຕາດອກເບ້ຍ ຫຼື ມື້ຄົບກຳນົດທີ່ໃກ້ຄຽງທີ່ສຸດ:

	ຕາຕະລາງຕາມໄລຍະເວລາ						
	ລວມ	*ຕ່ຳກວ່າ 3 ເດືອນ*	*ຈາກ 3 ຫາ 12 ເດືອນ*	*ຈາກ 1 ຫາ 5 ປີ*	*ຫຼາຍກວ່າ 5 ປີ*	*ເງິນກູ້ທີ່ບໍ່ເກີດດອກອອກຜົນ ທີ່ເກີນກຳນົດກວ່າ 90 ວັນ*	*ບໍ່ມີດອກເບ້ຍ*
	ກີບ	*ກີບ*	*ກີບ*	*ກີບ*	*ກີບ*	*ກີບ*	*ກີບ*
ຊັບສິນ							
ເງິນສົດ ແລະ ທຽບເທົ່າເງິນສົດ	92,900,530,090	-	-	-	-	-	92,900,530,090
ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ	1,968,900,000	-	-	-	-	-	1,968,900,000
ໜີ້ຕ້ອງຮັບສັນຍາເຊົ່າຊື້ (*)	659,836,689,059	85,183,012,394	37,076,927,727	373,475,840,183	-	164,100,908,755	-
ເງິນກູ້ຢືມກັບພາກສ່ວນທີ່ກ່ຽວຂ້ອງ	5,233,900,000	-	5,233,900,000	-	-	-	-
ຊັບສິນອື່ນໆ	11,607,989,747	-	-	-	-	-	11,607,989,747
ຊັບສິນລວມ	**771,548,008,896**	**85,183,012,394**	**42,310,827,727**	**373,475,840,183**	**-**	**164,100,908,755**	**106,477,419,837**
ໜີ້ສິນ	114,578,982,710	2,287,343,343	7,099,531,882	105,192,107,485	-	-	-
ເງິນກູ້ຢືມໄລຍະຍາວ	-	-	-	-	-	-	-
ໜີ້ຕ້ອງສົ່ງພາກສ່ວນທີ່ກ່ຽວຂ້ອງ	4,746,003,449	-	-	-	-	-	4,746,003,449
ໜີ້ສິນອື່ນໆ	**119,324,986,159**	**2,287,343,343**	**7,099,531,882**	**105,192,107,485**	**-**	**-**	**4,746,003,449**
ໜີ້ສິນລວມ	**652,223,022,737**	**82,895,669,051**	**35,211,295,845**	**268,283,732,698**	**-**	**164,100,908,755**	**101,731,416,388**
ໄລຍະຫ່າງຄວາມອ່ອນໄຫວຂອງດອກເບ້ຍສຸດທິ	114,578,982,710	2,287,343,343	7,099,531,882	105,192,107,485	-	-	-

(*): ບໍ່ລວມເງິນແຮສຳລັບການຂາດທຶນຈາກຄ່າເສື່ອມໜີ້ເສຍ

ຕັ້ງຂໍ້ສົມມຸດຖານວ່າຕົວແປອື່ນໆບໍ່ມີການປ່ຽນແປງ, ການປ່ຽນແປງອັດຕາດອກເບ້ຍມະວັນທີ 31 ທັນວາ 2019 ທີ່ມີຜົນກະທົບຕໍ່ກຳໄລກ່ອນອາກອນຕະຫຼອດໄລຍະ 12 ເດືອນຕໍ່ໜ້າຂອງບໍລິສັດຕາມອັນທີລາຍງານດັ່ງຕໍ່ໄປນີ້:

ເພີ່ມຂຶ້ນ/(ຫຼຸດລົງ) ພື້ນຖານຄະແນນ	*ຄວາມອ່ອນໄຫວຂອງກຳໄລກ່ອນອາກອນ*
+ 100 bps	6,598,366,891
- 100 bps	(6,598,366,891)

26. ຄວາມສ່ຽງສະພາບຄ່ອງ

ຄວາມສ່ຽງດ້ານສະພາບຄ່ອງໝາຍເຖິງຄວາມສ່ຽງທີ່ບໍລິສັດບໍ່ສາມາດປະຕິບັດຕາມໜ້າທີ່ໃນການຈ່າຍເງິນເມື່ອຮອດເວລາຊຳລະໃນກໍລະນີປົກກະຕິແລະກໍລະນີພິເສດ. ຕາຕະລາງລຸ່ມນີ້ສະຫຼຸບກະແສເງິນຊັບສິນແລະໜີ້ສິນທາງການເງິນຂອງບໍລິສັດໃນມື້ລາຍງານ:

	ລວມ ກີບ	*ຕ່ຳກວ່າ 3 ເດືອນ ກີບ*	*ຈາກ 3 ຫາ 12 ເດືອນ ກີບ*	*ຈາກ 1 ຫາ 5 ປີ ກີບ*	*ຫຼາຍກວ່າ 5 ປີ ກີບ*	*ເງິນກູ້ທີ່ບໍ່ເກີດດອກອອກ ເມື່ອທີ່ເກີນກຳນົດ ກວ່າ 90 ວັນ ກີບ*
ຊັບສິນ						
ເງິນສົດ ແລະ ທຽບເທົ່າເງິນສົດ	92,900,530,090	92,900,530,090	-	-	-	-
ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ	1,968,900,000	1,968,900,000	-	-	-	-
ໜີ້ຕ້ອງຮັບເຊົ່າຊື້ (*)	659,836,689,059	85,183,012,394	37,076,927,727	373,475,840,183	-	164,100,908,755
ເງິນກູ້ຢືມກັບພາກສ່ວນທີ່ກ່ຽວຂ້ອງ	5,233,900,000	-	5,233,900,000	-	-	-
ຊັບສິນອື່ນໆ	11,607,989,747	11,315,523,583	-	292,466,164	-	-
ຊັບສິນລວມ	**771,548,008,896**	**191,367,966,067**	**42,310,827,727**	**373,768,306,347**	**-**	**164,100,908,755**
ໜີ້ສິນ	132,422,136,493	2,287,343,343	7,099,531,882	123,035,261,268	-	-
ເງິນກູ້ຢືມໄລຍະຍາວ	4,746,003,449	4,746,003,447	-	-	-	-
ໜີ້ຕ້ອງສົ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງ	**137,168,139,942**	**7,033,346,790**	**7,099,531,882**	**123,035,261,268**	**-**	**-**
ໜີ້ສິນອື່ນໆ	**634,379,868,954**	**184,334,619,277**	**35,211,295,845**	**250,733,045,079**	**-**	**164,100,908,755**
ໜີ້ສິນລວມ	132,422,136,493	2,287,343,343	7,099,531,882	123,035,261,268	-	-
ໄລຍະຫ່າງຄວາມອ່ອນໄຫວຂອງດອກເບ້ຍສຸດທິ	4,746,003,449	4,746,003,447	-	-	-	-

(*): ບໍ່ລວມເງິນແຮສຳລັບການຂາດທຶນຈາກຄ່າເສື່ອມໜີ້ເສຍ

ບໍລິສັດໄດ້ປະເມີນຄວາມສ່ຽງທີ່ມີຕໍ່ການຊຳລະໜີ້ແລ້ວສະຫຼຸບໄດ້ວ່າຄວາມສ່ຽງຍັງຢູ່ໃນລະດັບຕ່ຳ. ບໍລິສັດມີຄວາມສາມາດເຂົ້າເຖິງແຫລ່ງທຶນທີ່ລາກຫຼາຍ ແລະ ສາມາດຊຳລະຄືນຕາມກຳໜົດ 12 ເດືອນ.

27. ຄວາມສ່ຽງທາງດ້ານສິນເຊື່ອ

ຄວາມສ່ຽງດ້ານສິນເຊື່ອແມ່ນຄວາມສ່ຽງທີ່ອາດເຮັດໃຫ້ບໍລິສັດຂາດທຶນ ເນື່ອງມາຈາກລູກຄ້າ ແລະ ຄູ່ສັນຍາບໍ່ສາມາດປະຕິບັດຕາມພາລະຜູກພັນສັນຍາ. ບໍລິສັດມີການຈັດການ ແລະ ຄວບຄຸມຄວາມສ່ຽງທາງສິນເຊື່ອ ໂດຍການກຳນົດຂໍ້ຈຳກັດຂອງຄວາມສ່ຽງທີ່ຍອມຮັບໄດ້ຂອງຄູ່ສັນຍາ ແລະ ດ້ວຍການຕິດຕາມຄວາມສ່ຽງທີ່ກ່ຽວຂ້ອງກັບຂໍ້ຈຳກັດດັ່ງກ່າວ.

ຄວາມສ່ຽງດ້ານສິນເຊື່ອແມ່ນຄວາມສ່ຽງທີ່ບໍລິສັດເກີດຄວາມສູນເສຍເນື່ອງຈາກລູກຄ້າ ຫຼື ຄູ່ສັນຍາບໍ່ສາມາດປະຕິບັດຕາມພັນທະຜູກພັນຕາມສັນຍາ. ບໍລິສັດບໍລິຫານ ແລະ ຄວບຄຸມຄວາມສ່ຽງດ້ານສິນເຊື່ອໂດຍການກຳນົດຂອບເຂດຂອງປະລິມານຄວາມສ່ຽງທີ່ສາມາດຮັບໄດ້ສຳລັບຄູ່ສັນຍາທີ່ເປັນບຸກຄົນ ແລະ ສຳລັບການຮວບຮວມທາງພູມສາດ ແລະ ອຸດສາຫະກຳ ແລະ ໂດຍການກວດສອບຍອດທຸລະກຳທີ່ກ່ຽວຂ້ອງກັບຂອບເຂດນັ້ນ.

ບໍລິສັດໄດ້ສ້າງຕັ້ງຂັ້ນຕອນການກວດກາຄຸນະພາບສິນເຊື່ອເພື່ອລະບຸການປ່ຽນແປງທີ່ເປັນໄປໄດ້ໃນຄວາມໜ້າເຊື່ອຖືຂອງຄູ່ສັນຍາ. ຂອບເຂດຈຳກັດຄູ່ສັນຍາຖືກກຳນົດຂຶ້ນໂດຍຜ່ານການນຳໃຊ້ລະບົບການຈັດປະເພດຄວາມສ່ຽງດ້ານສິນເຊື່ອເຊິ່ງລະບຸການຈັດອັນດັບຄວາມສ່ຽງຂອງແຕ່ລະຄູ່ສັນຍາ. ການຈັດອັນດັບຄວາມສ່ຽງແມ່ນມີການແກ້ໄຂແຕ່ລະເດືອນ. ຂັ້ນຕອນການກວດກາຄຸນະພາບສິນເຊື່ອມີວັດຖຸປະສົງເພື່ອໃຫ້ບໍລິສັດສາມາດປະເມີນການສູນເສຍທີ່ອາດຈະເກີດຂຶ້ນທີ່ເປັນຜົນມາຈາກຄວາມສ່ຽງທີ່ຈະເກີດຂຶ້ນ ແລະ ຕ້ອງດຳເນີນການແກ້ໄຂ.

27.1 *ການປະເມີນການເສື່ອມມູນຄ່າ*

ເອກະສານອ້າງອີງຂ້າງລຸ່ມນີ້ສະແດງໃຫ້ເຫັນບ່ອນທີ່ການປະເມີນຄວາມບົກຜ່ອງແລະວິທີການວັດແທກຂອງທະນາຄານໄດ້ຖືກກຳນົດໄວ້ໃນບົດລາຍງານນີ້. ມັນຄວນຈະອ່ານພ້ອມກັບ*ບົດສະຫຼຸບຂອງນະໂຍບາຍການບັນຊີທີ່ສຳຄັນ.*

ເພື່ອນຳໃຊ້ວິທີການຄາດຄະເນໜີ້ເສຍສຳລັບການຮັບຮູ້ໜີ້ເສຍຂອງຄ່າເສື່ອມຊັບສິນທາງການເງິນສຳລັບເອກະສານລາຍງານການເງິນ, ບໍລິສັດໄດ້ຜັດທະນາວິທີການດ້ວຍຕົນເອງໃນການຄິດໄລ່ໜີ້ເສຍທີ່ຄາດວ່າຈະເກີດຂຶ້ນ. ວິທີການດັ່ງກ່າວເປັນການລວບລວມຂໍ້ມູນທີ່ຜ່ານມານັບຕັ້ງແຕ່ບໍລິສັດສ້າງຕັ້ງ, ບັນດາເງື່ອນໄຂປັດຈຸບັນ ແລະ ການຄາດຄະເນຂອງເງື່ອນໄຂສະພາເສດຖະກິດໃນອະນາຄົດ. ອີງຕາມການທົດສອບ, ການນຳໃຊ້ຂໍ້ມູນທີ່ຜ່ານມາສຳລັບວິທີການດັ່ງກ່າວຄວນມີການຕິດຕາມພາຍໃນໄລຍະ 5 ຫາ 7 ປີເພື່ອໃຫ້ແນ່ໃຈວ່າ ກະວິເຄາະສະຖິຕິດັ່ງກ່າວສາມາດນຳໃຊ້ໄດ້. ເຖິງຢ່າງໃດກໍຕາມ IFRS 9 ເປັນພຽງແຕ່ຂໍ້ກຳນົດໃຫ້ ECL ໃນການວັດແທກວິທີການທີ່ມີຜົນກະທົບຢ່າງສົມເຫດສົມຜົນ ແລະ ຂໍ້ມູນທີ່ສະໜອງໃຫ້ບໍ່ມີມູນຄ່າ ຫຼື ຜົນກະທົບຕໍ່ບົດລາຍງານ, ບໍລິສັດໄດ້ນຳໃຊ້ຂໍ້ມູນເກົ່າທີ່ຜ່ານມາ ແລະ ຈະປັບປຸງວິທີການດັ່ງກ່າວໃນອະນາຄົດ.

ຄວາມໝາຍຂອງການຜິດນັດຊຳລະ

ບໍລິສັດພິຈາລະນາເຄື່ອງມືການເງິນແບບທີ່ຜິດນັດຊຳລະ ແລະ ຫັນເປັນຂັ້ນທີ 3 (ຄ່າເສື່ອມສິນເຊື່ອ) ສຳລັບການຄິດໄລ່ ECL ໃນທຸກໆກໍລະນີ ເມື່ອຜູ້ກູ້ຢືມກາຍນັດຊຳລະ 90 ວັນຕາມສັນຍາ.

27. ຄວາມສ່ຽງທາງດ້ານສິນເຊື່ອ (ຕໍ່)

27.1 *ການປະເມີນການເສື່ອມມູນຄ່າ* (ຕໍ່)

ຂັ້ນຕອນການຄາດຄະເນຄວາມເປັນໄປໄດ້ການຜິດນັດຊຳລະ

ບໍລິສັດໄດ້ນຳໃຊ້ເງື່ອນໄຂຂອງມື້ຜິດນັດຊຳລະ ເພື່ອຈັດອັນດັບລູກຄ້າມນການກະກຽມແຫຼ່ງຂໍ້ມູນສຳລັບການຄາດຄະເນ PD. ອີງຕາຂໍ້ມູນທີ່ມີໃນປີທີ່ມີການດຳເນີນງານ, ບໍລິສັດໄດ້ຄາດຄະເນວ່າ PD ສຳລັບແຕ່ລະກຸ່ມຂອງລູກຄ້າ, ຫຼັງຈາກນັ້ນ ຈຶ່ງ ລວບລວມຂໍ້ມູນທີ່ຄາດວ່າຈະເກີດຂຶ້ນລ່ວງໜ້າ ເພື່ອນຳໃຊ້ໃນ PDs ສຳລັບການຄິດໄລ່ພາຍໃຕ້ຮູບແບບ IFRS 9 ECL.

ຜົນລັບຂອງອັດຕາ PDs ທີ່ບໍລິສັດນຳໃຊ້ສຳລັບສັນຍາເຊົ່າຊື້ມີດັ່ງລຸ່ມນີ້:

ກຸ່ມ (ຈຳນວນມື້ຜິດນັດຊຳລະ ("DPD"))	*ຂັ້ນທີ*	*12-ເດືອນ PD ຫວ່າງ*
0 DPD	ຂັ້ນທີ 1	1.84% ຫາ 10.44%
1 - 89 DPD	ຂັ້ນທີ 2	16.12% ຫາ 49.42%
90+ DPD	ຂັ້ນທີ 3	100%

ຄວາມສ່ຽງຂອງການຜິດນັດຊຳລະ

ຍອດໜີ້ເມື່ອຜິດນັດຊຳລະ (EAD) ແມ່ນສະແດງໃຫ້ເຫັນເຖິງມູນຄ່າຂອງເຄື່ອງມືທາງການເງິນທີ່ຂຶ້ນຢູ່ກັບການຄຳນວນຄ່າ ເສື່ອມມູນຄ່າ.

ເພື່ອທີ່ຈະຄຳນວນ EAD ສຳລັບເງິນກູ້ຂັ້ນທີ 1, ບໍລິສັດປະເມີນເຫດການການຜິດນັດຊຳລະທີ່ເປັນໄປໄດ້ໃນ 12 ເດືອນສຳລັບ ການຄິດໄລ່ ECL 12 ເດືອນ. ເຖິງຢ່າງໃດກໍຕາມ, ຖ້າຫາກວ່າ ເງິນກູ້ ຂັ້ນທີ 1 ຖືກຄາດການໄວ້ວ່າຈະຜິດນັດຊຳລະໃນ 12 ເດືອນຈາກວັນທີໃບລາຍງານຖານະການເງິນ ແລະ ຍັງຖືກຄາດການວ່າຫຼັງຈາກການຮັກສາຢ່ຽວຢາ ແລ້ວຈະຍັງຜິດນັດຊຳລະອີກ ພາຍຫຼັງ, ສະນັ້ນເຫດການການຜິດນັດຊຳລະທັງໝົດທີ່ເຊື່ອມຕໍ່ກັນແມ່ນຖືກນຳມາພິຈາລະນາ. ສຳລັບຊັບສິນທາງດ້ານການເງິນ ໃນ ຂັ້ນທີ 2, ຂັ້ນທີ 3, ຍອດໜີ້ເມື່ອຜິດນັດຊຳລະແມ່ນຖືກນຳມາພິຈາລະນາສຳລັບເຫດການທີ່ເກີດຂຶ້ນຕະຫຼອດອາຍຸຂອງ ເຄື່ອງມື.

ຄວາມເສຍຫາຍທີ່ເກີດຂຶ້ນເມື່ອຜິດນັດຊຳລະ

ບໍລິສັດໄດ້ລວບລວມຂໍ້ມູນໜີ້ເສຍທີ່ເກີດຂຶ້ນຜ່ານມາ ໂດຍອີງຕາມປະເພດຂອງຜະລິດຕະພັນໃນການກຳນົດອັດຕາ LGD ສຳ ລັບແຕ່ລະກຸ່ມຂອງເຄື່ອງມືທາງການເງິນ.

ການເພີ່ມຂຶ້ນອັນສຳຄັນໃນຄວາມສ່ຽງສິນເຊື່ອ

ບໍລິສັດຕິດຕາມຢ່າງຕໍ່ເນື່ອງໃນຊັບສິນທັງໝົດທີ່ເປັນ ECLs. ເພື່ອກຳນົດວ່າເຄື່ອງມື ຫຼື ກຸ່ມຂອງເຄື່ອງມືທີ່ຕິດຕາມ 12 ເດືອນ ຫຼື ຕະຫຼອດອາຍຸເຄື່ອງມື, ບໍລິສັດປະເມີນວ່າ ມີຄວາມສຳຄັນທີ່ເພີ່ມຂຶ້ນທາງດ້ານຄວາມສ່ຽງສິນເຊື່ອຫຼືບໍ່ ຕັ້ງແຕ່ການຮັບຮູ້ເບື້ອງ ຕົ້ນ. ບໍລິສັດພິຈາລະນາວ່າ ຖ້າຫາກການຊຳລະຕາມສັນຍາກາຍຫຼາຍກວ່າ 1 ມື້, ຈະຖືເປັນການເພີ່ມຂຶ້ນອັນສຳຄັນໃນຄວາມສ່ຽງ ດ້ານ ນັບຕັ້ງແຕ່ການຮັບຮູ້ຄັ້ງທຳອິດ.

28. ການບໍລິຫານທຶນ

ທຶນຂອງບໍລິສັດ ລວມເຖິງການປະກອບທຶນ.

ຈຸດປະສົງຫຼັກຂອງການບໍລິຫານທຶນຂອງບໍລິສັດແມ່ນເພື່ອໃຫ້ແນ່ໃຈວ່າ ທຶນໄດ້ຖືກນຳໃຊ້ເຂົ້າໃນທຸລະກິດຂອງຕົນຢ່າງມີປະສິດທິພາບ

ສຳລັບຈຸດປະສົງຂອງການບໍລິຫານທຶນຂອງບໍລິສັດ, ທຶນທີ່ອອກ, ຮຸ້ນບຸລິມະສິດແປສະພາບ, ສ່ວນເກີນມູນຄ່າຮຸ້ນ ແລະ ທຶນສຳຮອງອື່ນໆທີ່ມາຈາກຜູ້ຖືຮຸ້ນຂອງບໍລິສັດແມ່

ຈຸດປະສົງຂອງການບໍລິຫານທຶນຂອງບໍລິສັດແມ່ນການເພີ່ມມູນຄ່າຂອງຜູ້ຖືຮຸ້ນໃຫ້ສູງສຸດ.

ບໍລິສັດບໍລິຫານໂຄງສ້າງຂອງທຶນຕົນເອງ ແລະ ດັດປັບຕາມການປ່ຽນແປງຂອງສະພາບເສດຖະກິດ ແລະ ຂໍ້ກຳນົດຂອງເງື່ອນໄຂທາງການເງິນ. ເພື່ອຮັກສາ ຫຼື ດັດປັບໂຄງສ້າງຂອງທຶນ, ບໍລິສັດອາດຈະດັດປັບການຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນ, ສົ່ງຄືນທຶນໃຫ້ຜູ້ຖືຮຸ້ນ ຫຼື ອອກຮຸ້ນໃໝ່.

	31 ທັນວາ 2020 *ກີບ*	*31 ທັນວາ 2019* *ກີບ*
ລວມໜີ້ສິນທັງໝົດ	207,495,172,687	592,038,806,497
ຫັກ: ເງິນສົດ	(92,900,530,090)	(336,866,272,315)
ໜີ້ສິນສຸດທິ	114,594,642,597	255,172,534,182
ທຶນ	523,985,122,167	393,652,200,247
ທຶນບວກໜີ້ສິນສຸດທິ	638,579,764,764	648,824,734,429
ອັດຕາສ່ວນໜີ້ສິນຕໍ່ທຶນ	18%	39%

29. ມູນຄ່າຍຸຕິທຳຂອງຊັບສິນ ແລະ ໜີ້ສິນທາງການເງິນ

ມູນຄ່າຍຸຕິທຳໝາຍເຖິງ ມູນຄ່າຊັບສິນທີ່ສາມາດແລກປ່ຽນເປັນເງິນ ຫຼື ການຊຳລະໜີ້ສິນບົນພື້ນຖານລາຍການເຄື່ອນໄຫວ ໃນເງື່ອນໄຂຕົກລົງກັນ. ເນື່ອງຈາກວ່າບໍ່ມີລາຄາສົມທຽບຂອງຕະຫຼາດ, ຊັບສິນ ແລະ ໜີ້ສິນ ຂອງບໍລິສັດຈຶ່ງບໍ່ສາມາດປະເມີນລາຄາຕາມຕະຫຼາດໄດ້. ດັ່ງນັ້ນ, ມູນຄ່າຍຸຕິທຳຈຶ່ງຖືກປະເມີນແບບສົມມຸດຕິຖານອີງຕາມລັກສະນະຂອງຊັບສິນ ແລະ ໜີ້ສິນ. ຕາມຄຳເຫັນຂອງຄະນະບໍລິຫານ, ມູນຄ່າຕາມບັນຊີຂອງ ຊັບສິນ ແລະ ໜີ້ສິນທາງການເງິນທີ່ຢູ່ໃນໃບລາຍງານຖານະການເງິນ ແມ່ນຖືກຄາດຄະເນຢ່າງສົມເຫດສົມຜົນກັບມູນຄ່າຍຸຕິທຳ. ໃນການປະເມີນດັ່ງກ່າວ, ຄະນະບໍລິຫານຂອງບໍລິສັດ ສົມມຸດຖານວ່າ ໜີ້ຕ້ອງຮັບເຊົ່າຊື້ສ່ວນໃຫຍ່ຖືຈົນຄົບກຳນົດ ດ້ວຍມູນຄ່າຍຸຕິທຳເທົ່າກັບມູນຄ່າຕາມບັນຊີທີ່ຖືກດັດແກ້ເງິນແຮຈາກຄ່າເສື່ອມໜີ້ເສຍ.

ບໍລິສັດໄດ້ຈັດລຳດັບດັ່ງລຸ່ມນີ້ໃນການກຳໜົດແລະເປີດເຜີຍມູນຄ່າຍຸຕິທຳຂອງເຄື່ອງມືທາງດ້ານການເງິນໂດຍນຳໃຊ້ເທັກນິກການປະມູນຄ່າ:

- ລະດັບ 1: ລາຄາທີ່ສະເໜີ (ລາຄາທີ່ບໍ່ທັນດັດແກ້) ທີ່ໃຊ້ສຳລັບຊັບສິນ ແລະ ໜີ້ສິນອັນດຽວກັນໃນຕະຫຼາດ ໃນຕະຫຼາດເພື່ອຈຳແນກຊັບສິນ ຫຼື ໜີ້ສິນ.
- ລະດັບ 2: ວິທີອື່ນໆທີ່ມີຜົນກະທົບຕໍ່ມູນຄ່າຍຸຕິທຳໂດຍທາງຕົງແລະທາງອ້ອມ
- ລະດັບ 3: ວິທີການທີ່ນຳໃຊ້ທີ່ມີຜົນກະທົບທີ່ສຳຄັນຕໍ່ມູນຄ່າຍຸຕິທຳໂດຍບໍ່ອີ່ງໃສ່ຂໍ້ມູນທາງຕະຫຼາດ

29. ມູນຄ່າຍຸຕິທຳຂອງຊັບສິນ ແລະ ໜີ້ສິນທາງການເງິນ (ຕໍ່)

ຊັບສິນ ແລະ ໜີ້ສິນທາງການເງິນທັງໝົດຖືກຄິດໄລ່ ປະເມີນມູນຄ່າຍຸຕິທຳໂດຍໃຊ້ເທັກນິກການປະເມີນຄ່າລະດັບ 3 ໃນທັ້ງສອງປີບໍ່ມີການໂອນເງິນລະຫວ່າງມູນຄ່າຍຸຕິທຳໃນຊ່ວງເວລາລາຍງານດັ່ງລຸ່ມນີ້:

		ມູນຄ່າຍຸຕິທຳ			
	ມູນຄ່າຖືຄອງ	*ລະດັບ 1*	*ລະດັບ 2*	*ລະດັບ 3*	*ລວມ*
ຊັບສິນທາງການເງິນ					
ເງິນສົດ ແລະ ທຽບເທົ່າເງິນສົດ	92,900,530,090	92,900,530,090	-	-	92,900,530,090
ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ	1,968,900,000	1,968,900,000	-	-	1,968,900,000
ໜີ້ຕ້ອງຮັບເຊົ່າຊື້ (*)	617,540,860,628	-	-	617,540,860,628	617,540,860,628
	712,410,290,718	**94,869,430,090**	**-**	**617,540,860,628**	**712,410,290,718**
ໜີ້ສິນທາງການເງິນ					
ເງິນກູ້ໄລຍະຍາວ	114,578,982,710	-	-	114,578,982,710	114,578,982,710
	114,578,982,710	**-**	**-**	**114,578,982,710**	**114,578,982,710**

(*) ລວມເງິນແຮສຳລັບການຂາດທຶນຈາກຄ່າເສື່ອມໜີ້ເສຍ

ບໍ່ມີການໂອນຍ້າຍລະດັບມູນຄ່າຍຸຕິທຳໃນໄລຍະເວລາອອກລາຍງານ.

30. ອັດຕາແລກປ່ຽນສະກຸນເງິນຕາຕ່າງປະເທດ ທີ່ນຳໃຊ້ຕໍ່ກັບເງິນກີບລາວໃນມື້ລາຍງານ

	31 ທັນວາ 2020	*31 ທັນວາ 2019*
	ກີບ	*ກີບ*
ໂດລາ ສະຫະລັດ	9,280	8,868
ບາດ ໄທ	330.44	298.59

31. ການປັບປຸງເອກະສານລາຍງານການເງິນຂອງປີຜ່ານມາ ເນື່ອງມີການປ່ຽນແປງນະໂຍບາຍທາງການບັນຊີ

ລາຍການ	*ມູນຄ່າກ່ອນການປັບປຸງ*	*ມູນຄ່າທີ່ປັບປຸງ*	*ມູນຄ່າຫຼັງການປັບປຸງ*
	ກີບ	*ກີບ*	*ກີບ*
ໃນລາຍງານຖານະການເງິນ ນະວັນທີ 31 ທັນວາ 2019			
ໜີ້ຕ້ອງຮັບສັນຍາເຊົ່າຊື້	327,489,564,398	4,107,797,430	331,597,361,828
ກຳໄລສະສົມ	207,714,553,933	4,107,797,430	211,822,351,363
ໃນລາຍງານຜົນການດຳເນີນງານ ແລະ ໃນລາຍງານຜົນການດຳເນີນງານນອກການທຸລະກິດສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2019			
ລາຍຈ່າຍໜີ້ເສຍ	(37,924,635,025)	4,107,797,430	(33,816,837,595)

ການປັບປຸງດັ່ງກ່າວແມ່ນເນື່ອງມາຈາກການປ່ຽນແປງນະໂຍບາຍການບັນຊີທີ່ກ່ຽວຂ້ອງກັບການນຳໃຊ້ ແບບຈຳລອງ ECL ຂອງຄ່າເສື່ອມຂອງຊັບສິນທາງການເງິນ ດັ່ງທີ່ໄດ້ເປີດເຜີຍໃນບົດອະທິບາຍເລກທີ 4 ແລະ 5.4.

32. ເຫດການພາຍຫລັງວັນທີຂອງການລາຍງານ

ນອກເໜືອຈາກທີ່ເປີດເຜີຍໃນເອກະສານລາຍງານການເງິນ, ບໍ່ມີເຫດການໃດ ເກີດຂຶ້ນພາຍຫຼັງ ວັນທີ 31 ທັນວາ 2020 ທີ່ ຮຽກຮ້ອງໃຫ້ມີການດັດແກ້ ຫຼື ເປີດເຜີຍໃນເອກະສານລາຍງານການເງິນຂອງບໍລິສັດ.

ທ່ານ ນາງ. Risa Yamaguchi
ຜູ້ອຳນວຍການໃຫຍ່

ທ່ານ. Adnan Ghani
ຫົວໜ້າພະແນກບັນຊີ - ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

18 ສິງຫາ 2021